ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງ ໂຍທາທິການ ແລະຂົນສົ່ງ

ເລກທີ: 379 /ຍທຂ.

ນະຄອນຫຼວງວຽງຈັນ, ວັນທີ: 24 ເມສາ 2018

ຮຽນ: ທ່ານ ເລຂາທິການສະພາແຫ່ງຊາດ ທີ່ນັບຖື

ເລື່ອງ: ລາຍງານການຕອບຄຳຖາມສາຍດ່ວນຂອງສະພາແຫ່ງຊາດ ທີ່ປະຊາຊົນໄດ້ໂທເຂົ້າມາໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ່ 4 ຂອງສະພາແຫ່ງຊາດ ຊຸດທີ່ VIII.

- ອີງຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ, ສະບັບເລກທີ 109/ຄລສ.ກສຕສ, ລົງວັນທີ 13 ມີນາ 2018.

ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບການຕອບຄຳສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບສາຍດ່ວນຂອງສະພາແຫ່ງຊາດ ໃນໄລຍະດຳນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VIII ມີລາຍລະອຽດລຸ່ມນີ້:

I. <u>ເຂດ 1 ນະຄອນຫລວງວຽງຈັນ:</u>

1. <u>ປະຊາຊົນບ້ານອຸບມຸງ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ ສະເໜີໃຫ້ລັດຖະບານແກ້ໄຂບັນຫາຄວາມທຸກຍາກຂອງປະຊາຊົນຜູ້ຢູ່ຫ່າງໄກສອກຫຼີກ ໃຫ້ມີຫົນທາງ ແລະການສ້າງຖະໜົນຫົນທາງແມ່ນບໍ່ທັນທົ່ວເຖິງ ບາງໂຄງການໄດ້ເຮັດໄປແລ້ວ ຜູ້ທີ່ມາກວດສອບແມ່ນບໍ່ມີຈັນຍາບັນ ເຫັນແກ່ຜົນປະໂຫຍດສ່ວນຕົວ.</u>

➢ <u>ຕອບ:</u> 1). <u>ຕໍ່ກັບການສະເໜີໃຫ້ລັດຖະບານ ແກ້ໄຂບັນຫາຄວາມທຸກຍາກຂອງປະຊາຊົນຜູ້ຢູ່ຫ່າງໄກສອກຫຼີກ ໃຫ້ມີຫົນທາງ ແລະການສ້າງຖະໜົນຫົນທາງແມ່ນບໍ່ທັນທົ່ວເຖິງນັ້ນ,</u> ກະຊວງ ຍທຂ ຂໍຖືເປັນກຽດລາຍງານວ່າ: ໃນຊຸມປີຜ່ານມາ ຂະແໜງການ ຍທຂ ໄດ້ມີຜົນສຳເລັດໃນການປະຕິບັດໜ້າທີ່ຕາມພາລະບົດບາດຂອງຕົນ ຕາມທິດສ້າງ ບາດກ້າວບຸກທະລຸ 4 ດ້ານ ເປັນຕົ້ນແມ່ນ: ຕາໜ່າງເສັ້ນທາງທັງໝົດໃນທົ່ວປະເທດ ເພີ້ມຂຶ້ນຈາກ 11.500 ກມ ໃນປີ 1976 ມາເປັນ 51.597 ກມ ໃນປີ 2015, ໃນນີ້ ມີທາງປູຢາງທີ່ໄປເຖິງທຸກເທດສະບານແຂວງ, ມີເສັ້ນທາງປູຢາງ ແລະ ເສັ້ນທາງດິນແດງທຽວໄດ້ສອງລະດູເຂົ້າເຖິງ 148 ເມືອງ ໃນທົ່ວປະເທດ. ມາຮອດປີ 2015 ມີຂົວທັງໝົດ 1.764 ແຫ່ງ ລວມຄວາມຍາວ 52.641 ແມັດ, ໃນນັ້ນ ມີຂົວຂ້າມນໍ້າຂອງ ທີ່ສຳເລັດການກໍ່ສ້າງແລ້ວທັງໝົດ 9 ແຫ່ງ ແລະ ພວມກໍ່ສ້າງ 1 ແຫ່ງ.

ອີງຕາມສະຖິຕິຂອງຂະແໜງການ ໂຍທາທິການ ແລະຂົນສົ່ງ ປີ 2016 ຂໍແຈ້ງໃຫ້ຊາບກ່ຽວກັບຄວາມຍາວຂອງເສັ້ນທາງໃນຂອບເຂດທົ່ວປະເທດ ມີລາຍລະອຽດດັ່ງນີ້ : 1). ທາງເບຕົງ ຍາວ 442,9 ກມ, 2). ທາງອັດສະຟານ 908,1 ກມ, 3). ທາງປູຢາງ 9.044,5 ກມ, 4). ທາງປູແຮ່ 22.439,8 ກມ, 5). ທາງດິນທຳມະຊາດ

26.050,4 ກມ. ລວມຄວາມຍາວຂອງທາງທັງໝົດ 58.885,7 ກິໂລແມັດ, ທຽບໃສ ປີ 2015 ເພີ່ມຂຶ້ນ 7.288 ກມ ຫລືປະມານ 14%.

2. <u>ຕໍ່ກັບການສະເໜີວ່າ: ການກໍ່ສ້າງຖະໜົນຫົນທາງບາງໂຄງການໄດ້ເຮັດໄປແລ້ວ ຜູ້ທີ່ມາກວດສອບແມ່ນບໍ່ມີຈັນຍາບັນເຫັນແກ່ຜົນປະໂຫຍດສ່ວນຕົວ ນັ້ນ,</u> ເຫັນວ່າເປັນຄຳຖາມທີ່ມີລັກສະນະລວມໆ ບໍ່ມີຂໍ້ມູນລະອຽດ, ແຕ່ຖ້າຫາກຮູ້ວ່າແມ່ນໂຄງການໃດ, ຕັ້ງຢູ່ສະຖານທີ່ໃດ, ໃຜເປັນຜູ້ຮັບເໝົາ, ຈຶ່ງຈະສາມາດແລກປ່ຽນໃນລາຍລະອຽດໄດ້. ແຕ່ເຖິງວ່າບໍ່ມີຂໍ້ມູນລະອຽດກໍ່ຕາມກະຊວງ ຍທຂ ເຫັນວ່າ: ການສະເໜີຂອງປະຊາຊົນຕໍ່ບັນຫາດັ່ງກ່າວແມ່ນຄວາມເປັນຫວງເປັນໄຍຕໍ່ຜົນປະໂຫຍດລວມຂອງຊາດ, ກະຊວງ ຍທຂ ຈຶ່ງຂໍລາຍງານສະພາບລວມການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາໂຄງການກໍ່ສ້າງໃນໄລຍະຜ່ານມາ ແລະສະເໜີມາດຕະການແກ້ໄຂໃນຕໍ່ໜ້າດັ່ງນີ້:

1) <u>ສະພາບລວມການຈັດຕັ້ງປະຕິບັດຕິດຕາມກວດກາໃນໄລຍະຜ່ານມາ:</u> ໂດຍປົກກະຕິການກ່ຽວກັບການຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງທີ່ນຳໃຊ້ງົບປະມານພາຍໃນ, ທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າເຂົ້າໃນຂະແໜງ ຍທຂ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ, ກົດໝາຍວ່າດ້ວຍການກໍ່ສ້າງ, ດຳລັດນາຍົກລັດຖະມົນຕີສະບັບເລກທີ 03/ນຍ ແລະ ດຳລັດສະບັບເລກທີ 58/ນຍ ວ່າດ້ວຍການຈັດຊື້ຈັດຈ້າງ ຢ່າງເຂັ້ມງວດ. ສຳລັບວຽກງານຕິດຕາມກວດກາການປະຕິບັດວຽກງານຂອງຜູ້ຮັບເໝົາກໍ່ສ້າງແມ່ນບໍລິສັດທີ່ປຶກສາຂອງໂຄງການ ແລະຫົວໜ້າໂຄງການເປັນຜູ້ຕິດ ຕາມກວດກາຕາມລະບຽບການຄຸ້ມຄອງໂຄງການ. ນອກຈາກນັ້ນ ຍັງມີການກວດກາໂຄງການແຕ່ຫົວທີ, ກວດກາປົກກະຕິ ແລະ ການກວດກາສຸກເສີນຕາມລະບຽບກົດໝາຍຂອງການກວດສອບແຫ່ງລັດ ແລະ ອົງການກວດກາລັດຖະບານ.

2) <u>ມາດຕະການແກ້ໄຂໃນຕໍ່ໜ້າ:</u>

- ສ້າງເອກະສານສຶກສາອົບຮົມນຳພາດ້ານການເມືອງແນວຄິດ ແລະລະບຽບການຄຸ້ມຄອງດ້ານວິຊາສະເພາະຂຶ້ນ ຄື:
  - ເອກະສານສຶກສາອົບຮົມການເມືອງແນວຄິດ ຕໍ່ສະມາຊິກພັກ-ພະນັກງານ ຂະແໜງ ຍທຂ ໃນຂອບເຂດທົ່ວປະເທດ ເພື່ອຊີ້ໃຫ້ເຫັນບັນຫາທີ່ເກີດຂຶ້ນ, ສາຍເຫດ ແລະຜົນເສຍຫາຍຕໍ່ເສດຖະກິດຂອງຊາດ ແລະຕໍ່ຄວາມກ້າວໜ້າຂອງບຸກຄົນ. ມາຮອດປະຈຸບັນໄດ້ສຳເລັດ ແລະ ຜ່ານຄຳເຫັນຂອງຄະນະໂຄສະນາອົບຮົມສູນກາງພັກແລ້ວ ກຳລັງປັບປຸງຄືນ;
  - ຮ່າງຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດ ການກວດກາການສຳຫລວດອອກແບບ, ມາດຕະຖານເຕັກນິກບັນດາໜ້າວຽກ, ບໍລິມາດວຽກ ແລະລາຄາຫົວໜ່ວຍ ການກໍ່ສ້າງສ້ອມແປງພື້ນຖານໂຄງລາງດ້ານໂຍທາທິການ ແລະ ຂົນສົ່ງ. ມາຮອດປະຈຸບັນໄດ້ສຳເລັດແລ້ວ ກຽມສະເໜີຜ່ານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ພິຈາລະນາ;
  - ປັບປຸງລາຄາຫົວໜ່ວຍກໍ່ສ້າງຂົວທາງ ຂອງກະຊວງຄືນໃໝ່ ໂດຍສ້າງເປັນລາຄາຕົວຢ່າງ ຢູ່ 3 ພາກຄື: ພາກເໜືອ, ພາກກາງ ແລະພາກໃຕ້ ເພື່ອເປັນນິຕິກຳໃນການກວດກາ ແລະຄຸ້ມຄອງດ້ານມາດຕະຖານເຕັກນິກ ແລະລາຄາຫົວໜ່ວຍ. ມາຮອດປະຈຸບັນໄດ້ສຳເລັດແລ້ວປະມານ 90 ຄາດຄະເນກາງປີ 2018 ຈະສຳເລັດສົມບູນ.
- ຈັດຕັ້ງການຝຶກອົບຮົມດ້ານວິຊາການ ຢູ່ສະຖາບັນຝຶກອົບຮົມຂອງກະຊວງໂຍທາທິການ ແລະ ຂົນສົ່ງໃຫ້ພາກສ່ວນກ່ຽວຂ້ອງເຊັ່ນ: ເຈົ້າຂອງໂຄງການ, ບໍລິສັດທີ່ປຶກສາ, ບໍລິສັດຮັບເໝົາຕ້ອງປະຕິບັດຂັ້ນຕອນດ້ານວິຊາການຕາມພາລະບົດບາດ, ໜ້າທີ່ຂອງຕົນຢ່າງເຂັ້ມງວດ ແລະເປັນເຈົ້າການ, ແນ່ໃສ່

ກໍ່ສ້າງໃຫ້ຮັບປະກັນຄຸນນະພາບ ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ຄວບຄຸມມູນຄ່າກໍ່ສ້າງໃຫ້ຖືກຕາມກັບທີ່ກໍານົດໃນສັນຍາກໍ່ສ້າງ.

- ຈັດຕັ້ງເຜີຍແຜ່ບັນດານິຕິກໍາກ່ຽວກັບການຄຸ້ມຄອງຄຸນນະພາບ ແລະລາຄາຫົວໜ່ວຍການກໍ່ສ້າງ-ສ້ອມແປງດ້ານໂຍທາທິການ ແລະ ຂົນສົ່ງ ໃຫ້ທົ່ວເຖິງ.
- ຈັດຕັ້ງປະຕິບັດດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຊື້-ຈັດຈ້າງໃຫ້ເຂັ້ມງວດ, ໂປ່ງໃສ ແລະ ສາມາດກວດສອບໄດ້.
- ຈັດຕັ້ງການຕິດຕາມກວດກາໂຄງການແຕ່ຫົວທີ. ໂດຍມີການສະຫລຸບຕີລາຄາ, ຖອດຖອນບົດຮຽນເປັນແຕ່ລະໄລຍະ ເພື່ອຊອກວິທີແກ້ໄຂບັນຫາທີ່ເກີດຂຶ້ນໃຫ້ທັນການ. ເວົ້າລວມແລ້ວແມ່ນໄດ້ເອົາໃຈໃສ່ ຕໍ່ການຄຸ້ມຄອງການລົງທຶນຂອງລັດ ຢ່າງມີຈຸດສຸມ, ມີການເລືອກເຟັ້ນ, ຄິດໄລ່ລາຄາ ສົມເຫດສົມຜົນ ບົນພື້ນຖານຈິດໃຈ ປະຢັດມັດທະຍັດ, ມີຄຸນນະພາບ, ໄດ້ມາດຕະຖານ, ນໍາໃຊ້ໄດ້ຍາວນານ ແລະມີປະສິດທິຜົນຢ່າງແທ້ຈິງ.

3. ປະຊາຊົນບ້ານ ໜອງພະຍາ ເມືອງ ໄຊທານີ ນະຄອນຫລວງວຽງຈັນ ສະເໜີໃຫ້ພາກສ່ວນກ່ຽວຂ້ອງຊຸກຍູ້ບໍລິສັດຜູ້ຮັບເໝົາກໍ່ສ້າງເສັ້ນທາງໜອງພະຍາ-ຊໍາເກດ ໃຫ້ເຮັດສໍາເລັດໄວແດ່:

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ໂຄງການດັ່ງກ່າວເລີ່ມລົງມືແຕ່ວັນທີ 13 ກັນຍາ 2016 ມາຮອດປະຈຸບັນສໍາເລັດ 33% ປະຈຸບັນກໍາລັງຮີບຮ້ອນກໍ່ສ້າງ ຄາດຄະເນວ່າເດືອນ ກັນຍາ 2018 ຈະໃຫ້ສໍາເລັດການເທເບຕົງໜ້າທາງ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ຈັດຕັ້ງປະຕິບັດໂຄງການດັ່ງກ່າວຕາມສັນຍາ, ຖືກຕ້ອງຕາມມາດຕະຖານເຕັກນິກ ຮັບປະກັນຄຸນນະພາບ ແລະ ສໍາເລັດຕາມແຜນການ.

4. ປະຊາຊົນບ້ານ ທົ່ງປົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບເສັ້ນທາງແຕ່ບ້ານ ທົ່ງປົ່ງ-ບ້ານສີເກີດ ຍັງບໍ່ໄດ້ຮັບການແກ້ໄຂເທື່ອ, ໄດ້ສະເໜີພາກສ່ວນກ່ຽວຂ້ອງແລ້ວແຕ່ປີ 2014 ປະຈຸບັນເສັ້ນທາງບໍ່ໄດ້ຮັບການແກ້ໄຂ, ສະເໜີຂັ້ນເທິງພິຈາລະນາດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ເສັ້ນທາງເລກທີ 13 ເໜືອ (ແຕ່ບ້ານທົ່ງປົ່ງ-ບ້ານສີເກີດ) ປະຈຸບັນໄດ້ຮັບການສ້ອມແປງເປັນທີ່ຮຽບຮ້ອຍ, ການສັນຈອນໄປມາມີຄວາມສະດວກແລ້ວ.

5. ປະຊາຊົນບ້ານ ສີວິໄລ ເມືອງ ໄຊທານີ ນະຄອນຫຼວງວຽງຈັນ ສະເໜີໃຫ້ລັດຖະບານຊ່ວຍແກ້ໄຂບັນຫາເສັ້ນທາງແຕ່ສີ່ແຍກໂຮງແຮມຄອນປະສິງ ເຖິງ ໂຮງໝໍແມ່ ແລະ ເດັກ ຫຼັງໃໝ່ທີ່ຕັ້ງຢູ່ໜອງພະຍາ ເພາະເຮັດໄດ້ 5 ປີແລ້ວແຕ່ເສັ້ນທາງຍັງບໍ່ມີການສືບຕໍ່ກໍ່ສ້າງຢູ່. ສະນັ້ນ ສະເໜີມາຍັງພາກສ່ວນກ່ຽວຂ້ອງລົງຕິດຕາມ ແລະ ຊຸກຍູ້ຕື່ມ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ເສັ້ນທາງດັ່ງກ່າວຕາມລະຫັດແມ່ນ (T6) ມີລວງຍາວທັງໝົດ 4,53 ກມ ເປັນໂຄງການທີ່ນອນໃນແຜນພັດທະນາເສັ້ນທາງຕາມຜັງເມືອງຂອງນະຄອນຫຼວງວຽງຈັນ ໄດ້ເລີ່ມລົງມືກໍ່ສ້າງແຕ່ວັນທີ 13 ມີນາ 2012 ເຊິ່ງມາຮອດປະຈຸບັນວຽກຈັດຕັ້ງປະຕິບັດສໍາເລັດພຽງແຕ່ 30%? ເທົ່ານັ້ນ ຍ້ອນບໍລິສັດຂາດທຶນໝູນວຽນ. ຜ່ານມາກະຊວງ ຍທຂ ໄດ້ມີໜັງລາຍງານຫາຫ້ອງວ່າການສໍານັກງານນາຍົກລັດຖະມົນຕີແລ້ວ ສະບັບເລກທີ 2051/ຍທຂ, ລົງວັນທີ 16/1/2017 ກ່ຽວກັບການຂໍອະນຸມັດກໍ່ສ້າງເສັ້ນທາງປູຢາງສອງຊັ້ນ ໜ້າທາງກວ້າງ 7 ແມັດ ແຕ່ທາງແຍກຈາກເສັ້ນທາງຫ້ວຍຫົງ ໄປຫາໂຮງໝໍແມ່ ແລະເດັກເກີດໃໝ່ ມີຄວາມຍາວ 2 ກມ ກ່ອນ, ເພື່ອອໍານວຍຄວາມສະດວກໃຫ້ແກ່ພໍ່ແມ່ປະຊາຊົນຜູ້ເຈັບ

ປ່ວຍເດີນທາງເຂົ້າຫາໂຮງໝໍ ແລະເພື່ອຮັກສາອຸປະກອນການແພດທີ່ທັນສະໄໝ ໃຫ້ສາມາດນຳໃຊ້ໄດ້ຍາວນານ ຫລີກເວັ້ນຂີ້ຝຸ່ນຈາກເສັ້ນທາງດັ່ງກ່າວ. ເພື່ອແກ້ໄຂບັນຫາດັ່ງກ່າວ ກະຊວງ ຍທຂ ໄດ້ມອບໃຫ້ກົມຂົວທາງກະຊວງ ຍທຂ ລົງສົມທົບກັບພະແນກ ຍທຂ ນະຄອນຫຼວງວຽງຈັນ ສັງລວມຂໍ້ມູນ ເພື່ອລາຍງານເຈົ້າຄອງນະຄອນຫລວງ ວຽງຈັນເພື່ອຄວາມເປັນເອກະພາບສືບຕໍ່ນໍາສະເໜີລັດຖະບານ ພິຈາລະນາໃຫ້ທິດຊີ້ນໍາເພື່ອເປັນບ່ອນອີງໃນການແກ້ ໄຂຕໍ່ໄປ.

6. <u>ພະນັກງານ ບ້ານ ໜອງແດ່ງເໜືອ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບການຈັດຕັ້ງປະຕິບັດການສ້າງເສັ້ນທາງຄືນໃໝ່ ແຕ່ຕະຫຼາດສີໄຄ ຫາ ບ້ານ ສີເກີດ ເຫັນວ່າປະຈຸບັນ ແມ່ນຫຍຸ້ງຍາກໃນການສັນຈອນໄປມາ. ຈຶ່ງສະເໜີມາຍັງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງແກ້ໄຂດ້ວຍ:</u>

➢ <u>ຕອບ:</u> ປະຈຸບັນເສັ້ນທາງດັ່ງກ່າວນີ້ ໄດ້ຮັບການສ້ອມແປງເປັນທີ່ຮຽບຮ້ອຍ ແລະການສັນຈອນໄປມາມີຄວາມສະດວກສະບາຍແລ້ວ. ສໍາລັບໄລຍະຍາວເສັ້ນທາງແຕ່ຕະຫຼາດສີໄຄ ຫາ ບ້ານສີເກີດ ແມ່ນນອນໃນໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງເລກທີ 13 ເໜືອ ໄລຍະ 2 ທີ່ໄດ້ຮັບທຶນໜັບສະໜູນ(ເງິນກູ້ດອກເບ້ຍຕໍ່າ)ຈາກສາມສະຖາບັນການເງິນສາກົນຄື: ທະນາຄານໂລກ, ທະນາຄານລົງທຶນພື້ນຖານໂຄງລ່າງອາຊີ ແລະກອງທຶນນໍດິກ ເພື່ອການພັດທະນາ ເຊິ່ງຈະໄດ້ເລີ້ມສຶກສາສໍາຫລວດອອກແບບໃນເດືອນ ກໍລະກົດ 2018 ນີ້.

<u>ສໍາລັບໂຄງການໄລະຍະທີ 1:</u> ແມ່ນຕອນທາງແຕ່ ສາມແຍກສີເກີດ (ນະຄອນຫຼວງວຽງຈັນ) ຫາ ໂພນໂຮງ (ແຂວງວຽງຈັນ) ລວງຍາວທັງໝົດປະມານ 58 ກິໂລແມັດ ໂດຍການສະໜັບສະໜູນເງິນກູ້ດອກເບ້ຍຕໍ່າ ຈາກ 3 ສະຖາບັນການເງິນຄື: ທະນາຄານໂລກໃນມູນຄ່າ 40 ລ້ານໂດລາສະຫະລັດ, ທະນາຄານລົງທຶນພື້ນຖານໂຄງລ່າງອາຊີ ມູນຄ່າ 40 ລ້ານໂດລາສະຫະລັດ, ກອງທຶນນໍດິກ ເພື່ອການພັດທະນາ ມູນຄ່າ 9,5 ລ້ານໂດລາສະຫະລັດ ແລະ ລັດຖະບານລາວສົມທົບທັງໝົດ ມູນຄ່າ 38,5 ລ້ານໂດລາສະຫະລັດ, ລວມມູນຄ່າໂຄງການທັງໝົດແມ່ນ 128 ລ້ານໂດລາສະຫະລັດ, ສໍາລັບການອອກແບບເພື່ອປັບປຸງ ແລະຍົກລະດັບຕອນທາງດັ່ງກ່າວແມ່ນ ເປັນການປັບປຸງຍົກລະດັບໂຄງສ້າງ ແລະ ຂະຫຍາຍໜ້າທາງຕາມແລວທາງເກົ່າໃຫ້ກວ້າງອອກຕື່ມເພື່ອໃຫ້ສາມາດຮັບນໍ້າໜັກການບັນທຸກຕາມມາດຕະຖານ ຂອງອາຊຽນຄື 11 ໂຕນຕໍ່ເພົາ (ຂອງລາວແມ່ນ 9,1 ໂຕນຕໍ່ເພົາ) ແລະ ສາມາດລະບາຍການສັນຈອນໄດ້ເຖິງປີ 2030, ຊຶ່ງມີລາຍລະອຽດດັ່ງນີ້:

<u>ຕອນທີ 1:</u> ແຕ່ສາມແຍກສີເກີດ (ກິໂລແມັດທີ 12) ຫາ ບ້ານສີງເປືອຍ (ກິໂລແມັດທີ 31)ປັບປຸງ ແລະ ຂະຫຍາຍໜ້າທາງຈາກ 2 ເລນ ເປັນ 6 ເລນ, ມີ 4 ເລນໃຫຍ່ (4x3,5ແມັດ) ແລະມີ 2 ເລນນ້ອຍສໍາລັບລົດຈັກສອງເບື້ອງ (2x2ແມັດ) ແລະທາງຄົນຍ່າງສອງເບື້ອງ ສໍາລັບເຂດຊຸມຊົນ (2x1,5ແມັດ) ແລະມີດອນກາງທາງກວ້າງ 2 ແມັດ, ຄວາມກວ້າງຂອງທາງທັງໝົດປະມານ 23 ແມັດ.

<u>ຕອນທີ 2:</u> ແຕ່ບ້ານສີງເປືອຍ (ກິໂລແມັດທີ 31) ຫາ ໂພນໂຮງ (ກິໂລແມັດທີ 70) ປັບປຸງເປັນທາງ 4 ເລນ ມີ 2 ເລນໃຫຍ່ (2x 3,5 ແມັດ), ມີສອງເລນນ້ອຍ ( 2x2,5 ແມັດ), ບໍ່ມີດອນກາງທາງ ແລະ ທາງຄົນຍ່າງສອງເບື້ອງສໍາລັບເຂດຊຸມຊົນ (2x1,5ແມັດ), ຄວາມກວ້າງໜ້າທາງທັງໝົດປະມານ 15 ແມັດ. ປະຈຸບັນກະຊວງການເງິນພວມເຈລະຈາເງິນກູ້ ກັບ 3 ຜູ້ໃຫ້ທຶນດັ່ງກ່າວມາຂ້າງເທິງ (ຕາມແຈ້ງການຂອງຫ້ອງວ່າການສໍານັກງານ ສະບັບເລກທີ 378/ຫສນຍ.ກຄສ, ລົງວັນທີ 15/03/2018 ). ພາຍຫລັງຄົ້ນຄ້ວາ ແລະເຈລະຈາເງິນກູ້ດັ່ງກ່າວສໍາເລັດ ແລ້ວນໍາເຂົ້າລາຍງານກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ພິຈາລະນາອະນຸມັດແລ້ວຈຶ່ງເລີ້ມຈັດຕັ້ງປະຕິບັດ

ໂຄງການຕາມຂັ້ນຕອນ, ຕາມລະບຽບການຂອງຜູ້ໃຫ້ທຶນ ແລະກົດໝາຍກ່ຽວຂ້ອງຂອງ ສປປ ລາວ ຄາດຄະຈະເລີ່ມຕົ້ນການກະກຽມຈັດຊື້-ຈັດຈ້າງປະມູນເອົາຜູ້ຮັບເໝົາກໍ່ສ້າງໂຄງການໃນທ້າຍ 2018 ນີ້.

7. ປະຊາຊົນບ້ານ ຫ້ວຍຫົງ ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ ສະເໜີບັນຫາກ່ຽວກັບເສັ້ນທາງຕັດຈາກຮ່ອມ 19 ບ້ານ ຫ້ວຍຫົງ ຫາ ເສັ້ນທາງບ້ານ ໜອງພະຍາ ຜ່ານໂຮງໝໍແມ່ແລະເດັກ ຫຼັງໃໝ່ ໃຫ້ພາກສ່ວນກ່ຽວຂ້ອງເບິ່ງຄືນ ເພາະວ່າທາງເປັນບວກ, ຂຸມ ແລະ ຍາມຝົນບໍ່ຕົກກໍມີຂີ້ຝຸ່ນຫຼາຍເຮັດໃຫ້ປະຊາຊົນຢູ່ເຂດໃກ້ຄຽງໄດ້ຮັບຜົນກະທົບ ແລະ ລໍາບາກໃນການສັນຈອນໄປມາ:

➢ ຕອບ: ຄໍາຕອບຄືຂໍ້ 5.

8. ປະຊາຊົນບ້ານ ຕາດທອງ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ກ່ຽວກັບເສັ້ນທາງແຕ່ ສາມແຍກທາງໄປເກົ້າລ້ຽວ ຫາ ຫ້ອງການບ້ານ ຕາດທອງ ແລະ ໜ້າໂຮງຮຽນຊົນລະປະທານ ໃນລະດູຝົນນີ້ແມ່ນມີຜົນກະທົບຕໍ່ຄວາມຫຍຸ້ງຍາກໃນການສັນຈອນ, ເຮັດໃຫ້ການໄປເຮັດວຽກມີຄວາມຫຍຸ້ງຍາກຫຼາຍ ເພາະໜ້າທາງເປັນບວກ, ເປັນຂຸມໃຫຍ່ ເຮັດໃຫ້ລົດໄປມາມີຄວາມຫຍຸ້ງຍາກຫຼາຍ ຢາກໃຫ້ປັບປຸງເສັ້ນທາງຄືນໃໝ່ເພາະດຽວນີ້ເປ່ເພຫຼາຍ. ສະນັ້ນ ສະເໜີລັດຖະບານກໍຄືພາກສ່ວນທີ່ກ່ຽວຂ້ອງຮີບຮ້ອນລົງໄປກວດກາດ່ວນ ແລະ ຊີ້ນໍາພາກສ່ວນກ່ຽວຂ້ອງລົງຕິດຕາມກວດກາດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ເສັ້ນທາງດັ່ງກ່າວແມ່ນນອນຢູ່ໃນແຜນພັດທະນາດ້ານຄົມມະນາຄົມ 5 ປີ (2016-2020) ຂອງເມືອງສີໂຄດຕະບອງ ແລະໄດ້ຮັບອະນຸມັດງົບປະມານຈາກສະພານະຄອນຫຼວງວຽງຈັນ ແລະ ສະພາແຫ່ງຊາດແລ້ວ ໃນສົກງົບປະມານປີ 2018. ປະຈຸບັນຢູ່ໃນຂັ້ນຕອນກະກຽມການຈັດຊື້-ຈັດຈ້າງ ຄັດເລືອກເອົາບໍລິສັດຜູ້ຮັບເໝົາ ເພື່ອມາສ້ອມແປງເສັ້ນທາງປູຢາງດັ່ງກ່າວ ແລະ ຈະໃຫ້ສໍາເລັດກ່ອນລະດູຝົນຈະມາເຖິງນີ້. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນໍາໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ສົມທົບກັບ ຫ້ອງການ ຍທຂ ເມືອງສີໂຄດຕະບອງ ເພື່ອຈັດຕັ້ງປະຕິບັດໂຄງການດັ່ງກ່າວໃຫ້ຖືກຕອງຕາມມາດຕະຖານເຕັກນິກ, ຮັບປະກັນຄຸນນະພາບ ແລະ ສາເລັດຕາມແຜນການ.

9. ປະຊາຊົນບ້ານ ເພຍລາດ ເມືອງ ສັງທອງ, ນະຄອນຫຼວງວຽງຈັນ ສະເໜີບັນຫາທາງຢູ່ເຂດເມືອງສັງທອງເປ່ເພເປັນຂຸມ ເຮັດໃຫ້ການສັນຈອນໄປມາລໍາບາກ ສະເໜີຫາພາກສ່ວນກ່ຽວຂ້ອງສ້ອມແປງໃຫ້ດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ອີງໃສ່ງົບປະມານປະຈໍາປີທີ່ໄດ້ຮັບຈາກນະຄອນຫຼວງວຽງຈັນ ແມ່ນມີຈໍານວນຈໍາກັດບໍ່ພຽງພໍໃນການສ້ອມແປງ ແລະກໍ່ສ້າງບັນດາເສັ້ນທາງທັງໝົດໃນນະຄອນຫລວງວຽງຈັນ. ສະນັ້ນ, ພະແນກ ຍທຂ ນະຄອນຫຼວງວຽງຈັນ ກໍໄດ້ຈັດແບ່ງໃສ່ເສັ້ນທາງທີ່ມີຄວາມສໍາຄັນ, ຈໍາເປັນ ແລະຮີບດ່ວນກ່ອນ, ໃນປີ 2017 ຜ່ານມາເມືອງສັງທອງ ກໍ່ໄດ້ຮັບງົບປະມານຈາກພະແນກ ຍທຂ ນະຄອນຫຼວງວຽງຈັນ ຈໍານວນໜຶ່ງເພື່ອສ້ອມແປງເສັ້ນທາງສາຍຫຼັກພາຍໃນຕົວເມືອງສັງທອງ. ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ເຫັນວ່າການສ້ອມແປງບັນດາເສັ້ນທາງໃນຂອບເຂດທົ່ວປະເທດແມ່ນມີຄວາມສໍາຄັນ ແລະ ຈໍາເປັນແທ້. ໃນປີຜ່ານມາໄດ້ຈັດສັນງົບປະມານກອງທຶນທາງ ຕາມດໍາລັດວ່າດ້ວຍກອງທຶນທາງ ສະບັບເລກທີ 130/ລບ ລົງວັນທີ 1/6/2016 ກໍານົດໄວ້ເຊັ່ນ: ບ້ວງຮັບໃຊ້ວຽກບູລະນະຮັກສາ ແລະ ສ້ອມແປງທາງ ແມ່ນບໍ່ຫຼຸດ 90 ເປີເຊັນ ໃນນີ້: ທາງຫຼວງແຫ່ງຊາດ ແລະ ຂົວນິດຕະພາບ ບໍ່ຫຼຸດ 72 ເປີເຊັນ; ທາງຫຼວງທ້ອງຖິ່ນ ບໍ່ເກີນ 18 ເປີເຊັນ ຂອງທັງໝົດງົບປະມານກອງທຶນທາງ. ກະຊວງ ຍທຂ ໄດ້ແບ່ງຄວາມຮັບຜິດຊອບໃຫ້ທ້ອງຖິ່ນ ໂດຍການໂອນເງິນຮ່ວງວຽກບູລະນະຮັກສາ ແລະ ສ້ອມແປງທາງ ຫຼວງທ້ອງຖິ່ນ 18

ເປີເຊັນ ດັ່ງກ່າວ ຫລື ປະມານ 6,60 ຕື້ກີບ/ແຂວງ ໃນປີ 2017 ໃຫ້ແຕ່ລະແຂວງ ແລະ ນະຄອນຫຼວງ ຄຸ້ມຄອງ ແລະນຳໃຊ້ໃນປີ 2017.

10. <u>ປະຊາຊົນບ້ານ ສີໄຄທົ່ງ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບການສ້າງທາງຂອງ ບໍລິສັດ ຄູນເມືອງ ທີ່ໄດ້ມາກໍ່ສ້າງເສັ້ນທາງບ້ານ ສີໄຄ ຮ່ອມ 12 (ທາງເບຕົງ) ປະຈຸບັນແມ່ນສຳເລັດ 100 ເປີເຊັນ ແຕ່ກ່ອນກໍ່ສ້າງໄດ້ມາລຸລ່ວງກັບປະຊາຊົນແລ້ວໄດ້ເຮັດບົດບັນທຶກລາຄາກໍ່ສ້າງທີ່ 6,3 ຕື້ກີບ ແຕ່ມາຮອດປະຈຸບັນທາງບໍລິສັດດັ່ງກ່າວຈະມາຮຽກຮ້ອງເກັບເງິນກັບປະຊາຊົນຕື່ມອີກດັ່ງນີ້: ຄອບຄົວລະ 70.000 ກີບ ຕໍ່ 7 ປີ (ສຳລັບຄອບຄົວຢູ່ໃກ້ເສັ້ນທາງ) ແລະ ຄອບຄົວລະ 50.000 ກີບ ຕໍ່ 7 ປີ (ສຳລັບຄອບຄົວທີ່ຢູ່ໄກເສັ້ນທາງ) ແລ້ວບອກກັບປະຊາຊົນວ່າລາຄາກໍ່ສ້າງຢູ່ທີ່ 13 ຕື້ກີບ ໂດຍມີການຊ້ອງໜ້າຈາກເຈົ້າເມືອງ ແລະ ປະຊາຊົນພາຍໃນບ້ານບໍ່ເຫັນດີ. ສະນັ້ນ ປະຊາຊົນເຫັນວ່າການຈະຂຶ້ນລາຄາກໍ່ສ້າງດັ່ງກ່າວຄວນຈະຂໍຄຳເຫັນນຳປະຊາຊົນພາຍໃນບ້ານກ່ອນ ແລະບັນຫາດັ່ງກ່າວບໍ່ມີຄວາມເປັນທຳ ຈຶ່ງສະເໜີພາກສ່ວນທີ່ກ່ຽວຂ້ອງລົງຕິດຕາມແກ້ໄຂ:</u>

➢ <u>ຕອບ:</u> ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ໂຄງການກໍ່ສ້າງເສັ້ນທາງດັ່ງກ່າວເປັນໂຄງການແບບມີສ່ວນຮ່ວມຂອງປະຊາຊົນຄື: ງົບປະມານລັດ 70% ແລະທຶນປະຊາຊົນສົມທົບ 30 ເປີເຊັນຂອງມູນຄ່າການກໍ່ສ້າງທັງໝົດ. ໂຄງການກໍ່ສ້າງທາງຮ່ອມ 12 ບ້ານ ສີໄຄ ແຕ່ຂ້າງຕະຫຼາດສີໄຄ-ບ້ານ ໂພສີ-ທາງເລກທີ 13 ເໜືອ ມີລວງຍາວ 1.400 ແມັດ, ຄວາມກ້ວາງ 5-6 ແມັດ, ມີຮ່ອງລະບາຍນ້ຳໂຕຢູສອງຂ້າງທາງ ມູນຄ່າການກໍ່ສ້າງທັງໝົດ 13 ຕື້ກີບ, ງົບປະມານຂອງລັດ 70 ເປີເຊັນ ເທົ່າກັບ 9,1 ຕື້ກີບ ແລະ ປະຊາຊົນສົມທົບ 30 ເປີເຊັນ ເທົ່າກັບ 3,9 ຕື້ກີບ, ຫ້ອງການ ຍທຂ ເມືອງ ສີໂຄດຕະບອງ ເປັນເຈົ້າຂອງໂຄງການ, ບໍລິສັດ ຄູນເມືອງ ກໍ່ສ້າງຂົວ-ທາງ ເປັນຜູ້ຮັບເໝົາກໍ່ສ້າງ ແລະ ໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ 100 ເປີເຊັນ. ສຳລັບການຊຳລະສະສາງຕ່າງໆບ້ວງ 30 ເປີເຊັນ ຫຼື 3,9 ຕື້ກີບທາງອຳນາດການປົກຄອງບ້ານ ແລະປະຊາຊົນພາຍໃນບ້ານ ສີໄຄເປັນຜູ້ຕົກລົງກັບ ບໍລິສັດຜູ້ຮັບເໝົາກໍ່ສ້າງກ່ຽວກັບເງື່ອນໄຂຕ່າງໆຂອງການຊຳລະເງິນບ້ວງດັ່ງກ່າວ. (ຝ່າຍເຈົ້າຂອງໂຄງການມີນິຕິກຳກ່ຽວກັບການຈັດຕັ້ງປະຕິບັດຄົບຊຸດ). ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ສົມທົບກັບ ຫ້ອງການ ຍທຂ ເມືອງສີໂຄດຕະບອງ ເພື່ອກວດກາເບິ່ງຈັດຕັ້ງປະຕິບັດໂຄງການດັ່ງກ່າວໃຫ້ໄປຕາມສັນຍາ ທີ່ຕົກລົງກັນໄວ ແລະ ເພື່ອຄວາມຍຸຕິທຳກັບ ສອງຝ່າຍ.

11. <u>ປະຊາຊົນບ້ານ ຊ້າງຄູ້, ເມືອງ ໄຊທານີ, ນະຄອນຫລວງວຽງຈັນ ສະເໜີບັນຫາຄ່າບໍລິການລົດໂດຍສານ ສາຍໃຕ້-ສາຍເໜືອ ຍັງມີລາຄາສູງທັງທີ່ນ້ຳມັນກໍ່ປັບລົງ ແລະ ການບໍລິການຍັງມີໃຫ້ເຫັນເຊັ່ນ: ເອົາຕັ່ງເສີມມາໃສ່ເຮັດ ໃຫ້ລົດ ມີຄວາມແອອັດ. ສະເໜີພາກສ່ວນຮັບຜິດຊອບລົງຕິດຕາມກວດກາແກ້ໄຂ.</u>

➢ <u>ຕອບ:</u> 1. ການປະຕິບັດລາຄາໂດຍສານລະຫວ່າງແຂວງ ທີ່ນຳໃຊ້ປະຈຸບັນແມ່ນປະຕິບັດຕາມແຈ້ງການຂອງກົມຂົນສົ່ງສະບັບເລກທີ 1435/ກຂສ, ລົງວັນທ 28/1/2011 ໂດຍແມ່ນກະຊວງໂຍທາທິການ ແລະຂົນສົ່ງ ເປັນຜູ້ວາງອອກ. ສ່ວນລາຄາຂົນສົ່ງໂດຍສານພາຍໃນແຂວງແມ່ນພະແນກ ຍທຂ ແຂວງ-ນະຄອນຫລວງ ເປັນຜູ້ຄຸ້ມຄອງ, ຊຶ່ງໄດ້ຄິດໄລ່ຕາມໂຄງສ້າງສູດຄິດໄລ່ລາຄາທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກເປັນແຕ່ລະໄລຍະ, ການຄິດໄລ່ແມ່ນມີຫລາຍຂໍ້ມູນທີ່ນຳມາປະກອບເຂົ້າໃນການຄິດໄລ່ ແລະ ເປັນຕົວແປຫລັກທີ່ເຮັດໃຫ້ລາຄາຫົວ ໜ່ວຍຄ່າຂົນສົ່ງທາງບົກມີການປ່ຽນແປງເຊັ່ນ: ລາຄາລົດ, ລາຄາອາໄຫລ່ລົດ, ຄ່າແຮງງານ, ລາຄານ້ຳມັນ, ອາກອນພັນທະ

ລົດ ອື່ນໆ, ເມື່ອລາຄານໍ້າມັນປັບລົງຊຶ່ງເປັນເວລາສັ້ນໆເທົ່ານັ້ນ ແຕ່ປັດໃຈອື່ນພັດບໍ່ໄດ້ປັບລົງຕາມ ແຕ່ກົງກັນຂ້າມ ແມ່ນຍັງເພີ່ມຂຶ້ນເລື້ອຍໆ ຊຶ່ງລາຄານໍ້າມັນເຊື້ອໄຟທີ່ຊື້-ຂາຍ ແມ່ນຢູ່ລະຫວ່າງ 8.600-10.000 ກີບ/ລິດ.

➢ ຕອບ: 2. ການບໍລິການຂອງລົດຂົນສົ່ງໂດຍສານທີ່ເອົາຕັ່ງເສີມມາໃສ່ນັ້ນ ແມ່ນການລະເມີດກົດລະບຽບຂອງ ຄົນຂັບລົດຂົນສົ່ງໂດຍສານເອງ, ຍ້ອນການກວດກາຂອງເຈົ້າໜ້າທີ່ຕາມເສັ້ນທາງ ແລະເຈົ້າໜ້າທີ່ກວດກາລົດກ່ອນ ປ່ອຍອອກຈາກສະຖານີບໍ່ທັນເຂັ້ມງວດ ຈຶ່ງເຮັດໃຫ້ເຈົ້າຂອງລົດ ແລະ ຄົນຂັບລົດມີຊ່ອງວ່າງໃນການລະເມີດກົດ ລະບຽບ. ເພາະວ່າຕາມກົດລະບຽບການຄຸ້ມຄອງລົດໂດຍສານ ສະບັບເລກທີ 7257/ຄຂປກ, ລົງວັນທີ 16/6/2005, ຂອງກະຊວງໂຍທາທິການ ແລະຂົນສົ່ງໄດ້ວາງອອກ ແມ່ນໄດ້ກຳນົດຂະໜາດລົດຂົນສົ່ງໂດຍສານ 3 ຂະໜາດຄື: 1). ຂະໜາດນ້ອຍບໍ່ເກີນ 9 ບ່ອນນັ່ງ; 2). ຂະໜາດກາງ 10-35 ບ່ອນນັ່ງ; ແລະ 3). ຂະໜາດໃຫຍ່ 36 ບ່ອນນັ່ງຂຶ້ນໄປ. ສາລັບການບໍລິການລົດໂດຍສານ ປະຈຳທາງລະຫວ່າງແຂວງ ປະຈຸບັນແມ່ນມີ 3 ປະເພດລົດ ຄື: ລົດໂດຍສານດ່ວນປະເພດ 1 (ມີແອເປັນ, ຫ້ອງນໍ້າ, ບໍລິການອາຫານ), ລົດໂດຍສານດ່ວນປະເພດ 2 (ມີແອ ເປັນ) ແລະລົດໂດຍສານປະເພດທຳມະດາ (ມີພັດລົມ), ທຸກປະເພດລົດໂດຍສານຕ້ອງບໍລິການຕາມລະບຽບການ ຂົນສົ່ງໂດຍສານຢ່າງເຂັ້ມງວດ, ນອກນັ້ນ ໃນວັນບຸນປີໃໝ່ລາວທຸກປີ ກົມຂົນສົ່ງກໍ່ໄດ້ອອກແຈ້ງການຫ້າມບໍ່ໃຫ້ຂຶ້ນ ລາຄາໂດຍສານໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ໃຫ້ມີການບັນທຸກເກີນຕັ່ງນັ່ງ ແລະເສີມຕັ່ງນັ່ງອີກຢ່າງເຂັ້ມງວດ.

12. <u>ປະຊາຊົນບ້ານ ສະພັງໝໍ້, ເມືອງໄຊທານີ, ນະຄອນຫລວງວຽງຈັນ ສະເໜີໃຫ້ແຕ່ງຕັ້ງໜ່ວຍງານສະເພາະກິດ ລົງກວດກາເສັ້ນທາງໃນນະຄອນຫລວງວຽງຈັນ ເພາະເສັ້ນທາງເປ່ເພຢ່າງຫລວງຫລາຍ ເຮັດໃຫ້ການສັນຈອນ ຕິດຂັດ, ລົດເປເພ ແລະເປັນສາເຫດໃຫ້ເກີດອຸປະຕິເຫດຍ້ອນສະພາບເສັ້ນທາງເປເພ. ຈຶ່ງສະເໜີ ກະຊວງ ໂຍທາທິການ ແລະຂົນສົ່ງ ແກ້ໄຂ.</u>

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ປະຈຸບັນ ໄດ້ຈັດ ຕັ້ງຫນ່ວຍງານສ້ອມແປງເຄື່ອນທີ່ແກ້ໄຂສຸກເສີນ (ສ້ອມແປງນ້ອຍ) ເຊິ່ງເຫັນວ່າການຈັດຕັ້ງປະຕິບັດການ ສ້ອມແປງທ່ວງທັນສະພາບການ, ປະຢັດງົບປະມານ ແລະມີປະສິດທິຜົນດີ. ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມ ຄອງມະຫາພາກ ເຫັນວ່າການສ້ອມແປງບັນດາເສັ້ນທາງໃນຂອບເຂດທົ່ວປະເທດເວົ້າລວມ, ກໍ່ຄືໃນນະຄອນຫລວງ ວຽງຈັນ ແມ່ນມີຄວາມສຳຄັນ ແລະຈຳເປັນແທ້. ໃນປີຜ່ານມາໄດ້ຈັດສັນງົບປະມານກອງທຶນທາງ ເພື່ອບູລະນະ ສ້ອມແປງຕາມດຳລັດວ່າດ້ວຍກອງທຶນທາງ ສະບັບເລກທີ 130/ລບ ລົງວັນທີ 1/6/2016 ການົດໄວ້. ຕໍ່ກັບບັນຫາ ດັ່ງກ່າວ ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ກົມຂົວທາງລົງສົມທົບກັບພະແນກ ຍທຂ ນະຄອນຫລວງວຽງຈັນ ແລະ ຫ້ອງການ ຍທຂ ລົງກວດກາເກັບກຳຂໍ້ມູນຄົ້ນຄ້ວາສັງລວມ, ພ້ອມທັງສະເໜີ ວິທີແກ້ໄຂຕໍ່ຄະນະນຳນະຄອນຫລວງວຽງຈັນ ພິຈາລະນາຕໍ່ໄປ.

13. <u>ປະຊາຊົນບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບບໍລິສັດທີ່ໄດ້ມາເຮັດ ອາຄານຈອດລົດ (ບ່ອນຝາກລົດ) ທີ່ທັນສະໄໝຢູ່ບ້ານດັ່ງກ່າວ ຊຶ່ງຕັ້ງຢູ່ຂ້າງໂຮງແຮມຈະເລີນໄຊ. ອີງຕາມ ແຜນການປູກສ້າງອາຄານແມ່ນ 5 ຊັ້ນ, ສະຖານທີ່ກໍ່ສ້າງແມ່ນທາງຫຼັງບ້ານ ແລະທາງໜ້າບ້ານແມ່ນບໍລິສັດສຳ ປະທານຮ່ອງນໍ້າ. ບໍລິສັດຈີກຮ່ອງນໍ້າແຕ່ວັນທີ 14 ມິຖຸນາ 2017 ແຕ່ຮອດປະຈຸບັນຍັງບໍ່ໄດ້ຖົມຮ່ອງນໍ້າເທື່ອ ມີ ແຕ່ເອົາສັງກະສີມາບັງໄວ້ ເຮັດໃຫ້ການສັນຈອນເຂົ້າອອກມີຄວາມຫຍຸ້ງຍາກ, ເມື່ອໄປແຈ້ງນຳເມືອງ ແຕ່ເມືອງ ປະຕິເສດວ່າບໍ່ຮັບຮູ້ ແລະໄດ້ໄປແຈ້ງກັບນະຄອນຫຼວງ ເພິ່ນກໍໄດ້ລົງມາຕິດຕາມ, ກວດກາ ແລະ ອອກແຈ້ງ ການວ່າ: ໃຫ້ບ້ານ ແລະເມືອງປະສານກັບບໍລິສັດ, ແຕ່ກໍບໍ່ໄດ້ຮັບການປັບປຸງແກ້ໄຂ ໂດຍອ້າງເຫດຜົນວ່າມັນ</u>

ເປັນແບບຂອງບໍລິສັດຈຶ່ງຕ້ອງໄດ້ລໍຖ້າ. ສະນັ້ນ, ສະເໜີໃຫ້ສະພາປະຊາຊົນນະຄອນຫຼວງ ສົມທົບກັບພາກສ່ວນກ່ຽວຂ້ອງຕິດຕາມ, ກວດກາຕໍ່ກັບບັນຫານີ້.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ສຳລັບໂຄງການຂໍລົງທຶນສຳປະທານສ້າງເປັນບ່ອນຈອດລົດດັ່ງກ່າວນີ້ ປະຈຸບັນ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ລົບລ້າງໃບອະນຸຍາດປຸກສ້າງຊົ່ວຄາວແລ້ວ ແລະ ສ່ວນການລົບລ້າງສັນຍາສຳປະທານແມ່ນໜ້າທີ່ຂອງພະແນກແຜນການ ແລະການລົງທຶນ ນະຄອນຫຼວງວຽງຈັນ ເປັນຜູ້ພິຈາລະນາ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ກົມເຄຫາ-ຜັງເມືອງ ສົມທົບກັບພະແນກ ຍທຂ ນະຄອນຫລວງວຽງຈັນ ແລະຫ້ອງການ ຍທຂ ເມືອງຈັນທະບູລີ ລົງກວດກາເບິ່ງສະຖານທີ່ຕົວຈິງ ແລະກວດເບິ່ງດ້ານນິຕິກຳການອະນຸຍາດປະຕິບັດໂຄງການດັ່ງກ່າວຖືກຕ້ອງຕາມລະບຽບກົດໝາຍ ແລ້ວບໍ່ແລ້ວສັງລວມລາຍງານເຈົ້າຄອງນະຄອນຫລວງວຽງຈັນ ພິຈາລະນາແກ້ໄຂຕໍ່ໄປ.

14. ປະຊາຊົນບ້ານຫົວຂົວ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບການຈັດສັນສະຖານທີ່ ຝາກລົດ ຢູ່ທີ່ຕະຫຼາດຫົວຂົວມີຄວາມຖືກຕ້ອງແລ້ວບໍ? ເອົາເສັ້ນທາງຫຼວງເປັນສະຖານທີ່ຝາກລົດ (ເອົາເລນເບື້ອງຊ້າຍເປັນບ່ອນຝາກລົດ) ເຮັດໃຫ້ການສັນຈອນຕິດຂັດ. ສະນັ້ນ, ຈຶ່ງສະເໜີໃຫ້ສະພາປະຊາຊົນ ນະຄອນຫຼວງວຽງຈັນ ຕິດຕາມກວດກາ, ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ກວດກາຄືນເບິ່ງວ່າໄດ້ຮັບການອະນຸຍາດຈາກພາກສ່ວນໃດ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ຜ່ານມາ ກົມຂົນສົ່ງ, ກະຊວງ ຍທຂ ໄດ້ສົມທົບກະພະແນກ ຍທຂ ນະຄອນຫລວງ ໄດ້ປັບປຸງລະບົບລະບາຍການສັນຈອນໃນຈຸດດັ່ງກ່າວລະອຽດສົມຄວນແລ້ວ ໂດຍຕິດຕັ້ງປ້າຍຫ້າມຈອດ, ປ້າຍກຳນົດທິດທາງ, ແຕ້ມເສັ້ນແບ່ງຊ່ອງທາງຈາລະຈອນ ແລະແຕ້ມຂອບທາງຂາວແດງ (ຫ້າມຈອດ) ຄົບຊຸດແລ້ວ. ນອກຈາກນັ້ນເສັ້ນທາງດັ່ງກ່າວຍັງມີວິຊາການ ຫ້ອງການ ຍທຂ ເມືອງໄຊເສດຖາ ລົງກວດກາເປັນປະຈຳ ແລະໄດ້ມອບໃຫ້ເຈົ້າໜ້າທີ່ຕຳຫຼວດຈະລາຈອນປະຈຳເຂດດັ່ງກ່າວຕິດຕາມກວດກາ ຕາມລະບຽບການຢ່າງເປັນປົກກະຕິ. ຕໍ່ກັບບັນຫາດັ່ງກ່າວ ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ສືບຕໍ່ສົມທົບກັບຫ້ອງການ ຍທຂ ເມືອງໄຊເສດຖາ ແລະເຈົ້າໜ້າທີ່ຕຳຫຼວດຈະລາຈອນ ລົງກວດກາເບິ່ງສະຖານທີ່ຕົວຈິງ ວ່າມີຄວາມສະດວກ ແລະຫຍຸ້ງຍາກແນວໃດ ແລ້ວພ້ອມກັນຄົ້ນຄ້ວາຫາວິທີແກ້ໄຂຕໍ່ໄປ.

15. ປະຊາຊົນບ້ານໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບທາງເຂົ້າໂຮງຮຽນປະຖົມ, ມັດທະຍົມສົມບູນວຽງສະຫ້ອນ ແລະໂຮງຮຽນປະຖົມ, ມັດທະຍົມສົມບູນອິດສະເຕີນສະຕາ ມີຄວາມຫຍຸ້ງຍາກໃນການສັນຈອນໄປມາ, ເຂົ້າ-ອອກ ທາງຮ່ອມເສັ້ນນີ້ ຍ້ອນຄູ ແລະນັກຮຽນໂຮງຮຽນນີ້ ພາກັນຈອດລົດສອງຟາກຂ້າງທາງ ເຮັດໃຫ້ລົດທຽວໄດ້ແຕ່ເລນດຽວ, ຈຶ່ງເຮັດໃຫ້ສະພາບການສັນຈອນມີຄວາມຫຍຸ້ງຍາກແລະແອອັດ, ຕິດຂັດເກືອບທຸກມື້ ແຕ່ວັນຈັນ-ວັນສຸກ ໂດຍສະເພາະແມ່ນເວລາ 07:00-08:30 ໂມງ ແລະ 16:00-17:30 ໂມງ, ຊຶ່ງສະພາບຄວາມຫຍຸ້ງຍາກນີ້ແມ່ນເກີດມາດົນແລ້ວ, ທາງຫ້ອງການ ແລະປະຊາຊົນໃນເຂດນີ້ ໄດ້ເຄີຍສະເໜີໃຫ້ທາງໂຮງຮຽນ, ກົມຕຳຫຼວດຈາລະຈອນ ແລະ ກະຊວງສຶກສາທິການ ແລະກິລາ ແລ້ວແຕ່ຍັງບໍ່ມີຄຳຕອບ ແລະ ຍັງບໍ່ໄດ້ຮັບການແກ້ໄຂ. ສະນັ້ນ, ຈຶ່ງສະ ເໜີມາຍັງສະພາປະຊາຊົນ ນະຄອນຫຼວງວຽງຈັນ ລົງມາກວດກາສະພາບຄວາມເປັນຈິງ ແລະ ແກ້ໄຂບັນຫາດັ່ງກ່າວດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ເສັ້ນທາງເຂົ້າໂຮງຮຽນດັ່ງກ່າວ ຜ່ານມາພະແນກ ຍທຂ ນະຄອນຫລວງ ໄດ້ຕິດຕັ້ງປ້າຍກຳນົດທິດທາງ ແລະ ປ້າຍຫ້າມຈອດໃສ່ຢ່າງ

ລະອຽດ ຈາກນັ້ນກໍ່ໄດ້ມອບໃຫ້ເຈົ້າໜ້າທີ່ຕຳຫຼວດຈະລາຈອນເມືອງໄຊເສດຖາ ຕິດຕາມກວດກາຢ່າງເປັນປົກະຕິ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ສົມທົບກັບຫ້ອງການ ຍທຂ ເມືອງໄຊເສດຖາ ແລະ ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ລົງກວດກາເບິ່ງສະຖານທີ່ຕົວຈິງ ວ່າມີຄວາມຫຍຸງຍາກແນວໃດ ແລ້ວພ້ອມກັນຄົ້ນຄ້ວາຫາວິທີແກ້ໄຂຕໍ່ໄປ.

16. <u>ປະຊາຊົນບ້ານຮ່ອງແກ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບການກຳນົດຄ່າທຳນຽມທາງແມ່ນແພງກ່ວາປີທີ່ຜ່ານມາ ຂໍໃຫ້ລັດຖະບານປ່ຽນແປງການກຳນົດຄ່າທຳນຽມທາງຄືນໃໝ່ ແລະ ການຊຳລະເງິນຄ່າທຳນຽມທາງເປັນຫຍັງຈຶ່ງໃຫ້ຊຳລະຜ່ານທະນາຄານການຄ້າຕ່າງປະເທດມະຫາຊົນ ພຽງແຕ່ທະນາຄານດຽວເທົ່ານັ້ນ, ຊຶ່ງເປັນການສ້າງຄວາມຫຍຸ້ງຍາກໃນການໄປຊຳລະເງິນຄ່າທຳນຽມທາງ ຖ້າລັດຖະ ບານ ແລະພາກສ່ວນທີ່ກ່ຽວ ຂ້ອງອະນຸຍາດໃຫ້ຊຳລະຄ່າທຳນຽມທາງຜ່ານຫຼາຍທະນາຄານ ກໍຈະເປັນການສ້າງຄວາມສະດວກ ສະ ບາຍໃຫ້ປະຊາຊົນ ຫຼາຍຂຶ້ນ.</u>

➢ <u>ຕອບ:</u> ບັນຫາດັ່ງກ່າວ ແມ່ນຄວາມຮັບຜິດຊອບຂອງກະຊວງ ການເງິນ.

17. <u>ປະຊາຊົນບ້ານ ສຳພັນນາ, ເມືອງ ສັງທອງ,ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບແຜນໂຄງການກໍ່ສ້າງ ທາງຢູ່ນະຄອນຫຼວງວຽງຈັນ ແຕ່ບ້ານ ນາຫອຍປັງ ຫາ ບ້ານ ເພຍລາດ ມີໄລຍະທາງ 22 ກິໂລແມັດ ຂໍໃຫ້ເອົາເຂົ້າແຜນກໍ່ສ້າງປະຈຳປີ 2018 ໃຫ້ແດ່ເພາະເປັນເສັ້ນທາງເຂົ້າບ້ານ ວິລະຊົນ ສີທອງ ເນື່ອງຈາກວ່າປະຊາຊົນ ມີຄວາມຫຍຸ້ງຍາກຫຼາຍ. ສະນັ້ນ, ສະເໜີພະແນກໂຍທາ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນພິຈາລະນາດ້ວຍ.</u>

➢ <u>ຕອບ:</u> ຄຳຕອບຄື ຂໍ້ 9.

18. <u>ປະຊາຊົນບ້ານ ຈອມມະນີກາງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີ 02 ບັນຫາ ດັ່ງນີ້: 1). ສະເໜີພາກສ່ວນທີ່ກ່ຽວຂ້ອງທີ່ໄດ້ນຳເອົາແຜ່ນບາລິເອີ (ຄູກັ້ນທາງ) ມາຂັ້ນທາງກາງຖະໜົນ, ປະຈຸບັນ ເຫັນວ່າບາງບ່ອນທາງການຈາລະຈອນສະດວກດີ ແຕ່ບາງບ່ອນແມ່ນເຮັດໃຫ້ການສັນຈອນຕິດຂັດ (ໂດຍສະເພາະ ທາງໂຄ້ງ ໜ້າຮ້ານຄ້າ EXPRESS ແມ່ນມີທາງຮ່ອມເຂົ້າບ້ານ, ຮ່ອມ 5 ຖ້າເອົາແຜ່ນບາລິເອີມາຕັນ ຍິ່ງເຮັດໃຫ້ການຈາລະຈອນແອອັດຕື່ມ; 2). ຮ່ອມ 5 ບ້ານ ຈອມມະນີກາງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນປະຈຸບັນເສັ້ນທາງດັ່ງກ່າວເພ, ເປັນບວກເປັນຂຸມຫຼາຍ ທາງຮ່ອມເຂົ້າບ້ານດັ່ງກ່າວມີແຕ່ເຮືອນຂອງພະນັກງານການນຳ ທັງເປັນເຂດຊຸມຊົນໃນ ຕົວເມືອງ ກໍຍັງບໍ່ໄດ້ຮັບການແກ້ໄຂ.</u>

➢ <u>ຕອບ:</u> ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ວິຊາການພະແນກ ໄດ້ສົມທົບກັບເຈົ້າໜ້າຕຳຫຼວດຈະລາຈອນ ແລະ ຫ້ອງການ ຍທຂ ເມືອງໄຊເສດຖາ ລົງກວດກາຕົວຈິງແລ້ວ ແລະ ມີຄຳເຫັນດັ່ງນີ້: 1). ເຫັນສົມຄວນວາງຮາວກັ້ນໃສ່ຈຸດດັ່ງກ່າວ ເນື່ອງຈາກເປັນທາງໂຄ້ງ ແລະ ມີທາງຮ່ອມເຂົ້າອອກຢູ່ຈຸດດັ່ງກ່າວ ຊຶ່ງເຮັດໃຫ້ມີການສັນຈອນສັບສົນແອອັດ ຜ່ານມາກໍ່ເກີດອຸປະຕິເຫດ ແລະ ຈະມີຄວາມສ່ຽງສູງຕໍ່ການເກີດອຸປະຕິເຫດໃນຕໍ່ໜ້າ ຈຶ່ງວາງແຫ່ງຕັນທາງ ເຂົ້າ-ອອກ ເພື່ອແກ້ໄຂບັນຫາດັ່ງກ່າວ ໃຫ້ໄປລ້ຽວກັບປະມານ 100 ກວ່າແມັດ; 2). ສຳລັບທາງຮ່ອມ 5 ບ້ານ ຈອມມະນີກາງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ປະຈຸບັນເສັ້ນທາງດັ່ງກ່າວເປ່ເພ ເປັນບວກເປັນຂຸມຫຼາຍ ທາງຮ່ອມເຂົ້າບ້ານດັ່ງກ່າວມີແຕ່ເຮືອນຂອງພະນັກງານການນຳ ທັງເປັນເຂດຊຸມຊົນໃນຕົວເມືອງກໍ່ຍັງບໍ່ໄດ້ຮັບການແກ້ໄຂນັ້ນ: ຫ້ອງການ ຍທຂ ເມືອງ ໄຊເສດຖາ ໄດ້ສົມທົບກັບອຳນາດການປົກຄອງບ້ານຈອມມະນີ ລົງກວດກາຕົວຈິງ ເກັບກຳຂໍ້ມູນປະເມີນມູນຄ່າການສ້ອມແປງແລ້ວ ແລະ ນຳສະເໜີພາກສ່ວນກ່ຽວຂ້ອງເພື່ອຊອກຫາແຫຼ່ງທຶນເພື່ອມາສ້ອມແປງ.

ຕໍ່ກັບ 2 ບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ສະເໜີຊີ້ແຈງ ແລະ ສະເໜີວິທີແກ້ດັ່ງນີ້: <u>ບັນຫາທີ 1:</u> ຕໍ່ການອຳນວຍຄວາມສະດວກການສັນຈອນຕາມທ້ອງຖະໜົນ ໃນນະຄອນຫລວງວຽງ

ຈັນກໍ່ຄື: ການວາງຄູກັ້ນທາງ ຕາມຈຸດຕ່າງໆຂອງເສັ້ນທາງໃນນະຄອນຫລວງວຽງຈັນນັ້ນ ແມ່ນໄດ້ຜ່ານການຄົ້ນຄ້ວາ ປຶກສາຫາລືເປັນເອກະພາບກັບພາກສ່ວນກ່ຽວຂ້ອງແລ້ວ, ຈຸດປະສົງການວາງຄູກັ້ນທາງແມ່ນເພື່ອເຮັດໃຫ້ການສັນຈອນມີຄວາມສະດວກໂລ່ງລ່ຽນ ແລະ ເພື່ອຮອດຄວາມປອດໄພຂອງຜູ້ສັນຈອນ. ຜ່ານມາ ກະຊວງ ຍທຂ ໄດ້ຊີ້ນໍາໃຫ້ກົມຂົນສົ່ງລົງສົມທົບກັບ ກັບພະແນກ ຍທຂ ນະຄອນຫລວງວຽງຈັນ ແລະ ຫ້ອງການ ຍທຂ ເມືອງ ລົງກວດກາເບິ່ງສະຖານທີ່ຕົວຈິງ ເພື່ອເບິ່ງຄວາມເໝາະສົມ ຫລື ບໍ່ເໝາະສົມແນວໃດໃນການວາງບາລິເອີ (ຄູກັ້ນທາງ) ເພື່ອຈະໄດ້ພ້ອມກັນຄົ້ນຄ້ວາຊອກວິທີແກ້ໄຂ. <u>ສໍາລັບບັນຫາທີ 2</u>: ກະຊວງ ຍທຂ ໄດ້ແບ່ງເງິນກອງທຶນທາງ ໃຫ້ພະແນກ ຍທຂ ບັນດາແຂວງ ແລະ ນະຄອນຫລວງໃນແຕ່ລະປີ ເພື່ອສ້ອມແປງທາງ ຕາມດໍາລັດ 130/ນຍ ວ່າດ້ວຍກອງທຶນທາງ , ສ່ວນລາຍລະອຽດແນວໃດໄດ້ຊີ້ນໍາ ພະແນກ ຍທຂ ສົມທົບກັບຫ້ອງການ ຍທຂ ເມືອງ ໄຊເສດຖາ ຄົ້ນຄ້ວາລາຍງານຄະນະນໍານະຄອນຫລວງວຽງຈັນ ພິຈາລະນາແກ້ໄຂຕໍ່ໄປ.

19. <u>ປະຊາຊົນບ້ານໜອງໄຮ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສະເໜີການເກັບຄ່າ ຝາກລົດຕາມແຄມທາງ ຫຼືຕາມສະຖານທີ່ ອະນຸຍາດໃຫ້ຈອດແມ່ນແພງເຊັ່ນ: ລົດໃຫຍ່ ຄັນລະ 10.000 ກີບ.</u>

➢ <u>ຕອບ:</u> ບັນຫາດັ່ງກ່າວ ແມ່ນຄວາມຮັບຜິດຊອບຂອງອົງການປົກຄອງນະຄອນຫລວງວຽງຈັນ.

20. <u>ປະຊາຊົນບ້ານດ່ານຊ້າງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສະເໜີໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ປັບປຸງເສັ້ນທາງຄືນເພາະວ່າລົດຕິດຫຼາຍໃນເຂດສາມແຍກ, ສີ່ແຍກເຮັດໃຫ້ ການສັນຈອນແອອັດ ແລະ ສະເໜີໃຫ້ປັບປຸງລະບົບທໍ່ລະບາຍນໍ້າຂອງສອງຟາກທາງ ເພື່ອບໍ່ໃຫ້ມີນໍ້າຖ້ວມໃນເວລາ ຝົນຕົກ.</u>

➢ <u>ຕອບ:</u> ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ເຫັນວ່າການສະເໜີຂອງປະຊາຊົນແມ່ນຄວາມເປັນຈິງຜ່ານມາກະຊວງ ຍທຂ ໄດ້ສົມທົບກັບອົງການ JICA ແລະ ພາກສ່ວນກ່ຽວຂ້ອງຂອງອົງການປົກຄອງນະຄອນຫລວງວຽງຈັນ ສຶກສາ, ສໍາຫລວດ, ອອກແບບ ປັບປຸງຜັງເມືອງລວມນະຄອນຫລວງວຽງຈັນ ເປັນສະບັບທີ 3, ປະຈຸບັນໄດ້ສະເໜີຜ່ານສະພາປະຊາຊົນນະຄອນຫລວງແລ້ວ ແລະ ນໍາສະເໜີຄະນະພັກຄະນະນໍານະຄອນຫລວງພິຈາລະນາ, ພາຍຫລັງໄດ້ຮັບການເຫັນດີແລ້ວຈະໄດ້ນໍາສະເໜີລັດຖະບານ ແລະ ສະພາແຫ່ງຊາດພິຈາລະນາອະນຸມັດ ແລ້ວຈະເປັນບ່ອນອີງພື້ນຖານໃຫ້ແກ່ການພັດທະນາເສດຖະກິດ ແລະ ປັບປຸງພື້ນຖານໂຄງລາງຮອບດ້ານຂອງນະຄອນຫລວງວຽງຈັນ ໃຫ້ແທດເໝາະກັບການຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດສັງຄົມໃນໄລຍະໃໝ່. ຜ່ານມາລັດຖະບານ ໄດ້ຖືເອົາບັນຫາການແກ້ໄຂອຸປະຕິເຫດຕາມທ້ອງຖະໜົນ ແລະ ແກ້ໄຂລົດຕິດ ໃນນະຄອນຫລວງວຽງຈັນ ແລະ ບັນດາຕົວເມືອງໃຫ່ຍເປັນຍຸດທະສາດ ແລະ ນະໂຍບາຍແຫ່ງຊາດ ໄດ້ແຕ່ງຕັ້ງຄະນະຊີ້ນໍາລະດັບຊາດ ແລະ ຄະນະຮັບຜິດຊອບຄົ້ນຄ້ວາແກ້ໄຂບັນຫາດັ່ງກ່າວຄົບຊຸດ ປະຈຸບັນພວມດໍາເນີນການ, ນອກຈາກນັ້ນ ຍັງໄດ້ດໍາເນີນໂຄງການລັກສະນະກວມລວມແບບຍືນຍົງ ແລະ ລັກສະນະສະເພາະປະກອບສ່ວນໃນການແກ້ໄຂບັນຫາການສັນຈອນແອອັດໃນນະຄອນຫລວງ ເຊັ່ນ: ໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງນະຄອນຫລວງວຽງຈັນໃນຕົ້ນປີ 2018 ໂດຍໄດ້ຮັບທຶນກູ້ຢືມ ແລະ ຊ່ວຍເຫລືອລ້າຂອງອົງການການເງິນສາກົນໃນມູນຄ່າ 100 ລ້ານໂດລາສະຫະລັດ; ການປັບປຸງລະບົບແລ່ນລົດເມສາທາລະນະໄດ້ເພີ່ມສາຍທສງເດີນລົດເມໃໝ່ຈໍານວນໜຶ່ງ ໃນນະຄອນຫລວງວຽງຈັນ ໂດຍໄດ້ຮັບການຊ່ວຍເຫລືອລົດເມຈາກລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ຈໍານວນໜຶ່ງ; ປັບປຸງຈັດສັນສະຖານີຈອດລົດເມ ໃຫ້ໄດ້ມາດຕະຖານ ແລະ ປັບປຸງບ່ອນນັ່ງລໍຖ້າລົດເມຈໍານວນໜຶ່ງໃຫ້ດີຂຶ້ນກວ່າເກົ່າ. ນອກຈາກນັ້ນໄດ້ປັບປຸງບ່ອນຈອດລົດສາທາລະນະ ແລະ

ປັບປຸງເສັ້ນທາງຄົນຍາງໃນຕົວເມືອງນະຄອນຫລວງ (ຄຸ້ມເມືອງເກົ່າ) ໂດຍໄດ້ຮັບການຊ່ວຍເຫລືອຈາກອົງການ JICA.

21. <u>ພະນັກງານຢູ່ບ້ານພະຂາວ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສະເໜີກະຊວງໂຍທາທິການ ແລະ ຂົນສົ່ງ (ກົມການບິນພົນລະເຮືອນ) ບັນທຶກ ແລະສັງລວມກ່ຽວກັບ ສາຍການບິນທີ່ບິນຜ່ານປະເທດລາວເຮົາ ແລະ ການເກັບຄ່າບິນຜ່ານນ່ານຟ້າ ຂອງ ສປປ ລາວ ເຮົາແມ່ນເກັບແນວໃດ? ຄືບໍ່ມີການສະຫຼຸບສັງລວມ ແລະ ລາຍງານ.</u>

➢ <u>ຕອບ:</u> ກອງຈະລາຈອນທາງອາກາດລາວ, ກະຊວງ ຍທຂ ໄດ້ເຮັດໜ້າທີ່ບໍລິການບັນຊາເຮືອບິນ ເຂົ້າ-ອອກ, ຂຶ້ນ-ລົງ ແລະ ບິນຜ່ານໜ່ານຟ້າ ການເຮັດໜ້າທີ່ດັ່ງກ່າວແມ່ນປະຕິບັດຕາມລະບຽບມາດຕາຖານຂອງກົມການບິນພົນລະເຮືອນ ກໍຄືອົງການ-ການບິນພົນລະເຮືອນສາກົນວາງອອກ. ແຕ່ລະປີມີເຮືອບິນ-ບິນຜ່ານເພີ່ມຂຶ້ນຄື : ສົກປີ 2014-2015 ຈຳນວນ 233,314 ຖ້ຽວ, ສົກປີ 2015-2016 ຈຳນວນ 268,727 ຖ້ຽວບິນ. ເພື່ອໃຫ້ສາມາດສະໜອງການບໍລິການຈະລາຈອນທາງອາກາດ ກອງພວກເຮົາໄດ້ສະເໜີປະກອບ ແລະ ກໍ່ສ້າງພະນັກງານບັນຊາຈະລາຈອນ, ຂ່າວສານການບິນ,ສື່ສານການບິນ,ແຜນບິນ ແລະ ໜ້າວຽກອື່ນໆ ທັງໝົດແມ່ນເປັນພະນັກງານຕາມສັນຍາ, ຄຽງຄູ່ກັນນັ້ນ, ກໍ່ໄດ້ສະເໜີໂຄງການຈັດຊື້ຕິດຕັ້ງໃໝ່ບັນດາລະບົບວິທະຍຸບໍລິການ-ການບິນ ແລະ ໂຄງການສໍາປະທານການສ້ອມແປງບໍາລຸງຮັກສາບັນດາລະບົບວິທະຍຸທີ່ເຕັກໂນໂລຊີສູງຈຳນວນນຶ່ງໃຫ້ບໍລິສັດຊີໄອທີ. ຍ້ອນປະຕິບັດຄືແນວນັ້ນຈຶ່ງສາມາດເຮັດໃຫ້ການບໍລິການມີຄວາມສະດວກ,ວ່ອງໄວ ແລະ ປອດໄພ ລວມທັງສາມາດເກັບລາຍຮັບໃນແຕ່ປີເພີ່ມຂຶ້ນຄື: ໃນສົກປີ 2009-2010 ວາງແຜນສ້າງລາຍຮັບ 25 ລ້ານໂດລາສະຫະລັດ, ປະຕິບັດໄດ້ 27 ລ້ານໂດລາສະຫະລັດ, ສົກປີ 2010-2011 ວາງແຜນ 25,5 ລ້ານໂດລາສະຫະລັດ, ປະຕິບັດໄດ້ 29 ລ້ານໂດລາສະຫະລັດ, ໃນສົກປີ 2011-2012 ວາງແຜນສ້າງລາຍຮັບ 25,5 ລ້ານໂດລາສະຫາລັດ, ປະຕິບັດໄດ້ 32,73 ລ້ານໂດລາສະຫາລັດ, 2012-2013 ວາງແຜນການ 30 ລ້ານໂດລາສະຫາລັດ, ປະຕິບັດໄດ້ 42 ລ້ານໂດລາສະຫາລັດ, ສົກປີ 2013-2014 ວາງແຜນການ 45 ລ້ານໂດລາ ປະຕິບັດໄດ້ 46,30 ລ້ານໂດລາສະຫາລັດ, ສົກປີ 2014-2015 ວາງແຜນການ 45 ລ້ານໂດລາປະຕິບັດໄດ້ 61,83 ລ້ານໂດລາສະຫາລັດ, 2015-2016 ວາງແຜນການ 61 ລ້ານ ປະຕິບັດໄດ້ 79,5 ລ້ານໂດລາ. ເຖິງວ່າການເກັບລາຍຮັບໄດ້ເພີ່ມຂຶ້ນໃນແຕ່ລະປີ ແຕ່ຍັງມີໜີ້ຕ້ອງຮັບຈຳນວນ 30 ກວ່າລ້ານໂດລາສະຫາລັດ.

ໃນການເກັບລາຍຮັບຄ່າທຳນຽມ ແລະ ບໍລິການບິນຜ່ານໃນຕົວຈິງແມ່ນໄດ້ປະຕິບັດຄື: ກອງຈະລາຈອນທາງອາກາດລາວ ເປັນຜູ້ບໍລິການບັນຊາເຮືອບິນ-ບິນຜ່ານ, ເປັນຜູ້ຮັບຜິດຊອບລະບົບການເຮັດບັນຊີລາຍຮັບ. ສຳລັບການຄຸ້ມຄອງບັນຊີລາຍຮັບແມ່ນກົມບໍລິການ, ທະນະຄານແຫ່ງ ສປປ ລາວ ແລະກົມຄຸ້ມຄອງຊັບສິນເປັນຜູ້ສົ່ງມອບລາຍຮັບດັ່ງກ່າວເຂົ້າງົບປະມານແຫ່ງລັດ. ສະຫຼຸບແລ້ວຍັງຫລາຍບັນຫາຈະຕ້ອງໄດ້ປັບປຸງແກ້ໄຂເປັນຕົ້ນ ກົນໄກການການຄຸ້ມຄອງບໍລິຫານວຽກງານ ປັດຈຸບັນບໍລິການຄືວິສາຫະກິດ ແຕ່ລະບົບການຄຸ້ມຄອງການເງິນຍັງເປັນແບບບໍລິຫານລັດ. ລະບົບການອອກໃບເກັບເງິນຍັງບໍ່ທັນສະໃໝ, ພະນັກງານບັນຊີບໍທັນເກັ່ງດ້ານພາສາອັງກິດ, ການສະຫລຸບຂໍ້ມູນຖ້ຽວບິນຍັງບໍ່ຊັດເຈນ. ເພື່ອແກ້ໄຂບັນຫາດັ່ງກ່າວ ຂ້າງເທິງທາງກະຊວງການເງິນໄດ້ແຕ່ງຕັ້ງຄະນະສະເພາະກິດຂຶ້ນເພື່ອກວດກາຄືນການຈັດຕັ້ງປະຕິບັດເກັບລາຍຮັບບິນຜ່ານ. ປັດຈຸບັນຄະນະດັ່ງກ່າວກຳລັງຈະສະຫຼຸບລາຍງານ ແລະ ສະເໜີທິດທາງແກ້ໄຂ. ພ້ອມດຽວກໍ່ໄດ້ອະນຸມັດທຶນເພື່ອຈັດຊື້ລະບົບເກັບເງິນທັນສະໃໝເພື່ອເປັນເຄື່ອງມືຮັບໃຊ້ໃນການເກັບເງິນຄ່າບໍລິການໃຫ້ມີປະສິດທິຜົນສູງ, ໂປ່ງໃສ, ສາມາດກວດສອບໄດ້.

ປັດຈຸບັນກຳລັງດຳເນີນເອກະສານເພື່ອນຳເຂົ້າອຸປະກອນເຕັກນິກຕ່າງໆ ຄາດວ່າລະບົບນີ້ຈະສາມາດນຳໃຊ້ໃນເດືອນມິຖຸນາ 2018 ນີ້.

22. <u>ປະຊາຊົນບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບການກໍ່ສ້າງນ້ຳພຸ ຢູ່ເຂດ ບ້ານຊຽງຍືນ ບໍ່ປະຕິບັດຕາມແບບແຜນການກໍ່ສ້າງ ແລະ ແຜນທີ ທີ່ໄດ້ກຳນົດໄວ້ ແລະເຮັດໃຫ້ສະຖານ ທີ່ດັ່ງກ່າວກາຍເປັນບ່ອນຂາຍເຄື່ອງ ແລະ ເຮັດໃຫ້ການສັນຈອນຂອງປະຊາຊົນ ພົບຄວາມຫຍຸ້ງຍາກ. ສະນັ້ນ, ສະເໜີພາກ ສ່ວນທີ່ກ່ຽວຂ້ອງ ລົງຕິດຕາມ, ກວດກາ ແລະ ແກ້ໄຂບັນຫານີ້ດ້ວຍ.</u>

➢ <u>ຕອບ:</u> ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ໃນວັນທີ 29/9/2017 ວິຊາການຂະແໜງຄຸ້ມຄອງເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງລົງກວດກາເຫັນວ່າບໍລິສັດໄດ້ເລີ່ມກໍ່ສ້າງປັບປຸງແລ້ວ. ດ້ວຍເຫດນັ້ນຈຶ່ງໄດ້ເຮັດບົດບັນທຶກກ່າວເຕືອນ ໃຫ້ຢຸດຕິການກໍ່ສ້າງໄວ້ກ່ອນ. ມາຮອດວັນທີ 23/10/2017 ພະແນກ ຍທຂ ນະຄອນຫລວງ ຈຶ່ງໄດ້ເຊີນພາກສ່ວນກ່ຽວຂ້ອງມາປະຊຸມປຶກສາຫາລືກ່ຽວກັບການສະເໜີຂອງບໍລິສັດ ແລະ ກອງປະຊຸມ ກໍ່ໄດ້ຕົກລົງເຫັນດີ ໃຫ້ປັບປຸງໄປຕາມແຜນຜັງທີ່ໄດ້ຮັບອະນຸຍາດໃນເບື້ອງຕົ້ນ. ຕໍ່ມາພະແນກ ໂຍທາທິການ ແລະ ຂົນສົ່ງ.ນວ ໄດ້ອອກແຈ້ງການໃຫ້ຢຸດຕິການກໍ່ສ້າງ (ປັບປຸງ) ໄວ້ກ່ອນ ຕາມແຈ້ງການສະບັບເລກທີ 5023/ຍທຂ.ນວ, ລົງວັນທີ 15/11/2017 ຈົນກວ່າຈະມີທິດຊີ້ນຳຈາກຂັ້ນເທິງ, ຫຼັງຈາກນັ້ນວິຊາການຂະແໜງຄຸ້ມຄອງເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມກໍ່ໄດ້ຕິດຕາມເປັນປະຈຳ ແລະ ເຫັນວ່າທາງບໍລິສັດແມ່ນສືບຕໍ່ກໍ່ສ້າງຕາມປົກກະຕິຈົນສຳເລັດ ໂດຍບໍ່ປະຕິບັດຕາມແຈ້ງການທີ່ກ່າວມາຂ້າງເທິງນັ້ນ. ມາຮອດປະຈຸບັນທາງບໍລິສັດແມ່ນໄດ້ເປີດບໍລິການແລ້ວ. ຕໍ່ມາໄດ້ມີໜັງສືທາງລັດຖະການຈາກຫ້ອງວ່າການນະຄອນຫຼວງວຽງຈັນ ເຖິງພະແນກ ໂຍທາທິການ ແລະ ຂົນສົ່ງນະຄອນຫຼວງວຽງຈັນ ສະບັບເລກທີ 2008/ຫວກ.ນວ ລົງວັນທີ 19/12/2017 ເນື້ອໃນເອກະສານແມ່ນ ໃຫ້ປະຕິບັດຕາມແຈ້ງການຜົນຂອງກອງປະຊຸມເຈົ້າຄອງ-ຮອງເຈົ້າຄອງ ນະຄອນຫຼວງວຽງຈັນ ສະບັບເລກທີ 1859/ຫວກ.ນວ ລົງວັນທີ 22/11/2017 ເຊິ່ງມີເນື້ອໃນເອກະສານດັ່ງນີ້:

1. ແມ່ນໃຫ້ເອົາຄຸນລັກສະນະຂອງນ້ຳພຸອອກມາເວົ້າ ມາປັບປຸງເຊັ່ນ: ນ້ຳພຸແມ່ນການຕ້ອນຮັບ, ຂໍ່ານັບຊົມ ເຊີຍແບບບັ້ງໄຟດອກ ແຕ່ມີຄວາມຊຸ່ມເຢັນ, ຕ້ອງຢູ່ບ່ອນເປີດແປນ, ກາງແຈ້ງ, ໜ້າບ້ານ ແລະ ເປັນສີບ້ານ ສີເມືອງ ບໍ່ແມ່ນຈະເຮັດເປັນເຮືອນບົດບັງໄວ້.
2. ຕ້ອງຢຶດເອົາຫຼັກການຂອງຜູ້ອອກແບບກ່ຽວກັບນ້ຳພຸ ທີ່ເກົ່າທີ່ສຸດ.
3. ໃຫ້ສະມາຄົມສະຖາປານິກ ແລະ ປະຊາຊົນທີ່ຢູ່ບໍລິເວນອ້ອມຮອບນ້ຳພຸນັ້ນມາຄົ້ນຄ້ວາອອກແບບໃໝ່ກວມລວມທົ່ວບໍລິເວນນ້ຳພຸ ທີ່ເປັນມໍລະດົກນີ້ໃຫ້ມີຄວາມໂດດເດັ່ນ, ສະຫງ່າ, ສວຍງາມ ດຶງດູດມວນຊົນໄປທ່ຽວຊົມພັກຜ່ອນຢ່ອນອາລົມໄດ້.
4. ສຳລັບເງິນບູລະນະຮັກສາສວນນ້ຳພຸ ແລະ ພື້ນທີ່ອ້ອມຂ້າງ, ອ້ອມຮອບນ້ຳພຸກໍ່ໃຫ້ບັນດາເຈົ້າຂອງເຮືອນອ້ອມຂ້າງນ້ຳພຸສົມທົບຈ່າຍນຳກັນ.

ຕໍ່ມາວັນທີ 2/3/2018 ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການແກ້ໄຂບັນຫາການຮ້ອງຟ້ອງຂອງປະຊາຊົນທີ່ອາໃສຢູ່ບໍລິເວນອ້ອມຮອບສວນນ້ຳພຸ ເພື່ອຫາວິທີແກ້ໄຂຮ່ວມກັນ ໂດຍການເປັນປະທານ ຂອງທ່ານນາງ ບົວລອນ ວົງດາລາແສນ ເຈົ້າເມືອງໆຈັນທະບູລີ ໂດຍມີພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນທີ່ອາໃສຢູ່ບໍລິເວນອ້ອມຮອບສວນນ້ຳພຸເຂົ້າຮ່ວມ ແລະໄດ້ແນະນຳໃຫ້ບໍລິສັດ ປັບປຸງແກ້ໄຂບັນຫາຜົນກະທົບຕໍ່ປະຊາຊົນໃຫ້ສຳເລັດ.

23. <u>ປະຊາຊົນບ້ານໂພນງາມ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສະເໜີສະພາປະຊາຊົນເຂດ 1 ນະຄອນ ຫຼວງວຽງຈັນ ແລະພະແນກໂຍທາທິການ ແລະ ຂົນສົ່ງ ກ່ຽວກັບການສ້ອມແປງເສັ້ນທາງແຕ່ບ້ານເວີນຄຳ, ບ້ານໂພນ</u>

ໄຊ ແລະບ້ານໂພນງາມ ເພາະວ່າເສັ້ນທາງດັ່ງກ່າວແມ່ນເປ່ເພມາດົນແລ້ວ ແຕ່ບໍ່ມີການສ້ອມແປງ ເຮັດໃຫ້ການສັນຈອນມີຄວາມຫຍຸ້ງຍາກ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ເສັ້ນທາງດັ່ງກ່າວໄດ້ມີການກໍ່ສ້າງລະບົບນໍ້າປະປາແຕ່ແສນດິນ ຫາເວີນຄໍາ ເຮັດໃຫ້ເສັ້ນທາງທີ່ເປ່ເພຢູ່ແດ່ແລ້ວຍິ່ງເປ່ເພຫຼາຍ, ທາງພະແນກ ຍທຂ ນະຄອນຫຼວງວຽງຈັນ ໄດ້ສົມທົບກັບ ຫ້ອງການ ຍທຂ ເມືອງນາຊາຍທອງ ແລະ ພາກສ່ວນກ່ຽວຂ້ອງປຶກສາຫາລືກັບໂຄງການກໍ່ສ້າງລະບົບທໍ່ສົ່ງນໍ້າປະປາແຕ່ແສນດິນ ຫາ ເວີນຄໍາແລ້ວ ແລະທາງໂຄງການຈະສ້ອມແປງຄືນໃຫ້ຢູ່ໃນສະພາບດີ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນໍາໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ສົມທົບກັບ ຫ້ອງການ ຍທຂ ເມືອງ ເພື່ອກວດກາຈັດຕັ້ງປະຕິບັດໂຄງການດັ່ງກ່າວໃຫ້ຖືກຕ້ອງຕາມສັນຍາທີ່ໄດ້ຕົກລົງກັນ ລວມທັງໃຫ້ສ້ອມແປງທາງທີ່ເປ່ເພຍ້ອນການປະຕິບັດໂຄງການດັ່ງກ່າວ.

24. ປະຊາຊົນບ້ານເກົ້າລ້ຽວ ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບບັນຫາ ປະຊາຊົນ 03 ຄອບຄົວ ທີ່ຖືກຜົນກະທົບຈາກໂຄງການຕະຝັ່ງເຈື່ອນ ຢູ່ເຂດບ້ານເກົ້າລ້ຽວ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ບໍ່ທັນໄດ້ຮັບຄ່າຊົດເຊີຍ. ສະນັ້ນ, ຈຶ່ງສະເໜີພາກສ່ວນທີ່ກ່ຽວຂ້ອງກວດກາ ແລະ ແກ້ໄຂ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ:

1. ຈໍານວນ 3 ຄອບຄົວທີ່ອ້າງວ່າຍັງບໍ່ທັນໄດ້ຮັບເງິນຄ່າຊົດເຊີຍນັ້ນແມ່ນມີຄອບຄົວໃດແດ່ ແລະ ແມ່ນເງິນຊົດເຊີຍສິ່ງປຸກສ້າງ ຫຼື ເງິນຊົດເຊີຍທີ່ດິນ ກະລຸນາຊີ້ແຈງລະອຽດດ້ວຍ ເພາະທາງໂຄງການ ປ້ອງກັນຕະຝັ່ງເຈື່ອນ ແລະ ພັດທະນາແຄມຂອງ ກໍ່ຄືພະແນກ ຍທຂ ນະຄອນຫຼວງວຽງຈັນ ພວກເຮົາຈະໄດ້ຕອບໃຫ້ຖືກຕ້ອງ ແລະ ຈະແຈ້ງຕົງປະເດັນ.
2. ໃນເມື່ອໄດ້ຂໍ້ມູນລະອຽດຂອງ 3 ຄອບຄົວນີ້ແລ້ວກະລຸນາແຈ້ງມາຍັງ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ຂອງພວກເຮົາດ້ວຍເພື່ອທາງພວກເຮົາຈະໄດ້ກຽມເອກະສານຕອບກັບຄືນມາຍັງທ່ານ ເພື່ອໃຫ້ທ່ວງທັນເວລາ.

25. ປະຊາຊົນບ້ານ ໜອງພະຍາ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ ສະເໜີບັນຫາສະພາບເສັ້ນທາງແຕ່ ສີ່ແຍກໄຟແດງ ບ້ານ ຕານມີໄຊ ຫາ ບ້ານ ສີເກີດເປ່ເພ, ເປັນຂຸມ ແລະ ມີຂີ້ຝຸ່ນຫຼາຍເຮັດໃຫ້ການສັນຈອນ ໄປມາຂອງປະຊາຊົນລໍາບາກ, ຊຶ່ງໃນປີ 2016 ໄດ້ມີ ບໍລິສັດ ຕັງຈະເລີນ ມາຮັບເໝົາກໍ່ສ້າງເສັ້ນທາງດັ່ງກ່າວ ແຕ່ມາຮອດປະຈຸບັນເສັ້ນທາງກໍຍັງບໍ່ທັນສໍາເລັດ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ໂຄງການດັ່ງກ່າວເລີ່ມລົງມືແຕ່ວັນທີ 13 ກັນຍາ 2016 ມາຮອດປະຈຸບັນສາເລັດ 33 ເປີເຊັນ ປະຈຸບັນກາລັງຮີບຮ້ອນກໍ່ສ້າງ ແລະ ຄາດຄະເນວ່າ ເດືອນ ກັນຍາ 2018 ຈະໃຫ້ສາເລັດການເທເບຕົງໜ້າທາງ ແລະ ຕາມແຜນການຈະໃຫ້ສາເລັດການກໍ່ສ້າງຕາມສັນຍາ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ຄະນະນໍາກະຊວງ ຍທຂ ໄດ້ລົງຕິດຕາມກວດກາຫລາຍຄັ້ງ ແລະ ມອບໃຫ້ກົມຂົວທາງ ລົງຕິດຕາມ ແລະ ຊີ້ນໍາໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ເພື່ອຈັດຕັ້ງປະຕິບັດໂຄງການດັ່ງກ່າວຕາມສັນຍາ, ຖືກຕອງຕາມມາດຕະຖານເຕັກນິກຮັບປະກັນຄຸນນະພາບ, ສໍາເລັດຕາມແຜນການ ແລະ ຮັບປະກັນໃຫ້ມີສະພາບແວດລ້ອມທີ່ດີໃນເວລາດໍາເນີນການກໍ່ສ້າງຕໍ່ກັບປະຊາຊົນທີ່ຢູ່ຕາມສອງຝາກທາງ ໃນເວລາດໍາເນີນໂຄງການ.

26. ປະຊາຊົນບ້ານດົງໂພສີ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ສະເໜີໃຫ້ພະແນກ ຍທຂ ນະຄອນຫຼວງວຽງຈັນ ພິຈາລະນາ ແລະ ແກ້ໄຂ ສະພາບເສັ້ນທາງຢູ່ເຂດເມືອງຫາດຊາຍຟອງ ເພາະເຫັນວ່າ ເປ່ເພຫຼາຍເຮັດໃຫ້ການສັນຈອນໄປມາ ມີຄວາມຫຍຸ້ງຍາກ ແລະ ເວລາຝົນຕົກໜັກແມ່ນມີນໍ້າຖ້ວມ.

➢ ຕອບ: ຄຳຕອບຄື ຂໍ້ 9.

27. ປະຊາຊົນບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນສະເໜີພະແນກ ຍທຂ ນະຄອນຫຼວງລົງຕິດຕາມ ແລະ ກວດກາລະບົບນໍ້າປະປາຢູ່ເຂດບ້ານຫ້ວຍຫົງເພາະຜ່ານມາເປັນເວລາ 3-4 ປີ ແລ້ວນໍ້າປະປາບໍ່ມາ , ບາງເຂດມີແຕ່ທໍ່ບໍ່ມີນໍ້າເລີຍປະຊາຊົນເດືອດຮ້ອນຫຼາຍ ທຸກມື້ນີ້ປະຊາຊົນໄດ້ຂຸດນໍ້າບາດານໃຊ້ເອງ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ປະຈຸບັນລັດວິສາຫະກິດນໍ້າປະປານະຄອນຫຼວງໄດ້ແກ້ໄຂເປັນທີ່ຮຽບຮ້ອຍແລ້ວ ໂດຍການປັບປຸງລະບົບທໍ່ພາຍໃນ ແລະຊໍານໍ້າທໍ່ສົ່ງ ຈາກໂຮງງານຜະລິດນໍ້າປະປາດົງໝາກຄາຍ 2 ເຂົ້າໃສ່ໃນລະບົບທໍ່ແຈກຢາຍເລີຍ ຖືວ່ານໍ້າປະປາມີເປັນປົກກະຕິແລ້ວ.

28. ປະຊາຊົນບ້ານໜອງແວງ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ສະເໜີເອົານໍ້າປະປາເຂົ້າບ້ານ ປະຈຸບັນປະຊາຊົນໃນບ້ານຍັງໃຊ້ນໍ້າສ້າງ ເຫັນວ່າມີຄວາມເປິເປື້ອນ. ສະນັ້ນ, ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ລົງກວດກາ ແລະສະໜອງນໍ້າປະປາໃຫ້ດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງລັດວິສາຫະກິດນໍ້າປະປາ ນະຄອນຫລວງ ໃຫ້ຊາບວ່າ: ປະຈຸບັນລັດວິສາຫະກິດນໍ້າປະປານະຄອນຫຼວງ ແມ່ນໄດ້ເອົາເຂົ້າແຜນການປີ 2018, ແຕ່ຍ້ອນວ່າບ້ານດັ່ງກ່າວຢູ່ຫ່າງໄກຕ້ອງໄດ້ວາງທໍ່ສົ່ງ, ທໍ່ແຈກ ເຊິ່ງໃຊ້ທຶນສູງສົມຄວນ ຕາມແຜນແມ່ນທ້າຍປີ 2018 ຈຶ່ງຈະສໍາເລັດ ເພື່ອດຶງນໍາຈາກໂຮງງານນໍ້າປະປາທ່າເດື່ອ ໄລຍະ I ທີ່ກໍ່ສ້າງສໍາເລັດ ໃນປີ 2017 ມາໃຫ້ບ້ານ ໜອງແວງ ນໍາໃຊ້ . ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນໍາໃຫ້ພະແນກ ຍທຂ ສົມທົບກັບລັດວິສາຫະກິດນໍ້າປະປານະຄອນຫລວງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ສໍາເລັດຕາມແຜນການ.

29. ພະນັກງານຢູ່ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີ 2 ບັນ ຫາດັ່ງນີ້: 1).ການສ້ອມປຸງເສັ້ນທາງແຕ່ບ້ານໂພນພະເນົາ ຮ່ອມ 15 ຂ້າງວິທະຍາໄລໂລໂກສ ຫາໂຮງແຮມດາວວຽງເພາະເປ່ຫຼາຍ, ສະເໜີພາກສ່ວນກ່ຽວຂ້ອງແກ້ໄຂດ່ວນ; 2).ເສັ້ນທາງຮ່ອມກົມໃຫ່ຍພາລາທິການ (ທາງລັດມາຫຼັກ 6 ຫ້ອງວ່າການສູນກາງພັກ) ສະເໜີບໍ່ໃຫ້ລົດໜັກ ຫຼືລົດ 10 ລໍ້ທຽວໄດ້ບໍ່? ເພາະວ່າເປັນລົດໃຫ່ຍ ແລະ ແລ່ນໄວ ທາງເສັ້ນນີ້ເປັນທາງແຄບເຫັນແລ້ວບໍ່ປອດໄພ ຕໍ່ຜູ້ສັນຈອນໄປມາຕາມເສັ້ນທາງດັ່ງກ່າວ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ບັນຫາທີ 1: ເສັ້ນທາງດັ່ງກ່າວແມ່ນໄດ້ຮັບການປັບປຸງເປັນທາງປູຢາງສອງຊັ້ນ ສໍາເລັດແລ້ວດ້ວຍງົບປະມານຈາກກອງທຶນທາງ ກະຊວງ ຍທຂ ແລະ ທຶນສົມທົບຈາກປະຊາຊົນ ແລະຜູ້ປະກອບການທີ່ຢູ່ໄກ້ຄຽງ. ປະຈຸບັນການສັນຈອນໄປມາສະດວກສະບາຍແລ້ວ; ບັນຫາທີ 2: ເສັ້ນທາງດັ່ງກ່າວ ຜ່ານມາພະແນກ ຍທຂ ນະຄອນຫລວງໄດ້ຕິດຕັ້ງປ້າຍກໍານົດທິດທາງ ແລະປ້າຍກໍານົດຄວາມໄວ ຈາກນັ້ນກໍ່ໄດ້ມອບໃຫ້ເຈົ້າໜ້າທີ່ຕໍາຫຼວດຈະລາຈອນເມືອງໄຊເສດຖາ ຕິດຕາມກວດກາ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ກົມຂົນສົ່ງ ລົງສົມທົບກັບພະແນກ ຍທຂ ນະຄອນຫລວງວຽງຈັນ ,ຫ້ອງການ ຍທຂ ເມືອງໄຊເສດຖາ ແລະ ເຈົ້າໜ້າທີ່ຕໍາຫຼວດຈະລາຈອນລົງກວດກາເບິ່ງສະຖານທີ່ຕົວຈິງ ວ່າມີຄວາມຫຍຸ້ງຍາກແນວໃດ ແລ້ວພ້ອມກັນຄົ້ນຄ້ວາວິທີແກ້ໄຂໃຫ້ຖືກມາດຕະຖານເຕັກນິກ ແລະ ເໝາະສົມກັບສະພາບຕົວຈິງຕໍ່ໄປ.

30. ປະຊາຊົນບ້ານໂນນແກ້ວ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສະເໜີໃຫ້ມີການຂຶ້ນທະບຽນ, ຕິດປ້າຍລົດໄຖນາໃນທົ່ວປະເທດ ແລະ ເຮັດປ້າຍເປັນສີສະທ້ອນ ເພື່ອຄວາມປອດໄພໃນການສັນຈອນໃນເວລາກາງຄືນ. ສະນັ້ນ, ສະເໜີພາກສ່ວນທີ່ກ່ຽວຂ້ອງພິຈາລະນາດ້ວຍ.

➢ <u>ຕອບ</u>: ປະຈຸບັນ ກະຊວງ ຍທຂ ຄົ້ນຄ້ວາຮ່າງຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນກົນຈັກໜັກ ແລະ ກົນຈັກກະສິກຳ ຄາດວ່າຈະໃຫ້ສຳເລັດຂັ້ນກະຊວງເພື່ອນຳສະເໜີລັດຖະບານພິຈາລະນາອະນຸມັດ ແລະ ຈັດຕັ້ງປະຕິບັດໃນຕົ້ນປີ 2018.

31. <u>ປະຊາຊົນບ້ານວຽງຫີນສູງ, ເມືອງນໍ້າບາກ, ແຂວງຫຼວງພະບາງ ສະເໜີໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ຄົ້ນຄວ້າຄືນບັນຫາການຂົນສົ່ງສິນຄ້າ ຂອງບັນດາປະເທດອ້ອມຂ້າງທີ່ມີຊາຍແດນຕິດຈອດກັບປະເທດລາວ ເພາະວ່າ ລົດສົ່ງສິນຄ້າຂອງປະເທດລາວທີ່ເຂົ້າໄປຕ່າງປະເທດ ແມ່ນບໍ່ໃຫ້ເດີນທາງເກີນຂອບເຂດ ແລະມີລະບຽບການຕ່າງປະເທດກຳນົດ, ແຕ່ລົດຂົນສົ່ງສິນຄ້າຂອງຕ່າງປະເທດ ທີ່ເຂົ້າມາໃນລາວ ແມ່ນສາມາດຂົນສົ່ງແຕ່ເໜືອ ຮອດໃຕ້ໄດ້. ສະນັ້ນ, ຈຶ່ງສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງກວດກາຄືນ ເພື່ອປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ.</u>

➢ <u>ຕອບ</u>: ກ່ຽວກັບການຂົນສົ່ງ ລະຫວ່າງປະເທດ ກັບບັນດາປະເທດເພື່ອນບ້ານ ແມ່ນ ສປປ ລາວ ໄດ້ປະຕິບັດຕາມສັນຍາ ແລະອະນຸສັນຍາວ່າດ້ວຍການຂົນສົ່ງທາງບົກ ທີ່ 2 ຝ່າຍໄດ້ລົງນາມຮ່ວມກັນ ໂດຍມີລາວ-ຫວຽດນາມ, ລາວ-ຈີນ, ລາວ-ໄທ ແລະ ລາວ-ກຳປູເຈຍ. ສັນຍາ ແລະ ອະນຸສັນຍາ ຂົນສົ່ງ 2 ຝ່າຍ ແມ່ນໄດ້ກຳນົດ ໃຫ້ຄູ່ສັນຍາສາມາດໄປມາຫາສູ່ ເຊິ່ງກັນ ແລະ ກັນ ຕາມຄູ່ດ່ານ ແລະ ເສັ້ນທາງ ທີ່ໄດ້ກຳນົດ ຢູ່ໃນສັນຍາ ບົນພື້ນຖານ ຄວາມສະເໝີພາບກັນ.

ສຳລັບການຄຸ້ມຄອງບັນດາລົດຂົນສົ່ງທີ່ເຂົ້າມາຈາກໄທ, ຫວຽດນາມ, ຈີນ ແລະກຳປູເຈຍ ແລ້ວບໍ່ໄປຕາມເສັ້ນທາງທີ່ກຳນົດ ແລະ ເຂົ້າອອກດ່ານຊາຍແດນບໍ່ຖືກຕ້ອງ ແລະ ນຳໃຊ້ເສັ້ນທາງຜ່ານແດນ-ຂ້າມແດນ ບໍ່ໄປຕາມທາງທີ່ກຳນົດໄວ້ໃນສັນຍາ, ອານຸສັນຍາວ່າດ້ວຍ ການຂົນສົ່ງທາງບົກ 2 ຝ່າຍ, ປັດຈຸບັນ ກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ຮ່າງແຈ້ງການ ເພື່ອແຈ້ງໃຫ້ພາກສ່ວນກ່ຽວຂ້ອງຂອງອົງການປົກຄອງທ້ອງຖິ່ນຈັດຕັ້ງປະຕິບັດໃນ ເດືອນມິຖຸນາ 2018 ນີ້ ໂດຍມີເນື້ອໃນດັ່ງນີ້:

- ລົດຂົນສົ່ງຕ່າງປະເທດ ທຸກປະເພດຂອງປະເທດໃດທີ່ເຂົ້າມາ ສປປ ລາວ ຕ້ອງປະຕິບັດຕາມເງື່ອນໄຂ, ລະບຽບການ, ຂໍ້ກຳນົດຂອງສັນຍາ ແລະ ອະນຸສັນຍາຂົນສົ່ງຜ່ານແດນທາງບົກ ທີ່ລັດຖະບານແຫ່ງ ສປປ ລາວ ໄດ້ລົງນາມກັບລັດຖະບານປະເທດນັ້ນຢ່າງເຂັ້ມງວດ. ໂດຍສະເພາະ ການເຂົ້າ-ອອກດ່ານ ແລະ ການນຳໃຊ້ເສັ້ນທາງຜ່ານແດນ ແລະ ຂ້າມແດນ ພາຍໃນ ສປປ ລາວ;
- ບໍ່ອະນຸຍາດໃຫ້ລົດຂົນສົ່ງຕ່າງປະເທດເຮັດການຂົນສົ່ງສິນຄ້າຢູ່ພາຍໃນ ສປປ ລາວ (ລະຫວ່າງ 2 ຈຸດຢ່າງເດັດຂາດ);
- ຫ້າມເຈົ້າຂອງສິນຄ້າ, ບໍລິສັດຂຸດຄົ້ນ, ໂຮງງານ, ໂຮງເລື່ອຍ, ສາງສິນຄ້າ, ບັນດາຜູ້ປະກອບການທຸລະກິດຂົນສົ່ງສິນຄ້າ ຂຶ້ນສິນຄ້າ ແລະ ເຮັດສັນຍາຂົນສົ່ງ ນຳລົດຂົນສົ່ງຕ່າງປະເທດທີ່ເຂົ້າມາຂົນສົ່ງສິນຄ້າຊົ່ວຄາວຢູ່ ສປປ ລາວ ເພື່ອເຮັດການຂົນສົ່ງສິນຄ້າຢູ່ພາຍໃນລະຫວ່າງ 2 ຈຸດ ໃນດິນແດນຂອງ ສປປ ລາວ;
- ໃຫ້ບັນດາຫົວໜ່ວຍທຸລະກິດ, ບໍລິສັດຂຸດຄົ້ນ, ໂຮງງານ, ໂຮງເລື່ອຍ ແລະ ສາງສິນຄ້າໃນຂອບເຂດທົ່ວປະເທດ ຈົ່ງຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
- ມອບໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ນະຄອນຫລວງວຽງຈັນ ເປັນເຈົ້າການປະສານສົມທົບກັບ ເຈົ້າໜ້າທີ່ຕຳຫລວດຈະລາຈອນ ຕິດຕາມກວດກາການເຄື່ອນ ໄຫວລົດຂົນສົ່ງຂອງຕ່າງປະເທດ ໃນທ້ອງຖິ່ນຕົນ ເປັນປົກກະຕິຕໍ່ເນື່ອງ, ຖ້າກໍລະນີກວດເຫັນຜູ້ລະເມີດບໍ່ປະຕິບັດຕາມລະບຽບການ ແລະ ຂໍ້ກຳນົດຕາມສັນຍາ, ອະນຸສັນຍາຂົນສົ່ງທາງບົກ 2 ຝ່າຍ ທີ່ໄດ້ເຊັນກັນແລ້ວ (ຕາມເອກະສານຊ້ອນທ້າຍຄັດຕິດມາພ້ອມນີ້) ໃຫ້ປະຕິບັດຕາມລະບຽບ ແລະ ກົດໝາຍກ່ຽວຂ້ອງຢ່າງເຂັ້ມງວດ.

32. <u>ປະຊາຊົນບ້ານຕານມີໄຊ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສະເໜີບັນຫາກ່ຽວກັບການຄຸ້ມຄອງລາຄາຫ້ອງແຖວໃນຂອບເຂດຕົວເມືອງໃຫ້ສົມຄູ່ກັບຄ່າຄອງຊີບ, ເງິນເດືອນພະນັກງານ ແລະນັກສຶກສາຜູ້ທຸກຍາກ ທີ່ມາແຕ່ຊົນນະບົດ ເພາະເຫັນວ່າຫ້ອງແຖວແມ່ນມີລາຄາສູງຫຼາຍ ຖ້າທຽບໃສ່ຄ່າຄອງຊີບໃນປະຈຸບັນ. ຢາກໃຫ້ກຳ ນົດລາຄາສູງບໍ່ເກີນ 500.000 ກີບ (ຫ້າແສນກີບ ຕໍ່ເດືອນ).</u>

➢ <u>ຕອບ:</u> ບັນຫາດັ່ງກ່າວ ແມ່ນຄວາມຮັບຜິດຊອບຂອງກະຊວງ ອຸດສະຫະກຳ ແລະ ການຄ້າ.

33. <u>ປະຊາຊົນບ້ານຄຳຮຸ່ງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສະເໜີໃຫ້ລັດຖະບານສ້າງທາງເບຕົງ ເຂົ້າແຕ່ລະຮ່ອມຂອງໝູ່ບ້ານທີ່ຢູ່ ນະຄອນຫຼວງວຽງຈັນ.</u>

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ອີງໃສ່ງົບປະມານປະຈຳປີທີ່ໄດ້ຮັບອະນຸມັດມີຈຳນວນຈຳກັດ. ເພື່ອມາແກ້ໄຂດ້ວຍການສ້ອມແປງເສັ້ນທາງບາງເສັ້ນທີ່ມີຄວາມສຳຄັນ, ຈຳເປັນ ແລະຮີບດ່ວນ ກ່ອນ. ຕາມທິດຂອງນະຄອນຫຼວງວຽງຈັນຈະກໍ່ສ້າງເສັ້ນທາງຮ່ອມ ແລະທາງສາຍຫຼັກ ຂອງນະຄອນຫຼວງວຽງຈັນ ໃຫ້ເປັນທາງປູດ້ວຍເບຕົງ, ອັດສະຟານ ແລະ ທາງປູຢາງສອງຊັ້ນເປັນຢ່າງຕ່ຳ, ແຕ່ໃນເງື່ອນໄຂ ແລະ ສະພາບເສດຖະກິດຄືປະຈຸບັນ ຄົງຈະໄດ້ໃຊ້ເວລາອີກຫຼາຍປີສົມຄວນກ່ວາຈະບັນລຸເປົ້າໝາຍດັ່ງກ່າວ.

34. <u>ປະຊາຊົນບ້ານໂຊກຄຳ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີບັນຫາການເກັບຄ່າທາງແພງ ຖ້າທຽບໃສ່ໄລຍະຜ່ານມາ ແຕ່ສະພາບຖະໜົນຫົນທາງພັດບໍ່ມີການສ້ອມແປງ. ສະເໜີໃຫ້ພາກສ່ວນກ່ຽວຂ້ອງ, ກວດກາຄືນ.</u>

➢ ຕອບ: ບັນຫາດັ່ງກ່າວ ແມ່ນຄວາມຮັບຜິດຊອບຂອງກະຊວງ ການເງິນ.

35. <u>ປະຊາຊົນບ້ານອຸດົມພົນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບການສ້າງໄຟອຳນາດຢູ່ທີ່ ສາມແຍກທາງເຂົ້າໜອງແຕ່ງດ່ວນແດ່, ເພາະປັດຈຸບັນນີ້ຮອດມື້ວັນເສົາ-ອາທິດ ຫຼືມື້ວັນສິນວັນພຣະຢູ່ເຂດສາມແຍກ ດັ່ງກ່າວແມ່ນມີລົດຕິດຕະຫຼອດ, ຕິດຂັດໄດ້ໃຊ້ເວລາ 2-3 ຊົ່ວໂມງຈຶ່ງອອກຈາກສະຖານທີ່ດັ່ງກ່າວໄດ້. ຂໍຮ້ອງໃຫ້ ແກ້ໄຂ ດ່ວນເພາະປະຊາຊົນເດືອດຮ້ອນຫຼາຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ສຳລັບການຕິດຕັ້ງໄຟອຳນາດຢູ່ທາງສາມແຍກໜອງແຕ່ງນັ້ນ ແມ່ນກຳລັງທຳການຕິດຕັ້ງ ຄາດວ່າຈະສຳເລັດໃນເດືອນ ເມສາ 2018 ໂດຍແມ່ນທຶນຊ່ວຍເຫລືອຈາກບໍລິສັດລາວເວີລດ໌ຈຳກັດ ຈຳນວນສອງຈຸດຄື ຈຸດສາມແຍກໜອງແຕ່ງ ແລະ ຈຸດທາງແຍກມະຫາວິທະຍາໄລແຫ່ງຊາດ ມູນຄ່າລວມ 70,000 ໂດລາສະຫະລັດ.

36. <u>ປະຊາຊົນບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບການກໍ່ສ້າງຕຶກຕະຫຼາດເຊົ້າໂຕຢູ່ຫຼັງເກົ່າແມ່ນຊັກຊ້າຫຼາຍ. ສະນັ້ນ, ການກໍ່ສ້າງຕຶກຕະຫຼາດເຊົ້າເກົ່າແມ່ນສະມາຄົມຊາວຄ້າຂາຍ ຕະຫຼາດເຊົ້າຂໍສະເໜີກໍ່ສ້າງເອງ ເພາະເຫັນວ່ານັກລົງທຶນແມ່ນເຮັດຊ້າ ແລະທ່ວງດຶງເວລາ. ຈຶ່ງສະເໜີພາກສ່ວນ ທີ່ກ່ຽວຂ້ອງພິຈາລະນາດ້ວຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ໃນໄລຍະຜ່ານມາ ພະແນກ ຍທຂ ນະຄອນຫຼວງວຽງຈັນ ແມ່ນບໍ່ເຄີຍເຂົ້າຮ່ວມໃນການຄົ້ນຄວ້າ ບັນຫາດັ່ງກ່າວເທື່ອ, ມີແຕ່ໄດ້ເຂົ້າຮ່ວມໃນການຕິດຕາມວຽກງານການກໍ່ສ້າງ ອາຄານຕະຫຼາດເຊົ້າ ຊັອບປິງມໍ 8 ຊັ້ນ ໄລຍະ II. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ທົບກັບພະແນກ ຍທຂ ນະຄອນຫລວງວຽງຈັນ ສືບຕໍ່ປະສານກັບພາກສ່ວນກ່ຽວຂ້ອງຂອງອົງການປົກຄອງນະຄອນຫລວງ ນຳສະເໜີການນຳນະຄອນຫລວງ ພິຈາລະນາແກ້ໄຂ.

37. <u>ປະຊາຊົນ ບ້ານຕາດທອງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສະເໜີພາກສ່ວນກ່ຽວຂ້ອງແກ້ໄຂເສັ້ນທາງແຕ່ສາມແຍກເກົ້າລ້ຽວ ຫາ ໂຮງຮຽນຊົນລະປະທານ ເຫັນວ່າເປ່ເພຫຼາຍ ເຮັດໃຫ້ການເດີນທາງໄປມາມີຄວາມຫຍຸ້ງຍາກໃນການນຳໃຊ້ເສັ້ນທາງດັ່ງກ່າວ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ເສັ້ນທາງດັ່ງກ່າວແມ່ນນອນຢູ່ໃນແຜນພັດທະນາດ້ານຄົມມະນາຄົມປີ 2016-2020 ຂອງເມືອງ ສີໂຄດຕະບອງ ແລະ ໄດ້ຮັບອະນຸມັດຈາກສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ສະພາແຫ່ງຊາດແລ້ວ ໃນສົກງົບປະມານປີ 2018. ປະຈຸບັນຢູ່ໃນຂັ້ນຕອນກະກຽມການຈັດຊື້-ຈັດຈ້າງ ຄັດເລືອກເອົາບໍລິສັດຜູ້ຮັບເໝົາ ເພື່ອມາສ້ອມແປງເສັ້ນທາງປູຢາງດັ່ງກ່າວແລະ ຈະໃຫ້ສຳເລັດກ່ອນລະດູຝົນຈະມາເຖິງນີ້. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ຈັດຕັ້ງປະຕິບັດການສ້ອມແປງດັ່ງກ່າວຕາມສັນຍາ, ຖືກຕອງຕາມມາດຕະຖານເຕັກນິກ ຮັບປະກັນຄຸນນະພາບ ແລະ ສຳເລັດຕາມແຜນການ.

38. <u>ປະຊາຊົນບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີບັນຫາການນຳເຂົ້າລົດທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍໂດຍຜ່ານໂຍທາ ແລະໂຍທາແກ້ໄຂເຮັດເອກະສານປອມແປງໃຫ້ຖືກຕ້ອງແລ້ວນຳໄປຂາຍຕໍ່ໃຫ້ປະຊາຊົນ ແລະເອົາໄປໃຫ້ຜູ້ມີອຳນາດໃຊ້ ສະເໜີພາກສ່ວນກ່ຽວຂ້ອງກວດກາບັນຫານີ້ດ້ວຍ.</u>

➢ <u>ຕອບ</u>: ລົດທີ່ນຳເຂົ້າຕ້ອງຂຶ້ນທະບຽນ ທີ່ກອງຄຸ້ມຄອງພາຫະນະ ແລະການຂັບຂີ່, ພະແນກ ຍທຂ ແຂວງແລະນະຄອນຫລວງ ຕາມມາດຕາ 12 ແລະ ມາດຕາ 17 ຂອງຂໍ້ກຳນົດ ສະບັບເລກທີ 829/ຄຂປກ ລົງວັນທີ 15/3/2000 ວ່າດ້ວຍການຂຶ້ນທະບຽນ ແລະ ຄຸ້ມຄອງຍານພາຫະນະຂົນສົ່ງທາງບົກ ຈຶ່ງສາມາດອອກທະບຽນ ແລະປ້າຍໄດ້. ສຳລັບບັນຫາການນຳເຂົ້າລົດບໍ່ຖືກຕ້ອງມີການປອມແປງເອກະສານ ແລ້ວນຳໄປຂຶ້ນທະບຽນໃນທົ່ວປະເທດນັ້ນ ແມ່ນມີຄວາມເປັນຈິງແທ້, ໄລຍະຜ່ານມາ ກົມຂົນສົ່ງ ໄດ້ມີການກວດກາຕົວຈິງ ແລະ ເກັບກຳສະຖິຕິຍານພາຫະນະທີ່ຕ້ອງສົງໄສ ໂດຍສະເພາະປະເພດລົດຍີ່ຫໍ້ດັ່ງທີ່ມີລາຄາແພງ, ສະເພາະໃນນະຄອນຫຼວງວຽງຈັນຜ່ານການກວດກາຕົວຈິງໄດ້ພົບເຫັນຍານພາຫະນະທີ່ຂຶ້ນທະບຽນແລ້ວແຕ່ເປັນເອກະສານປອມ ຈຳນວນ 86 ຄັນ.

ກ່ຽວກັບແກ້ໄຂບັນຫາທີ່ສະເໜີມານີ້ ຜ່ານມາລັດຖະບານໄດ້ອອກນິຕິກຳ ແລະ ແຕ່ງຕັ້ງຄະນະກຳມະການລະດັບຊາດ ເພື່ອແກ້ໄຂບັນຫາລົດນຳເຂົ້າບໍ່ຖືຕ້ອງ (ລົດເຖື່ອນ) ລວມທັງລົດປ້າຍສີຟ້າ ທີ່ເອກະຊົນຄຸ້ມຄອງນຳໃຊ້ເຊັ່ນ:

- ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີສະບັບເລກທີ 142/ຫສນຍ.ກລຂ ລົງວັນທີ 25/1/2017 ເລື່ອງການແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງໃນຂອບເຂດທົ່ວປະເທດ.
- ຂໍ້ຕົກລົງຂອງກະຊວງ ລັດຖະມົນຕີ ການເງິນ ສະບັບເລກທີ 3442/ກງ, ລົງວັນທີ 11/10/2016 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຂັ້ນສູນກາງກ່ຽວກັບການແກ້ໄຂພາຫະນະນຳເຂົ້າບໍ່ຖືກຕ້ອງ ແລະ ການແຈ້ງພາສີປ່ຽນກຳມະສິດພາຫະນະທີ່ນຳເຂົ້າບໍ່ຖືກຕ້ອງ ແລະ ແຈ້ງພາສີປ່ຽນກຳມະສິດພາຫະນະທີ່ນຳເຂົ້າໃນລະບອບຍົກເວັ້ນ ແລະ ງົດເກັບພາສີ.
- ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 309/ກງ, ລົງວັນທີ 2/2/2017 ວ່າດ້ວຍການແຕ່ງຕັ້ງຄະນະໜ່ວຍງານຈັດຕັ້ງປະຕິບັດການດວກກາ ແລະ ແກ້ໄຂການນຳເຂົ້າພາຫະນະບໍ່ຖືກຕ້ອງ ແລະ ແຈ້ງພາສີປ່ຽນກຳມະສິດການນຳໃຊ້ໃນລະບອບຍົກເວັ້ນ ແລະງົດເກັບພາສີ. ໂດຍມີຫຼາຍຂະແໜງການເຂົ້າຮ່ວມ ເປັນຕົ້ນ: ກວດກາສູນກາງ, ກົມຂົນສົ່ງ, ກົມພາສີ, ກົມຕຳຫຼວດສືບສວນ-ສອບສວນ, ກົມຕຳຫຼວດເສດຖະກິດ, ກົມຕຳຫຼວດຈະລາຈອນ ແລະ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ນະຄອນຫຼວງວຽງຈັນ. ກະຊວງ ໂຍທາທິການ

ແລະ ຂົນສົ່ງ ໄດ້ສົ່ງມອບສຳເນົາເອກະສານລົດຈຳນວນດັ່ງກ່າວໃຫ້ຄະນະສະເພາະກິດເປັນຜູ້ແກ້ໄຂ ຊຶ່ງປັດຈຸບັນ ລົດຈຳນວນ 86 ຄັນ ທີ່ປອມແປງເອກະສານສາມາດຢຶດພາຫະນະໄດ້ແລ້ວ 41 ຄັນ, ຍັງເຫຼືອ 45 ຄັນ ກຳລັງສືບຕໍ່ຕິດຕາມດຳເນີນຄະດີ.

- ສຳລັບການດຳເນີນຄະດີ ແມ່ນໄດ້ມີການຄິດໄລ່ເສຍພາສີ-ອາກອນຄືນ ແລ້ວມາປັບໃໝເຕີ່ມອີກ 30% ຕາມມາດຕາ 89 ກົດໝາຍພາສີ. ສ່ວນການດຳເນີນຄະດີທາງອາຍາເຈົ້າໜ້າທີ່ໄດ້ມີການສືບສວນສອບສວນ ຕໍ່ບຸກຄົນທີ່ຖືກຕ້ອງຫາ ແລະຜູ້ຖືກຊັກທອດເຖິງ ໃນຂໍ້ຫາຄະດີປອມແປງເອກະສານ ແລະການສໍ້ໂກງຊັບພົນລະເມືອງ ຕາມມາດຕາ 120 ແລະ 161 ຂອງກົດໝາຍອາຍາຢ່າງເຂັ້ມງວດ.
- ສ່ວນການແກ້ໄຂໃນຕໍ່ໜ້າ ກົມຂົນສົ່ງ, ກະຊວງ ຍທຂ ພວມກະກຽມຈັດຕັ້ງປະຕິບັດໂຄງການ ຄຸ້ມຄອງການຂຶ້ນທະບຽນຍານພາຫະນະ ແລະ ການຂັບຂີ່ ແບບທັນສະໄໝ IT ທົ່ວປະເທດ ແລະ ຈະເຊື່ອມໂຍງຂໍ້ມູນການນາເຂົ້າຍານພາຫະນະທັງໝົດກັບຂະແໜງ ອຸດສາຫະກຳ ແລະການຄ້າ, ພາສີ ໃນຕໍ່ໜ້າຈະສາມາດຄຸ້ມຄອງ, ຕິດຕາມ, ກວດກາ ແລະປ້ອງກັນໄດ້ແຕ່ຫົວທີ.

## II. <u>ເຂດ 3 ແຂວງຫລວງນ້ຳທາ</u>

39. <u>ປະຊາຊົນບ້ານສີນໄຊ, ເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ ສະເໜີບັນຫາກ່ຽວການເກັບ ຄ່າຝາກລົດຢູ່ໂຮງໝໍແຂວງ, ຊຶ່ງແມ່ນບ່ອນບໍລິການປະຊາຊົນ, ເປັນໄປໄດ້ບໍ່ໃຫ້ຍົກເວັ້ນການເກັບຄ່າຝາກລົດ ເພາະວ່າເມື່ອຍາດພີ່ນ້ອງເພື່ອນມິດມາຍາມຄົນເຈັບຈະຕ້ອງໄດ້ຈ່າຍເງິນຄ່າຝາກລົດ.</u>

➢ <u>ຕອບ:</u> ບັນຫາດັ່ງກ່າວ ແມ່ນຄວາມຮັບຜິດຊອບຂອງອົງການປົກຄອງແຂວງຫລວງນ້ຳທາ.

## III. <u>ເຂດ 4 ແຂວງ ອຸດົມໄຊ:</u>

40. <u>ປະຊາຊົນບ້ານທ່າພຽນ, ເມືອງປາກແບ່ງ, ແຂວງອຸດົມໄຊ ສະເໜີບັນຫາກ່ຽວກັບຖະໜົນຫົນທາງ ໃຫ້ໄປຮອດໄປເຖິງເຂດນອກແນ່, ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ ເພື່ອຄວາມສະດວກໃນການຄ້າຂາຍ ສິນຄ້າໄປມາຫາສູ່ເຊິ່ງກັນ ແລະກັນ ລວມເຖິງຄວາມສະດວກໃນການໄປໂຮງຮຽນ ແລະ ໂຮງໝໍ. ສະເໜີໃຫ້ລັດຖະບານເອົາໃຈໃສ່ ແລະແກ້ໄຂບັນຫາດັ່ງກ່າວດ້ວຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງອຸດົມໄຊ ໃຫ້ຊາບວ່າ: ຕໍ່ການສະເໜີຂອງປະຊາຊົນ (ບ້ານພຽງ, ເມືອງປາກແບງ) ກ່ຽວກັບຄວາມຕ້ອງການ ເສັ້ນທາງຫາເຂົ້າບ້ານທີ່ຫ່າງໄກສອກຫຼີກ ເຫັນວ່າ: ມີຄວາມຈຳເປັນແທ້ ໃນການຮັບໃຊ້ຄົມມະນາຄົມຂົນສົ່ງທາງບົກ, ປະຈຸບັນໃນທົ່ວແຂວງອຸດົມໄຊ ຍັງມີຈຳນວນ 18 ບ້ານ) ທີ່ບໍ່ມີຕາໜ່າງເສັ້ນທາງບົກເຂົ້າເຖິງຄື: (ເມືອງປາກແບງ 12 ບ້ານ, ເມືອງຮຸນ 3 ບ້ານ ແລະ ເມືອງງາ 3 ບ້ານ) ແລະ ຍັງມີອີກ 7 ບ້ານ ທີ່ມີເສັ້ນທາງທະລຸໄປຜ່ານ ແຕ່ບໍ່ສາມາດສັນນຈອນໄດ້ເນື່ອງຈາກບໍ່ມີຂົວທໍ່ ແລະ ເສັ້ນທາງກໍ່ເປ່ເພ ໂດຍສະເພາະ: ແມ່ນຢູ່ເມືອງປາກແບງ (ເຂດທີ່ຕິດກັບຊາຍແດນເມືອງປາກທາ, ເມືອງຜາອຸດົມ, ແຂວງບໍ່ແກ້ວ).

- ບັນຫາທີ່ເປັນອຸປະສັກພື້ນຖານ ຂອງການຂະຫຍາຍຕາໜ່າງເສັ້ນທາງໃນຂົງເຂດດັ່ງກ່າວລ້າຊ້າ, ສ່ວນໜຶ່ງກໍ່ມາຈາກເງື່ອນໄຂສະເພາະທາງດ້ານທີ່ຕັ້ງພູມລຳເນົາຢູ່ໃນເຂດທຸລະກັນດານ, ສູງຊັນ ທີ່ຕັ້ງຂອງບ້ານຫ່າງໄກກັນປະມານ 120-150 ກມ ແລະ ໃນປະຈຸບັນກໍ່ບໍ່ທັນມີຂໍ້ມູນການສຳຫຼວດອອກແບບ ທີ່ຈະນຳໄປເປັນຂໍ້ມູນ ເພື່ອສະເໜີງົບປະມານກໍ່ສ້າງ (ຫາກບໍ່ມີເອກະສານສຳຫຼວດອອກແບບ ກໍ່ຈະບໍ່ສາມາດຂໍອະນຸມັດງົບປະມານເພື່ອມາກໍ່ສ້າງໄດ້, ສາຍເຫດ: ບໍ່ມີງົບປະມານໃນການສຳຫຼວດອອກແບບ).
- ການແກ້ໄຂຂອງຂະແໜງການໃນໄລຍະຜ່ານມາ ໃນປີ 2012-2013 ໄດ້ທະລຸເສັ້ນທາງລຽບແຄມນ້ຳຂອງ ໂດຍຜ່ານ 7 ບ້ານ ແຕ່ບໍ່ສາມາດນຳໃຊ້ໄດ້ ຍ້ອນບໍ່ທັນມີຂົວ, ທໍ່ ແລະ ໃນທ້າຍເດືອນພະຈິກ 2017 ຜ່ານມາພະແນກ

ຍທຂ ແລະ ການນຳເມືອງປາກແບ່ງ, ກໍ່ໄດ້ລົງມອບເຄື່ອງມືຊຸດທາງໃຫ້ປະຊາຊົນກຸ່ມບ້ານຕະງອນ ຈຳນວ 4 ບ້ານ ເພື່ອລົມທົບທົບຮອນປະຊາຊົນ ມາຮອດປະຈຸບັນກໍ່ສາມາດນຳໃຊ້ລົດຈັກ, ລົດໄຖນາ ເປັນພາຫະນະສັນຈອນ ເຊື່ອມຕໍ່ກັບເມືອງພາອຸດົມ ແຂວງບໍ່ແກ້ວໄດ້ໃນລະດັບພື້ນຖານ.

- ແຜນການປີ 2018 ໄດ້ສືບຕໍ່ສະເໜີງົບປະມານ ເພື່ອເອົາມາສຳຫຼວດອອກແບບ - ສ້າງຖານຂໍ້ມູນນຳໄປສູ່ການສະເໜີຂໍອະນຸມັດທຶນກໍ່ສ້າງ.

ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ທົບກັບພະແນກ ຍທຂ ແຂວງອຸດົມໄຊ ລົມທົບກັບຫ້ອງການ ຍທຂ ເມືອງ ສືບຕໍ່ຄົ້ນຄ້ວາວິທີແກ້ໄຂໂດຍໃຫ້ຖືກຕ້ອງຕາມວິໃນແຜນການ ແລະ ການເງິນ ເພື່ອນຳສະເໜີອົງການປົກຄອງທ້ອງຖິ່ນພິຈາລະນາແກ້ໄຂຕໍ່ໄປ ເພື່ອຊ່ວຍເຫລືອແກ້ໄຂຄວາມທຸກຍາກຂອງປະຊາຊົນຕາມທິດ 3 ສ້າງ.

41. <u>ປະຊາຊົນບ້ານຈິງຊຽງ, ເມືອງນາໝໍ້, ແຂວງອຸດົມໄຊ ສະເໜີກ່ຽວກັບບັນຫາເສັ້ນທາງ ແລະ ຂົວຢູ່ບ້ານຈິງຊຽງ, ເມືອງນາໝໍ້, ແຂວງອຸດົມໄຊ ເປ່ເພຫຼາຍ ເຮັດໃຫ້ພົບຄວາມຫຍຸ້ງຍາກໃນການໄປ-ມາ. ສະນັ້ນ, ສະເໜີພາກສ່ວນກ່ຽວຂ້ອງລົງກວດກາ ແລະ ແກ້ໄຂດ້ວຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງອຸດົມໄຊ ໃຫ້ຊາບວ່າ: ບັນຫາດັ່ງກ່າວແມ່ນນອນຢູ່ໃນເສັ້ນທາງເລກທີ 1805 (ບ້ານຫ້ວຍອອນ ເມືອງນາໝໍ້ ຫາ ບ້ານລີບຈະເລັງ ເມືອງນາແລ, ແຂວງຫຼວງນ້ຳທາ), ເສັ້ນທາງດັ່ງກ່າວ ໄດ້ຖືກເປ່ເພໃນລະດູຝົນປີ 2017 ແຕ່ບໍ່ສາມາດເຂົ້າຈັດຕັ້ງປະຕິບັດໄດ້ໃນໄລຍະນັ້ນ ເນື່ອງຈາກວ່າ: ເສັ້ນທາງດັ່ງກ່າວ ຍັງບໍ່ທັນມີຂົວຂ້າມນ້ຳແຊ 2 ແຫ່ງ ໃນລະດູຝົນບໍ່ສາມາດເຄື່ອນຍ້າຍພາຫະນະຂ້າມໄດ້. ປະຈຸບັນກໍ່ກຳລັງເຮັດການສ້ອມແປງເສັ້ນທາງຄືນ ແລະ ສຳເລັດແລ້ວເປັນສ່ວນໃຫຍ່ແລ້ວ. ຜ່ານມາເສັ້ນທາງດັ່ງກ່າວນີ້ແມ່ນໄດ້ຮັບການເອົາໃຈໃສ່ສ້ອມແປງສຸກເສີນ, ສ້ອມແປງດ້ວຍກົນຈັກມາໃນແຕ່ລະປີຢ່າງຕໍ່ເນື່ອງ ແລະ ມີການສ້ອມແປງໃຫຍ່ຄື: ປູດິນດີໜ້າທາງຄືນສຸດເສັ້ນ ໃນປີ 2018.

- ຂໍ້ຄົງຄ້າງ ແລະບັນຫາທີ່ເກີດຂຶ້ນເປັນປະຈຳມາຮອດປະຈຸບັນແມ່ນ: ບໍ່ມີງົບປະມານ ແລະບໍ່ໄດ້ຮັບການປະກອບສ່ວນ ຂອງປະຊາຊົນໃນການບູລະນະປົກປັກຮັກສາເຊັ່ນ: (ອະນາໄມຍົກຍ້າຍສິ່ງກີດຂວາງອອກຈາກຮ່ອງລະບາຍນ້ຳ, ໜ້າທາງ, ອະນາໄມທໍ່, ຖາງຫຍ້າແຄມທາງ, ຖົມຂຸມຮັງໄກ່, ຊຸດດິນເຈື່ອນ ທີ່ແຮງງານຄົນສາມາດເຮັດໄດ້) ແລະ ນອກຈາກບໍ່ໄດ້ຮັບການປົກປັກຮັກສາແລ້ວ, ເສັ້ນທາງຍັງຖືກບຸກລຸກຈາກການຂຸດດິນ, ຖົມດິນ, ການຖາງປ່າ, ສ້າງສິ່ງກີດຂວາງໃສ່ຮ່ອງນ້ຳ, ໜ້າທາງ ແລະ ອື່ນໆ.
- ຂໍ້ສະເໜີ: 1. ສະເໜີຂັ້ນເທິງພິຈາລະນາງົບປະມານເພື່ອສຳຫຼວດອອກແບບ ເປົ້າໝາຍເສັ້ນທາງເຂົ້າຫາບັນດາບ້ານ , ກຸ່ມບ້ານທີ່ບໍ່ທັນມີເສັ້ນທາງໄປເຖິງ ເພື່ອສ້າງຖານຂໍ້ມູນນຳໄປສູ່ການຂໍອະນຸມັດທຶນ; 2. ເນື່ອງຈາກວ່າລັດຖະບານ ມີທຶນຈຳກັດ ທີ່ຈະນຳໃຊ້ເຂົ້າໃນການບູລະນະຮັກສາ ຈຶ່ງສະເໜີທຸກພາກສ່ວນ: ປະຊາຊົນບັນດາເຜົ່າ , ຜູ້ປະກອບການ, ຜູ້ຊົມໃຊ້ເສັ້ນທາງ ປະກອບສ່ວນງົບປະມານໃນການບູລະນະສ້ອມແປງ ແລະ ມີສ່ວນຮ່ວມໃນການປົກປັກຮັກສາເສັ້ນທາງທ້ອງຖິ່ນເພາະຕົນເອງນຳໃຊ້.

ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ທົບກັບພະແນກ ຍທຂ ແຂວງອຸດົມໄຊ ລົມທົບກັບຫ້ອງການ ຍທຂ ເມືອງ ສືບຕໍ່ຄົ້ນຄ້ວາວິທີແກ້ໄຂໂດຍໃຫ້ຖືກຕ້ອງຕາມວິໃນແຜນການ ແລະ ການເງິນ ເພື່ອນຳສະເໜີອົງການປົກຄອງທ້ອງຖິ່ນ ພິຈາລະນາແກ້ໄຂຕໍ່ໄປ ເພື່ອຊ່ວຍເຫລືອແກ້ໄຂຄວາມທຸກຍາກຂອງປະຊາຊົນຕາມທິດ 3 ສ້າງ.

42. ປະຊາຊົນບ້ານ ມົກລາຍກາງ, ເມືອງ ປາກແບ່ງ, ແຂວງ ອຸດົມໄຊ ສະເໜີບັນຫາເສັ້ນທາງແຕ່ໝູ່ບ້ານ ໄປຫາເຂດຈຸດສຸມແມ່ນເປ່ເພຫຼາຍ ສະເໜີໃຫ້ມີການສ້ອມແປງໃຫ້ດີກວ່າເກົ່າ.

➢ ຕອບ: ຄືກັບຂໍ້ 40.

43. ເລຂາພັກບ້ານມົກລາຍກາງ, ເມືອງປາກແບ່ງ, ແຂວງອຸດົມໄຊ ສະເໜີບັນຫາປັບປຸງພື້ນຖານໂຄງລ່າງ ການພັດທະນາເສດຖະກິດ-ສັງຄົມ ຂອງບ້ານມົກລາຍກາງ ເພາະວ່າບ້ານດັ່ງກ່າວແມ່ນຢູ່ເຂດນອກ ມີຄວາມຫຍຸ້ງຍາກຫຼາຍເສັ້ນທາງບໍ່ສະດວກໃນການໄປ-ມາ. ສະເໜີໃຫ້ພາກລັດ ແລະພາກສ່ວນທີ່ກ່ຽວຂ້ອງຊ່ວຍແກ້ໄຂບັນຫານີ້.

➢ ຕອບ: ຄືກັບຂໍ້ 40.

## IV. ເຂດ 5 ແຂວງຫຼວງພະບາງ:

44. ພະນັກງານບໍານານ ບ້ານ ວິງໃບ, ເມືອງ ວຽງຄໍາ, ແຂວງ ຫຼວງພະບາງ ສະເໜີບັນຫາການກໍ່ສ້າງຂົວ ຂ້າມນໍ້າແຊງ ໃຫ້ໄດ້ມາດຕະຖານເພາະທີ່ຜ່ານມາແມ່ນ ຂົວອູ່ ໄດ້ຂາດເທື່ອໜຶ່ງໃນວັນທີ 30/09/2016 ທີ່ຜ່ານມາເຮັດໃຫ້ນັກຮຽນ ໄດ້ເສຍຊີວິດ 02 ຄົນ ແລະ ເຈັບຫຼາຍຄົນ. ສະນັ້ນ, ຈຶ່ງສະເໜີໃຫ້ພະແນກໂຍທາທິການ ແລະຂົນສົ່ງແຂວງຫຼວງພະບາງ ສ້າງໃຫ້ໄດ້ມາດຕະຖານເພື່ອບໍ່ໃຫ້ບັນຫານີ້ເກີດຂຶ້ນອີກ ເພື່ອສະດວກແກ່ການສັນຈອນໄປ-ມາ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ຫຼວງພະບາງ ໃຫ້ຊາບວ່າ: ສໍາລັບການສະເໜີກໍ່ສ້າງຂົວຂ້າມນໍ້າແຊງ ໃຫ້ໄດ້ມາດຕະຖານເພື່ອຮັບປະກັນການສັນຈອນ ໄປ-ມາ, ໃຫ້ມີຄວາມສະດວກສະບາຍ ແລະປອດໄພ. ປະຈຸບັນພະແນກ ຍທຂ ພວກເຮົາໄດ້ຮັບງົບປະມານ ປະຈໍາປີ 2018 ຈານວນໜຶ່ງ ໃນການກໍ່ສ້າງຂົວເບຕົງຂ້າມນໍ້ານ້ອຍ, ບ້ານວຽງຄໍາ, ເມືອງວຽງຄໍາ, ແຂວງຫຼວງພະບາງ, ເພື່ອພັດທະນາພື້ນຖານໂຄງລ່າງ ແລະ ເອື້ອອໍານວຍຄວາມສະດວກ ໃນການສັນຈອນໄປ-ມາ ຂອງນັກຮຽນ ແລະ ປະຊາຊົນເມືອງວຽງຄໍາ, ປະຈຸບັນພວມດໍາເນີນຢູ່ໃນຂັ້ນຕອນການປະມູນເອົາບໍລິສັດມາຮັບເໝົາກໍ່ສ້າງ ແລະ ຄາດກະວ່າຈະໄດ້ລົງມືຈັດຕັ້ງປະຕິບັດໂຄງການດັ່ງກ່າວໃນໄວໆນີ້. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ພະແນກ ຍທຂ ແຂວງ ຫລວງພະບາງ ສົມທົບກັບ ຫ້ອງການ ຍທຂ ເມືອງ ຈັດຕັ້ງປະຕິບັດໂຄງການດັ່ງກ່າວໄວ, ຖືກຕ້ອງຕາມມາດຕະຖານເຕັກນິກ ຮັບປະກັນຄຸນນະພາບ ແລະ ສໍາເລັດຕາມແຜນການ.

45. ປະຊາຊົນບ້ານ ນາກັ້ງ, ເມືອງ ໂພນໄຊ, ແຂວງ ຫຼວງພະບາງ ສະເໜີບັນຫາເສັ້ນທາງຢູ່ບ້ານ ນາກັ້ງ, ເມືອງໂພນໄຊ, ແຂວງ ຫຼວງພະບາງ ເສັ້ນທາງດັ່ງກ່າວຕອນນີ້ເປ່ເພ, ເສຍຫາຍຫຼາຍ ເຮັດໃຫ້ການເດີນທາງ ໄປ-ມາຂອງປະຊາ ຊົນພົບຄວາມຫຍຸ້ງຍາກລໍາບາກ. ສະເໜີໃຫ້ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ຫຼວງພະບາງ ໃຫ້ຊາບວ່າ: ໂດຍລວມແລ້ວແມ່ນເຫັນດີ ແລະສະໜັບສະໜູນທີ່ສຸດຕໍ່ການສະເໜີ, ເຊິ່ງໃນໄລຍະຜ່ານມາພວກເຮົາກໍ່ໄດ້ຊຸກຍູ້ໃນຫ້ອງການ ຍທຂເມືອງ ສໍາຫຼວດເກັບກໍາຂໍ້ມູນ, ຂຽນບົດສະເໜີໂຄງການ, ຈັດລຽງບູລິມະສິດຕາມແຜນຍຸດທະສາດ ການພັດທະນາໂຄງຖານພື້ນລ່າງຂອງແຂວງ, ຂອງເມືອງ ແລະ ຂໍສະເໜີງົບປະມານ ເພື່ອກໍ່ສ້າງ ແລະ ສ້ອມແປງ ຕາມກົດໝາຍການລົງທຶນ. ແຕ່ເນື່ອງຈາກວ່າ: ດ້ານງົບປະມານຍັງບໍ່ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ, ຈຶ່ງບໍ່ສາມາດຈັດຕັ້ງປະຕິບັດໄດ້. ສະນັ້ນ ເພື່ອແກ້ໄຂໃນສະເພາະໜ້າ ໂດຍສະເພາະໃນລະດູຝົນປີ 2018 ທີ່ຈະມາເຖິງນີ້, ສະເໜີໃຫ້ປະຊາຊົນມີສ່ວນຮ່ວມໃນການປົກປັກຮັກສາດ້ວຍແຮງງານກ່ອນ, ເພື່ອໃຫ້ການສັນຈອນໄປ-ມາໄດ້ ແລະ

ພະແນກ ຍທຂ ພວກເຮົາ ຈະສູ້ຊົນສະເໜີຕື່ມ, ຖ້າໄດ້ງົບປະມານເວລາໃດ ກໍ່ຈະໄປກໍ່ສ້າງ ແລະ ສ້ອມແປງ ໃຫ້ຕາມການສະເໜີຂອງປະຊາຊົນ.

46. ປະຊາຊົນບ້ານຜືອພະຈັນ, ເມືອງຊຽງເງິນ, ແຂວງຫຼວງພະບາງ ສະເໜີບັນຫາຜົນກະທົບຈາກການ ສ້າງທາງລົດໄຟ. ເນື່ອງຈາກຕົ້ນໄມ້ສັກຂອງປະຊາຊົນຢູ່ເຂດ ບ້ານຜືອພະຈັນ ຈຳນວນ 52 ຕົ້ນ ຖືກພະນັກງານໂຄງການສ້າງທາງລົດໄຟຕັດຖິ້ມ ເພື່ອສ້າງເສັ້ນທາງລົດໄຟດັ່ງກ່າວ ແລະ ທາງໂຄງການສ້າງທາງລົດໄຟກໍບໍ່ໄດ້ຈ່າຍຄ່າ ຊົດເຊີຍໃຫ້ແຕ່ຢ່າງໃດ. ສະນັ້ນ, ຈຶ່ງສະເໜີໃຫ້ສະພາປະຊາຊົນ ແຂວງຫຼວງພະບາງ ແລະພາກສ່ວນທີ່ກ່ຽວຂ້ອງ ລົງກວດກາ ແລະ ແກ້ໄຂ ເພື່ອໃຫ້ໂຄງການສ້າງທາງລົດໄຟຈ່າຍເງິນຊົດເຊີຍທີ່ໄດ້ຕັດຕົ້ນໄມ້ສັກຂອງປະຊາຊົນ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ຫຼວງພະບາງ ໃຫ້ຊາບວ່າ: ການຊົດເຊີຍຕໍ່ປະຊາຊົນບ້ານຜືອພະຈັນ (ບ້ານກົ່ວກະຈໍາ), ເມືອງຊຽງເງິນ, ແຂວງຫຼວງພະບາງ, ທີ່ຖືກຜົນກະທົບ ຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ທີ່ບໍ່ໄດ້ຮັບການຊົດເຊີຍຄ່າຕົ້ນໄມ້ສັກ ນັ້ນ, ການຈັດຕັ້ງປະຕິບັດຕໍ່ຜູ້ຖືກຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ຜ່ານມາ, ທາງຄະນະຮັບຜິດຊອບຂັ້ນແຂວງ ແລະ ຂັ້ນເມືອງ, ໄດ້ພ້ອມກັນເກັບກຳຂໍ້ມູນຜົນກະທົບຕາມພື້ນທີ່ຕົວຈິງ, ໂດຍຢັ້ງຢືນຈາກປະຊາຊົນຜູ້ຖືກຜົນກະທົບ, ອຳນາດການປົກຄອງບ້ານ, ວິຊາການຜູ້ເກັບກຳ ແລະຢັ້ງຢືນຈາກທ່ານຮອງເຈົ້າເມືອງຜູ້ຊີ້ນຳ ໄວ້ເປັນຂໍ້ມູນເພື່ອຊົດເຊີຍ. ເຊິ່ງປະຈຸບັນທາງຄະນະຮັບຜິດຊອບ ແລະພາກສ່ວນທີ່ກ່ຽວຂ້ອງຕ່າງໆ ແມ່ນໄດ້ສັງລວມຂໍ້ມູນລະອຽດ, ໄດ້ນຳສະເໜີຄຸ້ມຄອງໂຄງການ ແລະ ຜ່ານສະພາປະຊາຊົນແຂວງຫລວງພະບາງ ແລະ ນຳສະເໜີລັດຖະບານພິຈາລະນາອະນຸມັດ ຄາດວ່າຈະໄດ້ປະຕິບັດການຊົດເຊີຍໃນ ເດືອນ ມິຖຸນາ 2018 ນີ້.

47. ປະຊາຊົນບ້ານເມືອງງາ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ ສະເໜີກ່ຽວກັບສະພາບເສັ້ນທາງ ຂອບເຂດໃນຕົວເມືອງຫຼວງພະບາງເປັນບວກ, ເປັນຂຸມ ໂດຍສະເພາະເຂດສະໜາມບິນ ແລະບັນຫາໄຟເຍືອງທາງ ໄຟບໍ່ຮຸ່ງເຮັດໃຫ້ການສັນຈອນໃນຕອນຄ່ຳຄືນພົບຄວາມຫຍຸ້ງຍາກ ແລະ ສ່ຽງຕໍ່ການເກີດອຸບັດຕິເຫດ. ສະເໜີສະພາປະຊາຊົນແຂວງຫຼວງພະບາງ ສົມທົບກັບພາກສ່ວນກ່ຽວຂ້ອງ ລົງກວດກາ ແລະ ແກ້ໄຂດ້ວຍ.

➢ ຕອບ: ຄຳຕອບຄື ຂໍ້ 45.

48. ພະນັກງານບຳນານບ້ານນາວຽງຄຳ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ ສະເໜີບັນຫາເສັ້ນທາງ ໃຫ້ມີກົມກອງ ຫຼືໜ່ວຍງານສ້ອມແປງທາງປະຈຳແຕ່ລະເຂດ, ແຕ່ລະແຂວງ ເພື່ອຮັບປະກັນການສ້ອມແປງທາງ ທີ່ເປ່ເພໃຫ້ທັນກັບສະພາບຕົວຈິງ. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ລົງກວດກາ ແລະແກ້ໄຂດ້ວຍ.

➢ ຕອບ: ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ແບ່ງຂັ້ນຄຸ້ມຄອງລະຫວ່າງສູນ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ ແລະ ຂື້ນແຜນງົບປະມານກໍ່ສ້າງ ແລະ ສ້ອມແປງເສັ້ນທາງ ດັ່ງນີ້: ກະຊວງ ຍທຂ ຮັບຜິດຊອບ ເສັ້ນທາງຫຼວງແຫ່ງຊາດ ສ່ວນອົງການປົກຄອງທ້ອງຖິ່ນ (ພະແນກ ຍທຂ ແຂວງ ແລະ ນະຄອນຫລວງ) ຮັບຜິດຊອບເສັ້ນທາງຫຼວງແຂວງ, ເສັ້ນທາງຫຼວງເມືອງເທດສະບານ ແລະ ເສັ້ນທາງຫຼວງຊົນນະບົດ.

ໃນປະຈຸບັນການຈັດຕັ້ງປະຕິບັດວຽກງານສ້ອມແປງ ແລະ ບູລະນະຮັກສາທາງ, ສະເພາະທາງຫຼວງແຫ່ງຊາດແມ່ນໄດ້ຈັດຕັ້ງປະຕິບັດເປັນໂຄງການສ້ອມແປງທາງຫຼວງແຫ່ງຊາດ ຈຳນວນ 25 ໂຄງການ ປະຈຳຢູ່ແຕ່ລະແຂວງ, ຊຶ່ງໄດ້ດຳເນີນການຈັດຊື້ຈັດຈ້າງປະມູນເອົາຜູ້ຮັບເໝົາກໍ່ສ້າງມາປະຈຳຮັບຜິດຊອບສ້ອມ ແປງຢູ່ແຕ່ລະຕອນທາງເພື່ອອຳນວຍຄວາມສະດວກໃຫ້ແກ່ການສັນຈອນ ໂດຍການນຳໃຊ້ງົບປະມານຈາກກອງທຶນບູລະນະຮັກສາທາງຫຼວງ ຕາມດຳລັດ ເລກທີ 130/ນຍ.

ສ່ວນທາງຫຼວງທ້ອງຖິ່ນ ໄລຍະຜ່ານມາແມ່ນໃຫ້ພະແນກ ຍທຂ ແຂວງ ແລະ ຫ້ອງການ ຍທຂ ເມືອງ ເປັນຜູ້ສຳຫຼວດເກັບກຳຂໍ້ມູນ, ຂຽນບົດສະເໜີໂຄງການ, ຈັດລຽງບູລິມະສິດຕາມແຜນຍຸດທະສາດການພັດທະນາພື້ນຖານໂຄງລ່າງຂອງແຂວງ, ຂອງເມືອງ ແລະສະເໜີງົບປະມານ ເພື່ອມາກໍ່ສ້າງ ແລະ ສ້ອມແປງ ຕາມກົດໝາຍການລົງທຶນໂດຍນຳໃຊ້ເງິນກອງທຶນທາງ ຕາມດຳລັດເລກທີ 130/ລບ, ລົງວັນທີ 1/6/2016 ວ່າດ້ວຍກອງທຶນທາງ. ແຕ່ເນື່ອງຈາກວ່າ: ງົບປະມານທີ່ໄດ້ຮັບມີຈຳກັດ ບໍ່ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ, ຈຶ່ງບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງທົ່ວເຖິງ. ສະນັ້ນ, ເພື່ອແກ້ໄຂໃນສະເພາະໜ້າໂດຍສະເພາະໃນຊ່ວງລະດູຝົນປີ 2018 ທີ່ຈະມາເຖິງນີ້, ນອກຈາກການນຳໃຊ້ງົບປະມານຂອງລັດຖະບານ, ຂອງແຂວງແລ້ວ ແມ່ນສະເໜີໃຫ້ປະຊາຊົນມີສ່ວນຮ່ວມໃນການປົກປັກຮັກສາດ້ວຍແຮງງານກ່ອນ, ເພື່ອໃຫ້ການສັນຈອນສາມາດໄປ-ມາໄດ້.

ສຳລັບການສະເໜີໃຫ້ມີກອງ ຫຼື ໜ່ວຍງານສ້ອມແປງທາງປະຈຳແຕ່ລະເຂດ, ແຕ່ລະແຂວງ ເພື່ອຮັບປະກັນການສ້ອມແປງທາງທີ່ເປ່ເພໃຫ້ທັນກັບສະພາບຕົວຈິງນັ້ນ ໂດຍພື້ນຖານແລ້ວແມ່ນເຫັນດີ. ຜ່ານມາພະແນກ ຍທຂ ແຂວງສະຫວັນນະເຂດ ແລະ ແຂວງວຽງຈັນ ໄດ້ຮັບການຊ່ວຍເຫລືອດ້ານພາຫະນະກົນຈັກຈຳນວນໜຶ່ງ ຈາກອົງການ JICA ແລະໄດ້ດຳເນີນຈັດຕັ້ງການທົດລອງສ້ອມແປງທາງ ແກ້ໄຂວຽກງານສຸກເສີນຈຳນວນໜຶ່ງ ແຕ່ເຫັນວ່າບໍ່ຍືນຍົງ ເພາະຍັງບໍ່ມີຄວາມພ້ອມຫລາຍດ້ານ. ປະຈຸບັນ ພະແນກ ຍທຂ ນະຄອນຫລວງວຽງຈັນ ພວມດຳເນີນທົດລອງເຮັດເປັນໜ່ວຍງານສ້ອມແປງນ້ອຍຂອງຕົນເອງ ເຊິ່ງເຫັນວ່າໃນເບື້ອງຕົ້ນໄດ້ຮັບຜົນດີ ເຮັດໃຫ້ການສ້ອມແປງທາງຂະໜາດນ້ອຍ ທັນສະພາບການ ແລະປະຢັດງົບປະມານ ໃນໄລຍະຕໍ່ໄປຈະໄດ້ສະຫລຸບສັງລວມຕີລາຄາຜົນການຈັດຕັ້ງປະຕິບັດຕໍ່ ຂັ້ນເທິງເພື່ອພິຈາລະນາອະນຸມັດສ້າງຕັ້ງໜ່ວຍງານດັ່ງກ່າວຢ່າງເປັນລະບົບຄົບຊຸດ ຄ້າຍຄືກັບບັນດາປະເທດເພື່ອນບ້ານ.

49. <u>ປະຊາຊົນບ້ານປົ່ງລ່ານ, ເມືອງປາກແຊງ, ແຂວງຫຼວງພະບາງ ສະເໜີບັນຫາການພັດທະນາຊົນນະບົດ ຢາກໃຫ້ລັດຖະບານຂຶ້ນ ໂຄງການກໍ່ສ້າງເສັ້ນທາງປູຢາງລະຫວ່າງ ບ້ານກັບບ້ານ, ເມືອງກັບເມືອງ ຢູ່ແຂວງຫຼວງພະບາງ ເພາະວ່າປະຈຸບັນນີ້ຍັງເປັນທາງແດງ, ຊຶ່ງເຮັດໃຫ້ບໍ່ສະດວກໃນການ ໄປ-ມາ.</u>

➢ <u>ຕອບ</u>: ຄຳຕອບຄື ຂໍ້ 45.

50. <u>ປະຊາຊົນບ້ານບວງກອກ, ເມືອງປາກແຊງ, ແຂວງຫຼວງພະບາງ ສະເໜີໃຫ້ພາກສ່ວນກ່ຽວຂ້ອງ ສ້າງເສັ້ນທາງເຂົ້າບ້ານໃຫ້ແດ່ ເພາະປັດຈຸບັນນີ້ ປະຊາຊົນພາຍໃນບ້ານດັ່ງກ່າວໄດ້ຮັບຄວາມເດືອດຮ້ອນຫຼາຍ.</u>

➢ <u>ຕອບ</u>: ຄຳຕອບຄື ຂໍ້ 45.

## V. <u>ເຂດ 7 ແຂວງໄຊຍະບູລີ:</u>

51. <u>ປະຊາຊົນບ້ານປາກຕຸ້ງ, ເມືອງ ປາກລາຍ, ແຂວງ ໄຊຍະບູລີ ສະເໜີບັນຫາສະພາປະຊາຊົນ ແຂວງໄຊຍະບູລີ ນຳເອົາແຜນການສ້າງເສັ້ນທາງເຂົ້າບ້ານປາກຕຸ້ງ ພ້ອມທັງເນັ່ງຕາຄ່າຍໄຟຟ້າ ເອົາເຂົ້າແຜນການລົງທຶນຂອງແຂວງໃຫ້ແດ່. ເພາະປະຊາຊົນເດືອດຮ້ອນຫຼາຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ໄຊຍະບູລີ ໃຫ້ຊາບວ່າ: ເສັ້ນທາງດັ່ງກ່າວ ຫ້ອງການ ຍທຂ ເມືອງປາກລາຍ ໄດ້ປະສານສົມທົບກັບບໍລິສັດ ໄດ້ແກ້ໄຂໃນຈຸດທີ່ມີການເປ່ເພຫຼາຍບ່ອນແລ້ວ ໃນຊ່ວງລະດູຝົນ ແລະ ປະຈຸບັນໄດ້ຮັບທຶນອານຸມັດ ກໍ່ສ້າງສ້ອມແປງໃນ ປີ 2018 ພວມກະກຽມລົງມືຈັດຕັ້ງປະຕິບັດ ແລະຈະໃຫ້ສຳເລັດກ່ອນລະດູຝົນ 2018 ນີ້. ສ່ວນການວາງຕາຄ່າຍໄຟຟ້າ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພະແນກພະລັງງານ ແລະ ບໍ່ແຮ່.

52. <u>ນາຍບ້ານນາຕຸງ, ເມືອງປາກລາຍ, ແຂວງໄຊຍະບູລີ ສະເໜີໃຫ້ພາກສ່ວນກ່ຽວຂ້ອງລົງປົວແປງ ເສັ້ນທາງ ແຕ່ເມືອງປາກລາຍ ຫາບ້ານນາຕຸງ ປະຈຸບັນເສັ້ນທາງໄດ້ເປ່ເພຫຼາຍ (ປະມານ 80 ກິໂລແມັດ). ສະເໜີໃຫ້ພາກສ່ວນ ກ່ຽວຂ້ອງ ພິຈາລະນາດ້ວຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ໄຊຍະບູລີ ໃຫ້ຊາບວ່າ: ເສັ້ນທາງດັ່ງກ່າວມາຮອດປະຈຸບັນນີ້ ຫ້ອງການ ຍທຂ ເມືອງປາກລາຍ ແມ່ນໄດ້ໃຫ້ບໍລິສັດປັນຍາທິລາດ ລົງແກ້ໄຂສ້ອມແປງສຸກເສີນ ໃນຊ່ວງລະດູຝົນທີ່ຜ່ານມາ ປະຈຸບັນແມ່ນໄດ້ຮັບທຶນອານຸມັດ ກໍ່ສ້າງສ້ອມແປງ ໃນ ປີ 2018 ແລະ ພວມກະກຽມລົງມືຈັດຕັ້ງປະຕິບັດ ຈະໃຫ້ສໍາເລັດກ່ອນລະດູຝົນ 2018 ນີ້.

53. <u>ປະຊາຊົນບ້ານຫ້ວຍເສົາອໍ, ເມືອງໄຊຍະບູລີ, ແຂວງໄຊຍະບູລີ ສະເໜີສະພາບເສັ້ນທາງ ແຕ່ບ້ານຫ້ວຍເສົາອໍຫາຕົວເມືອງໄຊຍະບູລີ ປະຈຸບັນ ແມ່ນເປ່ເພຫຼາຍ ເຮັດໃຫ້ການເດີນທາງໄປມາຂອງປະຊາຊົນແມ່ນ ລໍາບາກ. ສະເໜີ ສະພາປະຊາຊົນ ແຂວງໄຊຍະບູລີ ລົງກວດກາ ແລະ ແກ້ໄຂ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ໄຊຍະບູລີ ໃຫ້ຊາບວ່າ: ເສັ້ນທາງແຕ່ 3 ແຍກບ້ານນໍ້າຕອນ-ບ້ານຫ້ວຍຊໍາອໍ້, ເມືອງໄຊຍະບູລີ, ລວງຍາວ 15 ກມ, ປະຈຸບັນໄດ້ສ້ອມແປງແກ້ໄຂສໍາເລັດ ມູນຄ່າ 997,73 ລ້ານກີບບ້ວງພັດທະນາທ້ອງຖິ່ນຂອງໂຄງການປູກກ້ວຍຂອງບໍລິສັດຈີນປີ 2017 ແລະ ເສັ້ນທາງດັ່ງກ່າວແມ່ນນອນຢູ່ໃນແຜນບູລິມະສິດຂອງໂຄງການຂະແໜງຂົວທາງ ໄລຍະ (LRSP2) ປີ 2018 ໂດຍການຊ່ວຍເຫຼືອຈາກທະນາຄານໂລກ ປັດຈຸບັນພວມລົງມືສໍາຫຼວດຊີເຈາະເກັບກໍາຂໍ້ມູນເສັ້ນທາງ (ເລີ່ມແຕ່ 3 ແຍກບ້ານນໍ້າຕອນ-ບ້ານຫ້ວຍຊໍາອໍ້ ແລະ 3 ແຍກ ບ້ານປາກທັ່ງ-ບ້ານຫ້ວຍແສນຄໍາ-ບ້ານໜອງງົວ(ເມືອງພຽງ). ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນໍາໃຫ້ກົມຂົວທາງ ລົງສົມທົບກັບພະແນກ ຍທຂ ແຂວງໄຊຍະບູລີ ຕິດຕາມຊຸກຍູ້ເພື່ອໃຫ້ໂຄງການໄດ້ຖືກຈັດຕັ້ງປະຕິບັດ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ.

## VI. <u>ເຂດ 8 ແຂວງ ຫົວພັນ:</u>

54. <u>ປະຊາຊົນບ້ານຕະໂມ (ບໍ່ແມ່ນບ້ານຕັບໝູ), ເມືອງແອດ, ແຂວງຫົວພັນ ສະເໜີຜ່ານສາຍດ່ວນສະພາແຫ່ງຊາດຄື: ບັນຫາການຂຶ້ນທະບຽນລົດທີ່ຊື້ມາແຕ່ປະເທດຫວຽດນາມ ເຊິ່ງເປັນປະເທດອ້າຍນ້ອງຂອງປະເທດລາວພັດເກັບຄ່າການຂຶ້ນທະບຽນແພງ ສະເໜີໃຫ້ຫຼຸດຄ່າຂຶ້ນທະບຽນໃນປັດຈຸບັນ 3.500.000 ກີບ ມາເປັນ 1.000.000 ກີບເພື່ອໃຫ້ປະຊາຊົນຜູ້ ທຸກຍາກມີລົດຂີ່ໄປທໍາມາຫາກິນ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ຫົວພັນ ໃຫ້ຊາບວ່າ: ໃນໄລຍະຜ່ານມາການຂຶ້ນທະບຽນລົດທຸກປະເພດທີ່ນໍາເຂົ້າມາຈາກປະເທດເພື່ອນບ້ານ ສສ ຫວຽດນາມນັ້ນ, ມີຈໍານວນໜຶ່ງເປັນລົດນໍາເຂົ້າບໍ່ຖືກຕ້ອງ ສະນັ້ນຕ້ອງໄດ້ເສຍພາສີໃຫ້ຄົບຖ້ວນກ່ອນ ຈຶ່ງສາມາດຂຶ້ນທະບຽນໄດ້, ການຂຶ້ນທະບຽນດັ່ງກ່າວຂະແໜງການທີ່ກ່ຽວຂ້ອງຂອງພະແນກ ຍທຂ ແຂວງຫົວພັນ ໄດ້ປະຕິບັດຢ່າງຖືກຕ້ອງຕາມຂໍ້ກໍານົດວ່າດ້ວຍການຂຶ້ນທະບຽນ ແລະ ຄຸ້ມຄອງຍານພາຫະນະຂົນສົ່ງທາງບົກໃນ ສປປ ລາວ ສະບັບເລກທີ 829/ຄຂປກ, ລົງວັນທີ 15/3/2000 ແລະລະບຽບການຕ່າງໆ ອອກຢ່າງເຂັ້ມງວດ. ຕາມການສົ່ງຂ່າວຂອງປະຊາຊົນວ່າ ຄ່າຂຶ້ນທະບຽນແມ່ນ: 3.500.000 ກີບ/ຄັນ ນັ້ນແມ່ນບໍ່ມີຄວາມຈິງ. ອາດແມ່ນຍ້ອນການເສຍພາສີຄືນຍ້ອນຫຼັງ. ສາລັບຄ່າຂຶ້ນທະບຽນລົດ ແຕ່ລະປະເພດ ຢູ່ແຂວງຫົວພັນ ແມ່ນປະຕິບັດຕາມຂໍ້ກໍານົດຊົວຄາວວ່າດ້ວການເກັບຄ່າທໍານຽມ, ຄ່າບໍລິການ ແລະຄ່າເອກະສານຕ່າງໆ ຂອງຂະແໜງຄຸ້ມຄອງການຂົນສົ່ງ, ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່

ແລະ ສູນກວດກາເຕັກນິກ ແຂວງຫົວພັນ ສະບັບເລກທີ 1033/ຍທຂ, ລົງວັນທີ 25/5/2016 ຄື: ຄ່າຂຶ້ນທະບຽນ: ລົດຈັກ 185.000 ກີບ/ຄັນ, ລົດຕຸກໆສາມລໍ້ 195.000 ກີບ/ຄັນ, ລົດເບົາ 370.000 ກີບ/ຄັນ, ລົດບັນທຸກ 6 ລໍ້ ລົງມາ 480.000 ກີບ/ຄັນ ແລະລົດບັນທຸກ 8 ລໍ້ ຂຶ້ນໄປ 595.000 ກີບ/ຄັນ.

55. ປະຊາຊົນບ້ານຕະໂມ (ບໍ່ແມ່ນບ້ານຕັບໝູ), ເມືອງແອດ, ແຂວງຫົວພັນ ສະເໜີໃຫ້ສ້ອມແປງທາງແຕ່ເມືອງແອດ ຫາບ້ານຕັບໝູໃຫ້ທຽວໄດ້ 2 ລະດູການ ເພື່ອໃຫ້ປະຊາຊົນໄດ້ມີການຂົນສົ່ງສິນຄ້າອອກຂາຍໃນທ້ອງຕະຫຼາດ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ຫົວພັນ ໃຫ້ຊາບວ່າ: ເສັ້ນທາງແຕ່ເທດສະບານເມືອງແອດ ຫາບ້ານຕະໂມ ແມ່ນນອນຢູ່ໃນເສັ້ນທາງແຕ່ ເທດສະບານເມືອງແອດ ຫາບ້ານເມືອງຊຶມ ມີຄວາມຍາວ 54 ກມ, ປະຈຸບັນ ບໍລິສັດບຸນທະວີຊັບ ກຳລັງກໍ່ສ້າງເປັນເສັ້ນທາງປູແອ່ຢາງແໜ້ນໜ້າທາງກວ້າງ 5.5 ແມັດ, ຄາດວ່າຈະກໍ່ສ້າງສຳເລັດພາຍໃນປີ 2021, ສ່ວນທາງແຕ່ບ້ານເມືອງຊຶມ ຫາບ້ານຕະໂມ, ລວງຍາວ 6 ກມ ປະຈຸບັນ ຍັງເປັນທາງກວຽນ ໄດ້ຮັບທຶນກໍ່ສ້າງຈາກໂຄງການຫລຸດຜ່ອນຄວາມທຸກຍາກ (ຫລຍ) ແລະຍັງບໍ່ທັນມີແຜນກໍ່ສ້າງຍົກລະດັບ. ສະນັ້ນ, ໃຫ້ສະເໜີພາກສ່ວນກ່ຽວຂ້ອງຂອງເມືອງຈັດລຽງບູລິມະສິດ ແລ້ວນຳສະເໜີເຂົ້າແຜນລົງທຶນຂອງລັດຂັ້ນແຂວງ ໃນສົກປີຕໍ່ໄປ. ຕໍ່ບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ບພະແນກ ຍທຂ ແຂວງຫົວພັນສົມທົບກັບ ຫ້ອງການ ຍທຂ ເມືອງແອດ, ເພື່ອໃຫ້ໂຄງການໄດ້ຖືກຈັດຕັ້ງປະຕິບັດສຳເລັດຕາມແຜນ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ.

56. ພະນັກງານຢູ່ບ້ານຫ້ວຍຍາມ, ເມືອງຊອນ, ແຂວງຫົວພັນ ສະເໜີກ່ຽວກັບ ການຂະຫຍາຍເສັ້ນທາງ ເພາະມີຫຼາຍຄອບຄົວຢູ່ບ້ານ ຫ້ວຍຍາມ, ເມືອງ ຊອນ, ແຂວງ ຫົວພັນ ໄດ້ຮັບຜົນກະທົບຈາກການ ຂະຫຍາຍເສັ້ນທາງເຂົ້າບ້ານ ໂດຍທາງເມືອງ ກໍຄືພາກສ່ວນທີ່ກ່ຽວຂ້ອງ ບໍ່ຈ່າຍຄ່າຊົດເຊີຍໃຫ້ກັບຄອບຄົວຜູ້ຖືກຜົນກະທົບ ຈາກການຂະຫຍາຍທາງ, ໃນນັ້ນມີ 03 ຄອບຄົວ ບໍ່ມີທີ່ຢູ່ອາໄສເລີຍ ຍ້ອນຖືກເສັ້ນທາງ. ສະເໜີໃຫ້ສະພາປະຊາຊົນ ແຂວງຫົວພັນ ລົງຕິດຕາມ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງແກ້ໄຂບັນຫານີ້ດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ຫົວພັນ ໃຫ້ຊາບວ່າ: ປະຊາຊົນບ້ານຫ້ວຍຍາມຈຳນວນ 3 ຄອບຄົວຂໍຄ່າຊົດເຊີຍ, ສຳລັບເສັ້ນທາງແຕ່ບ້ານເມືອງເກົ້າ ຫາບ້ານຫ້ວຍສູ້ ຫາ ບ້ານຫ້ວຍຍາມ ແມ່ນນຳໃຊ້ຮ່ວງເງິນແຮຂອງໂຄງການ ກໍ່ສ້າງເສັ້ນທາງແຕ່ບ້ານຊ່ອນໃຕ້ ຫາແຫຼ່ງແບ່ງ ມາຈັດຕັ້ງປະຕິບັດ ສຳເລັດດົນແລ້ວຈຳນວນ 2 ຄອບຄົວ, ສຳລັບເສັ້ນທາງດັ່ງກ່າວ ມາ ຮອດປະຈຸບັນນີ້ແມ່ນໄດ້ກໍ່ສ້າງເປັນທາງປູແອ່ຢາງແໜ້ນສຳເລັດແລ້ວ, ສ່ວນຜົນກະທົບແມ່ນມີພຽງແຕ່ 1 ຫຼັງຄາເຮືອນ, ໃນນັ້ນ ບໍລິສັດຮັບເໝົາໄດ້ປັບສະຖານທີ່ໃຫ້ ແລະການຍ້າຍເຮືອນຜູ້ກ່ຽວ ແມ່ນເຈົ້າຂອງ ເຮືອນ ແລະປະຊາຊົນພາຍໃນບ້ານໄດ້ພ້ອມກັນຍ້າຍສຳເລັດແລ້ວ.

## VII. ເຂດ 9 ແຂວງຊຽງຂວາງ:

57. ປະຊາຊົນບ້ານສາຍລົມ, ເມືອງແປກ, ແຂວງຊຽງຂວາງ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ປັບແປງເສັ້ນທາງ ຢູ່ໃນຕົວເມືອງແປກ ເພາະເສັ້ນທາງດັ່ງກ່າວເປ່ເພຫຼາຍ ແລະເປັນເສັ້ນທາງທີ່ປະຊາຊົນໃຊ້ເປັນປະຈຳ.

➢ ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ຊຽງຂວາງ ໃຫ້ຊາບວ່າ: ເສັ້ນທາງຢູ່ພາຍໃນຕົວເມືອງແປກ ແມ່ນຂຶ້ນກັບພາກສ່ວນອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບຕ) ເປັນຜູ້ຮັບຜິດຊອບ. ໃນໄລຍະຜ່ານມາ ພະແນກ ຍທຂ ແຂວງ ກໍ່ໄດ້ປະສານສົມທົບກັບອົງການປົກຄອງເມືອງແປກ ແລະ ອົງການພັດທະນາ

ແລະ ບໍລິການຕົວເມືອງ (ອພບຕ) ເພື່ອຂໍ້ນແຜນງົບປະມານສ້ອມແປງ, ແຕ່ຍ້ອນງົບປະມານຂອງແຂວງມີໜ້ອຍ ສະນັ້ນແຂວງຈຶ່ງໄດ້ນຳໃຊ້ງົບປະມານດັ່ງກ່າວ ເພື່ອແກ້ໄຂວຽກທີ່ຈຳເປັນກ່ອນ.

58. <u>ທະຫານ, ຢູ່ບ້ານ ໂພນສະຫວັນ, ເມືອງແປກ, ແຂວງຊຽງຂວາງ ສະເໜີຄະນະກວດກວດກາແຂວງ ຕິດຕາມ ກວດກາໂຄງການສ້າງທາງ ແຕ່ເມືອງຄູນ ຫາເມືອງໝອກ ໄລຍະທາງປະມານ 100 ກ່ວາກິໂລແມັດ ຖືວ່າປະຈຸ ບັນນີ້ ທາງບໍລິສັດສາຍສຳພັນ ກໍ່ສ້າງ-ຂົວທາງ ໄດ້ເອົາເງິນຄ່າກໍ່ສ້າງໄປໝົດແລ້ວ ແຕ່ເສັ້ນທາງຍັງບໍ່ທັນ ສຳເລັດ ເທື່ອພຽງແຕ່ໄດ້ 40 ກວ່າກິໂລແມັດເທົ່ານັ້ນ ແລະ ບໍ່ເຫັນສືບຕໍ່ດຳເນີນການກໍ່ສ້າງເລີຍ. ສະນັ້ນ, ຈຶ່ງສະເໜີໃຫ້ ສະພາປະຊາຊົນ ແຂວງຊຽງຂວາງ ລົງກວດກາ ພາກສ່ວນກ່ຽວຂ້ອງດ້ວຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ຊຽງຂວາງ ໃຫ້ຊາບວ່າ: ກ່ຽວກັບການກໍ່ສ້າງ ເສັ້ນທາງປູຢາງສອງຊັ້ນ ທາງເລກທີ 3908 ແຕ່ເມືອງຄູນ ຫາເມືອງມອກ ມີຄວາມຍາວທັງໝົດ 132,5 ກມ ຮັບ ເໝົາໂດຍບໍລິສັດລາວສຳພັນກໍ່ສ້າງຂົວ-ທາງ, ປະຈຸບັນນີ້ ບໍລິສັດຮັບເໝົາພວມສືບຕໍ່ດຳເນີນການກໍ່ສ້າງ ໂດຍສຸມໃສ່ ປູຢາງຊ່ວງແຕ່ ບ້ານນາຄ່ອນ-ຄັ້ງວຽງ-ທົ່ງເປີ, ເມືອງໝອກ ໃຫ້ສຳເລັດກ່ອນ ເດືອນມິຖຸນາ 2018 ນີ້ ເພື່ອເຮັດ ໃຫ້ການສັນຈອນສະດວກໃນການຄົມມະນາຄົມຂົນສົ່ງ ລະຫວ່າງເມືອງ ຫາ ຈຸດສຸມກຸ່ມພັດທະນາຄັງວຽງ ແຕ່ຍ້ອນ ງົບປະມານບໍ່ສາມາດສະໜອງໃຫ້ບໍລິສັດໄດ້ ຈຶ່ງເຮັດໃຫ້ການກໍ່ສ້າງບໍ່ສຳເລັດຕາມສັນຍາ. ກ່ຽວກັບສາຍດ່ວນລາຍງານ ວ່າ: ໂຄງການດັ່ງກ່າວນີ້ ແມ່ນບໍລິສັດບໍ່ສືບຕໍ່ດຳເນີນການກໍ່ສ້າງ ແລະບໍລິສັດໄດ້ເອົາເງິນຄ່າໂຄງການກໍ່ສ້າງໄປໝົດ ແລ້ວ ຕໍ່ກັບຄຳເວົ້າດັ່ງກ່າວນີ້ ແມ່ນບໍ່ມີຄວາມຈິງ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງ ມະຫາພາກ ໄດ້ຊີ້ນຳໃຫ້ກົມຂົວທາງ ລົງສົມທົບກັບພະແນກ ຍທຂ ແຂວງ ຊຽງຂວາງ ຊີ້ນຳການຈັດຕັ້ງປະຕິບັດ ໂຄງການດັ່ງກ່າວຕາມສັນຍາ, ຖືກຕອງຕາມມາດຕະຖານເຕັກນິກ ຮັບປະກັນຄຸນນະພາບ ແລະສຳເລັດຕາມ ແຜນການ.

## VIII. <u>ເຂດ 10 ແຂວງວຽງຈັນ:</u>

59. <u>ປະຊາຊົນບ້ານໂນນໄຮ, ເມືອງໝື່ນ, ແຂວງວຽງຈັນ ສະເໜີບັນຫາ ການກໍ່ສ້າງເສັ້ນທາງແຕ່ເມືອງເຟືອງ ຫາ ເມືອງ ໝື່ນ ແມ່ນຊັກຊ້າຫຼາຍ ຊຶ່ງເສັ້ນທາງດັ່ງກ່າວ ສ້າງດົນແລ້ວ ແຕ່ບໍ່ເຫັນຄວາມຄືບໜ້າ. ສະນັ້ນ, ສະເໜີໃຫ້ ພາກ ສ່ວນທີ່ກ່ຽວຂ້ອງລົງ ຕິດຕາມ ກວດກາດ້ວຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ວຽງຈັນ ໃຫ້ຊາບວ່າ: ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ເລກທີ 4501 ແຕ່ຫີນເຫີບ-ເມືອງເຟືອງ-ເມືອງໝື່ນ-ຊະນະຄາມ ລວງຍາວ 132 ກມ. ໄດ້ເຊັນສັນຍາກໍ່ສ້າງໃນ ວັນທີ 28/1/2018 ໄລຍະເວລາກໍ່ສ້າງ 5 ປີ. ບໍລິສັດໄດ້ເລີ່ມລົງມືກໍ່ສ້າງ ໃນວັນທີ 5/3/2018 ມາຮອດປະຈຸບັນນີ້ ປະຕິບັດໄດ້ 38,44 ເປີເຊັນ ສະເພາະຊ່ວງເມືອງເຟືອງ-ເມືອງໝື່ນ-ບ້ານວັງ ການກໍ່ສ້າງແມ່ນໄດ້ບຸກເບີກຕັດພູ ຂະຫຍາຍໜ້າທາງ, ຖົມດິນຍົກລະດັບ, ວາງທໍ່ລອດທາງ ແລະ ກໍ່ສ້າງທໍ່ດາໂລ່ ແມ່ນໄດ້ຕາມລະດັບອອກແບບໝົດ ແລ້ວ ຍັງມີບາງຈຸດຈະໄດ້ເຮັດຄືນເພື່ອໃຫ້ໄດ້ມາດຕະຖານເຕັກນິກ, ຍັງແຕ່ຖົມດິນຊັ້ນຮອງພື້ນທາງ ແລະ ຊັ້ນໜ້າ ທາງກໍ່ສາມາດປູຢາງໄດ້ແລ້ວ. ປະຈຸບັນນີ້ບໍລິສັດຮັບເໝົາກໍ່ສ້າງກຳລັງຖົມດິນຊັ້ນໜ້າທາງ ຕໍ່ຈາກບ້ານນາທອງ ຫາ ບ້ານນາພຶງ ເພື່ອກຽມຈະປູຢາງ ໃນຕົ້ນເດືອນເມສາ 2018. ຕາມແຜນການແມ່ນແຕ່ນີ້ຮອດເດືອນ ກໍລະກົດ 2018 ຈະປູຢາງໃຫ້ໄດ້ 8 ກິໂລແມັດ. ສ່ວນທາງເທດສະບານເມືອງໝື່ນ ກໍ່ຈະສືບຕໍ່ວາງທໍ່ທາງຢາງພ້ອມທັງເທເບຕົງຂຸມພັກ ນໍ້າ (ແມນໂຮນ) ແລະ ສາເລັດການຕັດພູສາລະນາ. ສັງລວມແລ້ວ ບໍລິສັດຮັບເໝົາກໍ່ສ້າງໄດ້ປັບເກດໜ້າທາງຊ່ວງ ເມືອງເຟືອງ-ເມືອງໝື່ນ-ບ້ານວັງ. ການສັນຈອນໄປມາໃນປະຈຸບັນນີ້ແມ່ນສະດວກສະບາຍຂຶ້ນ ແຕ່ຖ້າທຽບໃສ່ຕາມ

ແຜນການສັນຍາແມ່ນມີຄວາມຊັກຊ້າຫຼາຍ ບໍ່ໄປຕາມແຜນການທີ່ວາງໄວ້ ສາເຫດກໍເນື່ອງຈາກທາງບໍລິສັດຮັບເໝົາຂາດທຶນໝູນວຽນ ແຕ່ບໍລິສັດກໍ່ບໍ່ໄດ້ຢຸດວຽກ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ພະແນກ ຍທຂ ແຂວງວຽງຈັນ ຈັດຕັ້ງປະຕິບັດໂຄງການດັ່ງກ່າວຕາມສັນຍາ, ຖືກຕອງຕາມມາດຕະຖານເຕັກນິກ ຮັບປະກັນຄຸນນະພາບ ແລະສໍາເລັດຕາມແຜນການ.

60. <u>ປະຊາຊົນບ້ານທ່າລາດ, ເມືອງແກ້ວອຸດົມ, ແຂວງວຽງຈັນ ສະເໜີບັນຫາຕໍ່ຄະນະສະມາຊິກສະພາປະຊາຊົນແຂວງວຽງຈັນ ແຕ່ງຕັ້ງໜ່ວຍງານສະເພາະກິດລົງໄປກວດກາຕົວຈິງ ແລະ ແກ້ໄຂບັນຫາດັ່ງກ່າວ ດັ່ງນີ້: ການກໍ່ສ້າງເສັ້ນທາງເລກທີ 10 ແຕ່ເມືອງວຽງຄໍາ ຫາເມືອງແກ້ວອຸດົມ ໄລຍະທາງປະມານ 5 ກິໂລແມັດ ຊຶ່ງເສັ້ນທາງດັ່ງກ່າວໄດ້ລົງມືກໍ່ສ້າງເປັນໄລຍະ 4 ປີ ແລ້ວ ແຕ່ຍັງບໍ່ສໍາເລັດ ເຮັດໃຫ້ການສັນຈອນໄປມາມີຄວາມຫຍຸ້ງຍາກ. ສະນັ້ນ, ຈຶ່ງສະ ເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ລົງມາຕິດຕາມ ກວດກາ ແລະ ແກ້ໄຂ້ດ້ວຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ວຽງຈັນ ໃຫ້ຊາບວ່າ: ຕໍ່ບັນຫາດັ່ງກ່າວເປັນບັນຫາທາງສຽງຂອງສັງຄົມຢ່າງກວ້າງຂວາງ ໂຄງການກໍ່ສ້າງເສັ້ນທາງສາຍດັ່ງກ່າວພົບບັນຫາຫຍຸ້ງຍາກຍ້ອນບໍລິສັດຮັບເໝົາຂາດທຶນໝູນວຽນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານມີຄວາມຊັກຊ້າບໍ່ສໍາເລັດຕາມແຜນ. ຍ້ອນສາເຫດທີ່ກ່າວມານັ້ນການນໍາແຂວງວຽງຈັນຈຶ່ງໄດ້ມີຄໍາສັ່ງໃຫ້ຢຸດຕິການກໍ່ສ້າງຊົ່ວຄາວ ແລະ ລັດຖະບານໄດ້ລົງຕິດຕາມກວດກາສະຖານທີ່ຕົວຈິງ ແລະ ໄດ້ມີທິດຊີ້ນໍາໃຫ້ກະຊວງ ຍທຂ (ຕາມແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ: 265/ຫສນຍ.ກລຂ, ລົງວັນທີ 20/2/2018) ສົມທົບກັບອົງການປົກຄອງແຂວງວຽງຈັນກວດກາຄືນບໍລິມາດວຽກທີ່ໄດ້ປະຕິບັດຜ່ານມາ ແລະ ບໍລິມາດວຽກທີ່ຈະໄດ້ສືບຕໍ່ປະຕິບັດຕໍ່ໜ້າແລະ ປັບປຸງດັດປັບທາງດ້ານເຕັກນິກ ຄື: ປ່ຽນແປງຈາກການປູໜ້າທາງດ້ວຍເປຕົງເສີມເຫຼັກມາເປັນປູຢາງ 2 ຊັ້ນ, ຊັ້ນທີ 1 ກວ້າງ 15 ແມັດ, ຊັ້ນທີ 2 ກວ້າງ 13 ແມັດ,ເສັ້ນທາງ ມີຄວາມຍາວ 6,26 ກມ. ຈາກນັ້ນ, ໃນວັນທີ 20/2/2018 ໄດ້ມີແຈ້ງເຊີນເຂົ້າຮ່ວມແຂ່ງຂັນປະມູນຂອງຫົວໜ້າກົມຂົວ-ທາງ ໂດຍກໍານົດມື້ເປີດຊອງປະມູນໃນວັນທີ 09/03/2018. ປະຈຸບັນແມ່ນຢູ່ໃນຂັ້ນຕອນຮັບຮອງເອົາຜູ້ຊະນະການປະມູນຈາກຂັ້ນເທິງ ແລະການອະນຸມັດເຊັນສັນຍາ ໂດຍມອບໃຫ້ພະແນກ ຍທຂ ແຂວງວຽງຈັນ ເປັນເຈົ້າຂອງໂຄງການ ແລະ ເປັນເຈົ້າການໃນການຕິດຕາມກວດກາການປະຕິບັດໂຄງການ, ຄາດວ່າຈະໄດ້ລົງມືຈັດຕັ້ງປະຕິບັດໃນເດືອນ ພຶດສະພາ 2018 ນີ້. ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ຈະສືບຕໍ່ຊີ້ນາໃຫ້ພະແນກ ຍທຂ ແຂວງວຽງຈັນ ຈັດຕັ້ງປະຕິບັດໂຄງການດັ່ງກ່າວຕາມສັນຍາ, ຖືກຕອງຕາມມາດຕະຖານເຕັກນິກ ຮັບປະກັນຄຸນນະພາບ ແລະ ສໍາເລັດຕາມແຜນການ.

61. <u>ປະຊາຊົນບ້ານນາເຄືອ, ເມືອງວຽງຄໍາ, ແຂວງວຽງຈັນ ການນໍາເຂົ້າ ແລະການນໍາໃຊ້ລົດເຖື່ອນທີ່ຜິດຕໍ່ລະບຽບກົດໝາຍ ເຫັນວ່າຍັງມີລົດຈໍານວນໜຶ່ງນໍາເຂົ້າ ແລະນໍາໃຊ້ບໍ່ຖືກຕ້ອງຕາມລະບຽບກົດໝາຍ. ສະນັ້ນສະເໜີສະພາປະຊາຊົນ ແຂວງວຽງຈັນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງກວດກາ ແລະ ແກ້ໄຂ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງວຽງຈັນ ໃຫ້ຊາບວ່າ: ກັບການສະເໜີດັ່ງກ່າວຂອງປະຊາຊົນນັ້ນ ພະແນກ ຍທຂ ແຂວງວຽງຈັນ ຍັງບໍ່ມີຂໍ້ມູນ ຫຼືຫຼັກຖານມາຢືນຢັນໄດ້ວ່າມີການນໍາເຂົ້າລົດເຖື່ອນ ຫຼືບໍ່ ແລະບັນຫານີ້ກໍບໍ່ແມ່ນຄວາມຮັບຜິດຊອບໂດຍກົງຂອງພະແນກ ຍທຂ ແຂວງ ເຊິ່ງແມ່ນຄວາມຮັບຜິດຊອບລວມຂອງຫຼາຍພາກສ່ວນທີ່ຈະຕ້ອງຮ່ວມມືກັນແຂ້ໄຂ. ກະຊວງ ຍທຂ ເຫັນວ່າ: ປະຈຸບັນລັດຖະບານໄດ້ມີການຕົກລົງແຕ່ງຕັ້ງຄະນະສະເພາະກິດກວດກາເພື່ອສືບຕໍ່ແກ້ໄຂແລ້ວ (ຄ້າຍຄືກັບຄໍາຕອບຂໍ້ 37 ຂອງໂຮແມງ I).

62. ປະຊາຊົນບ້ານສາມໝື່ນ, ເມືອງເຟືອງ, ແຂວງວຽງຈັນ ສະເໜີບັນຫາເສັ້ນທາງຢູ່ເຂດເມືອງເຟືອງ ເປ່ເພເສຍຫາຍຫຼາຍ ເຮັດໃຫ້ການສັນຈອນໄປມາຫຍຸ້ງຍາກ. ສະນັ້ນ, ສະເໜີພາກສ່ວນທີ່ກ່ຽວຂ້ອງ ລົງກວດກາ ແລະ ແກ້ໄຂບັນ ຫານີ້ດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ວຽງຈັນ ໃຫ້ຊາບວ່າ: ຜ່ານມາກໍ່ໄດ້ລະດົມໃຫ້ບໍລິສັດຜາແດງ ແລະບໍລິສັດເຮືອງສີ ຊ່ວຍສ້ອມແປງເສັ້ນທາງສາຍດັ່ງກ່າວ ໂດຍບໍລິສັດຜາແດງນັ້ນເປັນຜູ້ປະກອບສ່ວນຫີນ ສ່ວນບໍລິສັດເຮືອງສີເປັນຜູ້ຊ່ວຍດ້ານພາຫານະກົນຈັກ ເຊິ່ງໄດ້ລົງມືສ້ອມແປງສຳເລັດແລ້ວ, ຍັງຊວງແຕ່ບ້ານຄອນເລືອງ ຫາ ບ້ານ ນາແຊງ ຍັງບໍ່ທັນໄດ້ສ້ອມແປງເທື່ອ. ຈະຕ້ອງໄດ້ສືບຕໍ່ລະດົມໃຫ້ບໍລິສັດ ຜາແດງຊ່ວຍໃນການສ້ອມແປງ ເນື່ອງຈາກວ່າບໍລິສັດດັ່ງກ່າວ ໄດ້ສໍາປະທານຂຸດຄົ້ນຫີນຢູ່ຜາຕັ້ງ ແລະ ເປັນຜູ້ນຳໃຊ້ເສັ້ນທາງຊ່ວງດັ່ງກ່າວໃນການຂົນສົ່ງຫີນ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ແຂວງວຽງຈັນ ປະສານສົມທົບກັບ ຫ້ອງການ ຍທຂ ເມືອງ ແລະ ອົງການປົກຄອງບ້ານເພື່ອໃຫ້ບໍລິສັດຜາແດງ ສືບຕໍ່ສ້ອມແປງເສັ້ນທາງດັ່ງກ່າວໃນສາມາດໄປມາໄດ້ສະດວກ.

63. ປະຊາຊົນບ້ານນາແຊງ, ເມືອງເຟືອງ, ແຂວງວຽງຈັນ ສະເໜີກ່ຽວກັບ ເສັ້ນທາງຢູ່ເຂດເຂື່ອນໄຟຟ້ານ້ຳລີກ 2 ເປ່ເພເສຍຫາຍໜັກ, ເນື່ອງຈາກລົດຂອງບໍລິສັດ, ທີ່ຂຸດຄົ້ນຫີນຢູ່ເຂດດັ່ງກ່າວ ໄດ້ນຳໃຊ້ທາງເສັ້ນນີ້ ໃນການຂົນສົ່ງຫີນ ແຕ່ບໍ່ມີການສ້ອມແປງເສັ້ນທາງ ເຮັດໃຫ້ປະຊາຊົນສັນຈອນໄປມາພົບຄວາມຫຍຸ້ງຍາກ. ສະນັ້ນ, ສະເໜີພາກສ່ວນທີ່ກ່ຽວຂ້ອງ, ລົງກວດກາ ແລະ ແກ້ໄຂບັນຫານີ້ດ້ວຍ.

➢ ຕອບ: ຄໍາຕອບຄືກັບຂໍ້ 62.

64. ພະນັກງານຢູ່ບ້ານສະພັງໝໍ້, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີກ່ຽວກັບ ພະນັກງານລັດ ລ້ຳລວຍຜິດປົກກະຕິ ເຊັ່ນວ່າ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ວຽງຈັນ ເມື່ອກ່ອນບໍ່ທັນໄດ້ ຮັບຕຳແໜ່ງແມ່ນທຳມະດາ ພາຍຫຼັງໄດ້ຮັບຕຳແໜ່ງຫົວໜ້າພະແນກ ເຫັນວ່າມີຊັບສິນຜິດປົກກະຕິ, ລູກເມຍຂອງຜູ້ກ່ຽວໄດ້ໃຊ້ອຳນາດ ແລະອວດອ້າງເກີນຂອບເຂດ. ສະເໜີສະພາປະຊາຊົນ ແຂວງວຽງຈັນ ລົງກວດກາ ແລະສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ວຽງຈັນ ໃຫ້ຊາບວ່າ: ຕໍ່ກັບການສະເໜີດັ່ງກ່າວນັ້ນເຫັນວ່າບໍ່ມີຄວາມຈິງແຕ່ຢ່າງໃດ, ເປັນການໃສ່ຮ້າຍປ້າຍສີຂອງບຸກຄົນໃດບຸກຄົນໜຶ່ງເພື່ອຫວັງໂຄ່ນລົ້ມໂຈມຕີຫົວໜ້າພະແນກ ຍທຂ ແຂວງວຽງຈັນ ແລະຄອບຄົວ. ຕໍ່ກັບການສະເໜີນີ້ ພາກສ່ວນກ່ຽວຂ້ອງສາມາດກວດສອບຄວາມຈິງໄດ້. ໃນອານາຄົດຕໍ່ກັບການສະເໜີໃຫ້ສາຍດ່ວນສະພາ ຄວນໃຫ້ມີການພິຈາລະນາກັ່ນຕອງ ກ່ຽວກັບການສະເໜີຂອງບຸກຄົນ. ຄວນຈະໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງລັດເປັນຜູ້ກວດສອບຕາມລະບຽບກົດໝາຍວາງອອກ, ບໍ່ຄວນເອົາອອກເຜີຍແຜ່ໃນວົງກວ້າງ. ຖ້າຫາກບໍ່ມີມູນຄວາມຈິງອາດຈະມີຜົນກະທົບໂດຍກົງ ແລະ ທັງເປັນການທຳລາຍກຽດສັກສີ, ຊື່ສຽງຂອງບຸກຄົນຜູ້ທີ່ຖືກກ່າວຫາ. ຕໍ່ກັບບັນຫາດັ່ງກ່າວ ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ເຫັນວ່າການສະເໜີດັ່ງກ່າວແມ່ນເປັນທາງສຽງຂອງສັງຄົມ, ຍັງບໍ່ທັນມີຂໍ້ມູນຫລັກຖານ ຫລື ວ່າເອກະສານອ້າງອີງໃດໆ. ສະນັ້ນ, ຈຶ່ງສະເໜີອົງການປົກຄອງທ້ອງຖິ່ນ ແລະ ສະພາປະຊາຊົນແຂວງ ເປັນຜູ້ພິຈາລະນາກ່ຽວບັນຫາດັ່ງກ່າວຕາມການແບ່ງຂັ້ນຄຸ້ມຄອງ ເພາະຜ່ານມາກໍ່ໄດ້ມີການກວດກາຊັບສິນຂອງພະນັກງານ-ລັດຖະກອນ ຢູ່ແລ້ວ.

65. ປະຊາຊົນບ້ານນາບົວ, ເມືອງໝື່ນ, ແຂວງວຽງຈັນ ສະເໜີກ່ຽວກັບເສັ້ນທາງ ແຕ່ບ້ານໂນນໄຮ ຫາບ້ານໂນນຕ້ອງມີຂີ້ຝຸ່ນຫຼາຍຊຶ່ງເປັນມົນລະພິດທາງອາກາດ, ສ້າງຄວາມຫຍຸ້ງຍາກໃນການສັນຈອນຂອງປະຊາຊົນ ເຂດບ້ານດັ່ງກ່າວ. ສະນັ້ນ, ສະເໜີພາກສ່ວນທີ່ກ່ຽວຂ້ອງລົງຕິດຕາມ, ກວດກາ ແລະແກ້ໄຂບັນຫາດັ່ງກ່າວດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ວຽງຈັນ ໃຫ້ຊາບວ່າ: ຕອນທາງດັ່ງກ່າວກໍ່ຢູ່ໃນໄລຍະດໍາເນີນການກໍ່ສ້າງ ເຊິ່ງບໍລິສັດຮັບເໝົາກໍ່ໄດ້ລົງດິນ, ປັບເກດທີດນໍ້າ, ໂລອັດແໜ້ນຄືນໃໝ່ແລ້ວ ແຕ່ກໍ່ປັດສະຈາກບໍ່ໄດ້ບັນຫາຂີ້ຝຸ່ນ ເນື່ອງຈາກວ່າຍັງເປັນທາງດິນແດງ, ໜ້າທາງດີ ລົດແລ່ນໄວຈຶ່ງພາໃຫ້ມີຂີ້ຝຸ່ນຫຼາຍ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນາໃຫ້ພະແນກ ຍທຂ ວຽງຈັນ ຈັດຕັ້ງປະຕິບັດໂຄງການດັ່ງກ່າວຕາມສັນຍາ, ຖືກຕອງຕາມມາດຕະຖານເຕັກນິກ ຮັບປະກັນຄຸນນະພາບ, ສໍາເລັດຕາມແຜນການ ແລະ ຮັບປະກັນສະພາບແວດທີ່ດີໃຫ້ແກ່ປະຊາຊົນ ທີ່ອາໃສຢູ່ ສອງຝາກທາງນັ້ນ.

## IX. ເຂດ 11 ແຂວງ ບໍລິຄໍາໄຊ:

66. ປະຊາຊົນບ້ານພູຄໍາ, ເມືອງບໍລິຄັນ, ແຂວງບໍລິຄໍາໄຊ ເສັ້ນທາງແຕ່ເມືອງບໍລິຄັນ - ບ້ານພູຄໍາ ໄລຍະທາງ 80 ກມ ເຫັນວ່າມີການເປເພຫຼາຍ ເຮັດໃຫ້ການສັນຈອນໄປມາມີຄວາມຫຍຸ້ງຍາກ ບໍ່ວ່າລະດູແລ້ງ, ລະດູຝົນ. ສະນັ້ນ, ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ລົງຕິດຕາມ, ກວດກາ ແລະ ແກ້ໄຂດ້ວຍ.

➢ ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ບໍລິຄໍາໄຊ ໃຫ້ຊາບວ່າ: ໄລຍະທາງແຕ່ເມືອງບໍລິຄັນ ຫາ ບ້ານພູຄໍາມີພຽງແຕ່ 57 ກມ, ບໍ່ແມ່ນ 80 ກິໂລແມັດ. ເສັ້ນທາງດັ່ງກ່າວແມ່ນເປັນທາງປູແຮ່ ເຫັນວ່າມີການເປ່ເພ່ແທ້ໂດຍສະເພາະແມ່ນລະດູຝົນປີ 2017 ຜ່ານມາ, ຕໍ່ກັບສະພາບການເປ່ເພ່ດັ່ງກ່າວນັ້ນ, ພາຍຫຼັງໝົດລະດູຝົນ 2017 ພະແນກ ຍທຂ ແຂວງ ບໍລິຄໍາໄຊ ໄດ້ຂຶ້ນແຜນງົບປະມານສະເໜີຂັ້ນເທິງອະນຸມັດ ແລະ ສຸມໃສ່ແກ້ໄຂສໍາເລັດແລ້ວແຕ່ທ້າຍເດືອນ ກຸມພາ 2018 ເປັນຕົ້ນມາ, ປະຈຸບັນເສັ້ນທາງດັ່ງກ່າວກໍ່ເຫັນວ່າຮັບໃຊ້ການສັນຈອນມີຄວາມສະດວກແລ້ວ.

## X. ເຂດ 12 ແຂວງ ຄໍາມ່ວນ:

67. ປະຊາຊົນບ້ານຊຽງຫວາງ, ເມືອງໜອງບົກ, ແຂວງຄໍາມ່ວນ ສະເໜີກ່ຽວກັບຄ່າພາສີລົດໃຫຍ່ ເຮັດຄືປະເທດເພື່ອນບ້ານຈະດີກວ່າ ໃຫ້ເສຍພາສີລົດເປັນປີ ເພື່ອເຮັດໃຫ້ລາຄາລົດຫຼຸດລົງຈະເປັນຜົນດີກັບປະຊາຊົນຜູ້ທີ່ເງິນໜ້ອຍກໍມີຄວາມສາມາດຊື້ໄດ້. ສະເໜີພາກສ່ວນທີ່ກ່ຽວຂ້ອງພິຈາລະນາ ແລະແກ້ໄຂບັນຫາດັ່ງກ່າວດ້ວຍ

➢ ຕອບ: ບັນຫາດັ່ງກ່າວ ແມ່ນຄວາມຮັບຜິດຊອບ ຂອງກະຊວງການເງິນ.

68. ປະຊາຊົນບ້ານນໍ້າໂອ, ເມືອງທ່າແຂກ, ແຂວງຄໍາມ່ວນ ສະເໜີກ່ຽວກັບເສັ້ນທາງເລກທີ 12 ແລະເລກທີ 13 ຢູ່ໃຈກາງເມືອງ ທ່າແຂກ ແມ່ນເປ່ເພຫຼາຍ ໂດຍສະເພາະແມ່ນລະດູຝົນ. ສະນັ້ນ, ສະເໜີໃຫ້ສະພາປະຊາຊົນແຂວງຄໍາມ່ວນ ລົງຕິດຕາມ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງແກ້ໄຂດ້ວຍ.

➢ ຕອບ: ໄດ້ອະນຸມັດງົບປະມານສ້ອມແປງຈໍານວນໜຶ່ງຈາກກອງທຶນທາງ ນໍາໃຊ້ເຂົ້າໃນການສ້ອມແປງຕອນທາງດັ່ງກ່າວໃຫ້ສໍາເລັດກ່ອນລະດູຝົນ 2018 ນີ້.

## XI. ເຂດ 13 ແຂວງ ສະຫວັນນະເຂດ:

69. ພະນັກງານບໍານານບ້ານໂພນສະຫວ່າງ, ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ ສະເໜີບັນຫາເສັ້ນທາງຍັງບໍ່ໄດ້ຮັບການສ້ອມແປງ ແລະ ພັດທະນາຄື: ເສັ້ນທາງເມືອງອາດສະພັງທອງ-ເມືອງອາດສະພອນ, ເມືອງຈໍາພອນ-ເມືອງຊົນບູລີ ແລະເສັ້ນທາງ ເລກທີ 13 ໃຕ້-ເມືອງທ່າປາງທອງ ການສັນຈອນໄປມາຍັງລໍາບາກຫຼາຍ.

➢ ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ສະຫວັນນະເຂດ ໃຫ້ຊາບວ່າ:

1) <u>ເສັ້ນທາງເມືອງອາດສະພັງທອງ-ເມືອງອາດສະພອນ</u> (ແຍກທາງເລກ 9 - ມ.ອາດສະພອນ ) ແມ່ນທາງຫຼວງແຂວງ ມີຄວາມຍາວ 23,5 ກມ ເປັນເສັ້ນທາງດິນແດງ ກວມເອົາຂອບເຂດເມືອງອາດສະພັງທອງ 7,7 ກມ ເມືອງອາດສະພອນ 15,8 ກມ, ພື້ນທີ່ສ່ວນໃຫຍ່ເປັນເຂດທົ່ງພຽງ ແຕ່ລະປີແມ່ນໄດ້ຮັບຜົນກະທົບຈາກໄພທຳມະຊາດເປັນປະຈຳເຮັດໃຫ້ເສັ້ນທາງດັ່ງກ່າວເປ່ເພພັກ ໂດຍສະເພາະໃນລະດູຝົນ, ຜ່ານມາລັດຖະບານກໍ່ຄືກະຊວງ ໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງແຂວງ ເຫັນໄດ້ຄວາມຈຳເປັນ ຈຶ່ງພະຍາຍາມຈັດສັນງົບປະມານຂອງແຂວງ, ຂອງກະຊວງ ເພື່ອແກ້ໄຂສຸກເສີນ ບໍ່ໃຫ້ເສັ້ນທາງດັ່ງກ່າວຖືກຕັດຂາດ. ມາຮອດສະໄໝ ທີ VII (2011-2015) ທາງແຂວງກໍ່ໄດ້ເອົາເສັ້ນທາງດັ່ງກ່າວ ເຂົ້າເປັນໂຄງການບູລິມະສິດຂອງແຂວງ, ປີ 2012 ຈຶ່ງມອບໃຫ້ພະແນກ ຍທຂ ເປັນຜູ້ຈັດຕັ້ງປະຕິບັດໂຄງການ, ພະແນກ ຍທຂ ແຂວງ ໄດ້ເຊັນສັນຍາກໍ່ສ້າງໃຫ້ເປັນທາງ ປູຢາງ 2 ຊັ້ນ ລວມມີ 2 ສັນຍາ ກັບບໍລິສັດເມືອງວັງພັດທະນາກໍ່ສ້າງຂົວທາງຄື : (1) ສັນຍາ 1: ແຕ່ທາງເລກ 9 ກມ 0+00 ຫາ 15+00 ມູນຄ່າ 34,1 ຕື້ກີບ, ເລີ່ມປະຕິບັດໂຄງການແຕ່ເດືອນ 11 ປີ 2012 ຫາເດືອນ 05 ປີ 2015; (2) ສັນຍາ 2 : ແຕ່ ກມ 15+00 ຫາ ກມ 23+850 (ເທດສະບານເມືອງ) ມູນຄ່າ 22,7 ຕື້ກີບ, ແມ່ນກະຊວງ ຍທຂ ຮັບຜິດຊອບເປັນຜູ້ຂຶ້ນແຜນງົບປະມານ, ເລີ່ມປະຕິບັດໂຄງການແຕ່ເດືອນ 12 ປີ 2015 ຫາເດືອນ 6 ປີ 2018. ບໍລິສັດໄດ້ເລີ່ມລົງມືກໍ່ສ້າງແຕ່ປີ 2012 ເປັນຕົ້ນມາ ແຕ່ໂຄງການຫາກໍ່ໄດ້ບັນຈຸເຂົ້າແຜນ ສະພາຮັບຮອງ ໃນປີ 2017 ແຕ່ເນື່ອງຈາກວ່າ ບໍລິສັດຮັບເໜົາ ຕົກຢູ່ໃນສະພາບຂາດສະພາບຄ່ອງທາງດ້ານການເງິນໜັກໜ່ວງ ຈຶ່ງບໍ່ສາມາດ ສືບຕໍ່ດຳເນີນການກໍ່ສ້າງໄດ້ຈົນສຳເລັດປະຕິບັດໄດ້ພຽງແຕ່ສັນຍາ 1: 30,86 ເປີເຊັນ, ສັນຍາ 2 : 15,94 ເປີເຊັນ ຈຶ່ງຂໍຍົກເລີກສັນຍາບໍ່ສືບຕໍ່ກໍ່ສ້າງ, ນັບແຕ່ນັ້ນມາສະພາບເສັ້ນທາງ ກໍ່ເລີ່ມເປ່ເພຫຼາຍຂຶ້ນ ຍ້ອນບໍ່ໄດ້ສືບຕໍ່ກໍ່ສ້າງ. ຕໍ່ບັນຫາດັ່ງກ່າວ ພະແນກ ຍທຂ ກໍ່ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາຄືນບັນດາໜ້າວຽກຕ່າງໆ ແລະ ມູນຄ່າທີ່ບໍລິສັດປະຕິບັດຕົວຈິງ ເອກະພາບກັນແລ້ວ ແລະ ໄດ້ນຳສະເໜີຂໍທິດຊີ້ນຳຈາກຂັ້ນເທິງ ເພື່ອຂໍຍົກເລີກສັນຍາ ແລະ ຂໍສະເໜີເຈລະຈາກັບບໍລິສັດອື່ນເຂົ້າໄປດຳເນີນການກໍ່ສ້າງຕໍ່, ປະຈຸບັນພະແນກ ຍທຂ ກຳລັງດຳເນີນຂັ້ນຕອນການຈັດຊື້ຈັດຈ້າງ ແລະ ຈະໄດ້ສືບຕໍ່ຈັດຕັ້ງປະຕິບັດໃນໄວໆນີ້.

2) <u>ເສັ້ນທາງເມືອງຈຳພອນ-ເມືອງຊົນນະບູລີ</u>: ເສັ້ນທາງດັ່ງກ່າວເປັນເສັ້ນທາງຫຼວງຂອງແຂວງ ມີຄວາມຍາວ 26 ກມ, ນອນໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ປີ 2017 ຜ່ານມາ ພະແນກ ຍທຂ ແຂວງ ຈຶ່ງໄດ້ປະກອບເອກະສານບົດສະເໜີໂຄງການຄົບຊຸດ ເປັນໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ແຕ່ເທດສະບານເມືອງຈຳພອນ-ເມືອງຊົນນະບູລີ, ໂຄງການດັ່ງກ່າວ ກໍ່ໄດ້ຮັບການປະເມີນແລ້ວ ຈາກກະຊວງ ແຜນການແລະການລົງທຶນ ໄດ້ປະເພດ B ແຕ່ຍັງບໍ່ທັນຮັບຮອງເຂົ້າໃນແຜນ, ອີກດ້ານນຶ່ງ ແຂວງສະຫວັນນະເຂດ ກໍ່ໄດ້ເອົາເສັ້ນທາງ ແຕ່ທາງ 13 ໃຕ້ ຜ່ານເມືອງຈຳພອນ, ເມືອງຊົນນະບູລີ ໄປຫາທາງເລກ 9 ລວງຍາວທັງໝົດ 95 ກມ ມອບໃຫ້ບໍລິສັດບໍລິນໂກ້ເປັນຜູ້ສຳຫຼວດອອກແບບ ແລະປະເມີນລາຄາ ເພື່ອສະເໜີຂໍທຶນມາກໍ່ສ້າງ ມາຮອດປະຈຸບັນ ກະຊວງ ແຜນການ-ການລົງທຶນ ໄດ້ຮັບຮູ້ ແລະໄດ້ສະເໜີໃຫ້ກະຊວງ ຍທຂ ຄົ້ນຄວ້າຢັ້ງຢືນຄືນດ້ານເຕັກນິກ ແລະ ຫຼຸດໜ່ອຍລາຄາ ຈາກນັ້ນ ຈຶ່ງນຳສົ່ງໃຫ້ກະຊວງ ແຜນການ-ການລົງທຶນ ດຳເນີນການປະເມີນ ເພື່ອບັນຈຸໂຄງການດັ່ງກ່າວເຂົ້າແຜນ ແລະ ນຳສະເໜີລັດຖະບານເພື່ອອະນຸມັດທຶນກໍ່ສ້າງ.

3) <u>ເສັ້ນທາງ ແຕ່ແຍກທາງ 13 ໃຕ້ ບ້ານເຊບັ້ງນວນ-ເມືອງທ່າປາງທອງ</u>: ເສັ້ນທາງດັ່ງກ່າວ ເປັນເສັ້ນທາງຫຼວງຂອງແຂວງ, ມີຄວາມຍາວທັງໝົດ 33 ກິໂລແມັດ ແມ່ນນອນຢູ່ໃນໂຄງການກໍ່ສ້າງທາງ ເລກທີ 2.6313 ເລີ່ມແຕ່ ແຍກທາງ 13 ໃຕ້ ບ້ານເຊບັ້ງນວນ -ເມືອງທ່າປາງທອງ - ເມືອງຕຸ້ມລານ ແຂວງສາລະວັນ ມີຄວາມຍາວທັງໝົດ 88,2 ກິໂລແມັດ, ເຊັນສັນຍາຮັບເໝົາກໍ່ສ້າງ ໂດຍ ບໍລິສັດບໍລິນໂກ້ຈຳກັດ ແຫ່ງ ສປ ຈີນ ຄັ້ງວັນທີ 03 ພຶດສະພາ 2017 ໃນມູນຄ່າ 59,78 ລ້ານໂດລາສະຫະລັດ (ງົບປະມານກູ້ຢືມຈາກບໍລິສັດບໍລິນໂກ), ຮູບແບບສັນຍາ ສຳຫຼວດອອກແບບໂດຍຜູ້ຮັບເໝົາ ແລະກໍ່ສ້າງໄປພ້ອມກັນ (EPC) ໄລຍະເວລາກໍ່ສ້າງ 36 ເດືອນ, ບໍລິສັດໄດ້ເລີ່ມລົງມືປະຕິບັດວຽກ ແຕ່ວັນທີ 1 ຕຸລາ 2017 ເປັນຕົ້ນມາ, ຄາດໝາຍຈະສຳ

ເລັດ ວັນທີ 1 ຕຸລາ 2020 ໂຄງການດັ່ງກ່າວ ກະຊວງ ຍທຂ ເປັນຜູ້ຮັບຜິດຊອບ, ພະແນກ ຍທຂ ແຂວງ ແລະ ຫ້ອງການ ຍທຂ ເມືອງ ເຮັດໜ້າທີ່ເປັນຜູ້ປະສານງານໂຄງການ, ປະຈຸບັນເຫັນວ່າສະພາບເສັ້ນທາງມີຄວາມສະດວກຂຶ້ນຫຼາຍກວ່າເກົ່າ ແຕ່ກໍ່ມີບາງຊ່ວງອາດຈະບໍ່ສະດວກ ເພາະຢູ່ໃນໄລຍະປະຕິບັດວຽກອະນາໄມ 2 ຟາກທາງເພື່ອຂະຫຍາຍເສັ້ນທາງ ແລະ ກໍ່ສ້າງຊັ້ນຍົກລະດັບ ແຕ່ເຖິງຢ່າງໃດກໍ່ຕາມ ທາງຄະນະຮັບຜິດຊອບໂຄງການ ຈະໄດ້ເອົາໃຈໃສ່ ອຳນວຍຄວາມສະດວກ ໃຫ້ພໍ່ແມ່ປະຊາຊົນ, ຜູ້ໃຊ້ລົດໃຊ້ຖະໜົນໃນເສັ້ນທາງດັ່ງກ່າວ ໃຫ້ໄດ້ຮັບຄວາມສະດວກທີ່ສຸດ ແລະ ປອດໄພໃນສັນຈອນໄປມາ.

70. <u>ປະຊາຊົນບ້ານເຊໂນ, ເມືອງອຸທຸມພອນ, ແຂວງສະຫວັນນະເຂດ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ກວດກາເບິ່ງຄືນບໍລິສັດເລກ 8 ກໍ່ສ້າງຂົວທາງ ທີ່ຮັບເໝົາກໍ່ສ້າງເສັ້ນທາງແຕ່ເຊໂນ-ສະຫວັນນະເຂດ ບໍລິສັດ ດັ່ງກ່າວບໍ່ຈ່າຍເງິນຄ່າແຮງງານໃຫ້ກຳມະກອນຮັບໃຊ້ ໃນໄລຍະ 8 ເດືອນແລ້ວ, ຈຶ່ງສະເໜີຂໍໃຫ້ພາກສ່ວນກ່ຽວ ຂ້ອງຊ່ວຍແກ້ໄຂຕໍ່ກັບບັນຫານີ້ດ້ວຍ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ສະຫວັນນະເຂດ ໃຫ້ຊາບວ່າ: ໂຄງການຟື້ນຟູທາງຫຼວງແຫ່ງຊາດ ເລກ 9 ທີ່ລັດວິສາຫະກິດກໍ່ສ້າງທາງ ເລກ 8 ຮັບເໝົາ ກໍ່ສ້າງ ແມ່ນນອນຢູ່ໃນສັນຍາ 1 ຂອງໂຄງການ, ຊຶ່ງມີຄວາມຍາວທັງໝົດ 79,9 ກມ, ແບ່ງເປັນ 3 ຕອນທາງ, ຊ່ວງຕອນທາງທີ 1 ແຕ່ ເທດສະບານເມືອງໄກສອນພົມວິຫານ - ບ້ານໜອງບົວທອງ ເມືອງອຸທຸມພອນ ມີຄວາມຍາວ 45,7 ກມ, ມີມູນຄ່າການກໍ່ສ້າງທັງໝົດ: 288,13 ຕື້ກີບ, ໄລຍະກໍ່ສ້າງທັງໝົດ 36 ເດືອນ, ໂຄງການດັ່ງກ່າວ ແມ່ນກະຊວງ ຍທຂ ເປັນຫົວໜ້າໂຄງການ, ພະແນກ ຍທຂ ແຂວງ ແລະ ຫ້ອງການ ຍທຂ ເມືອງ ເຮັດໜ້າທີ່ເປັນຜູ້ປະສານງານ, ເລີ່ມຈັດຕັ້ງປະຕິບັດໂຄງການປີ 2014 ເປັນຕົ້ນມາ, ມາຮອດປະຈຸບັນຄວາມຄືບໜ້າຂອງໂຄງການໄດ້ 67,17 ເປີເຊັນ, ໂຄງການແມ່ນໄດ້ຕັ້ງໜ້າຈັດຕັ້ງປະຕິບັດບັນດາໜ້າວຽກຕ່າງໆ ໂດຍໄດ້ປະກອບເຄື່ອງກົນຈັກ, ແຮງງານກຳມະກອນ ຈຳນວນຫຼາຍມາຈາກຫຼາຍບ່ອນ, ນັບແຕ່ຜູ້ຊຳນານງານອາວຸໂສ, ປະລິນຍາ, ວິຊາການ, ນັກຂັບລົດ ແລະ ແຮງງານຂັ້ນຕໍ່າ. ຕໍ່ກັບການສະເໜີຂອງປະຊາຊົນວ່າ ບໍລິສັດບໍ່ຈ່າຍເງິນແຮງງານໃຫ້ກຳມະກອນ 8 ເດືອນ ນັ້ນ ແມ່ນບໍ່ໄດ້ຈ່າຍແທ້ ແຕ່ບໍ່ເຖິງ 8 ເດືອນ, ບໍລິສັດບໍ່ໄດ້ຈ່າຍຕົວຈິງພຽງແຕ່ 6 ເດືອນ ນັບແຕ່ເດືອນ 9/2017 ຫາ ເດືອນ 2/2018. ເຫດຜົນທີ່ບໍ່ທັນໄດ້ຈ່າຍເງິນນັ້ນ ຍ້ອນບໍລິສັດຂາດສະພາບຄ່ອງທາງດ້ານການເງິນ: ເຮັດວຽກແລ້ວຕາມສັນຍາ ແຕ່ບໍ່ສາມາດເບີກຈ່າຍເງິນໃຫ້ໄດ້ຕາມກຳນົດໄວ້ໃນສັນຍາ ແລະ ມີຄວາມຈຳເປັນນຳເມັດເງິນຈຳນວນໜຶ່ງມາເປັນທຶນ ຊື້ນ້ຳມັນ, ຊື້ຢາງ, ວັດສະດຸ ແລະ ເຄື່ອງອາໄຫຼ່ ເພື່ອອັດສີດເຂົ້າໃນການຈັດຕັ້ງປະຕິບັດວຽກກໍ່ສ້າງທີ່ຍັງຄ້າງໃຫ້ສຳເລັດຕາມແຜນການ. ຫຼັງຈາກວຽກໄດ້ສືບຕໍ່ກໍ່ສ້າງຮອດເດືອນ ເມສາ 2018 ກ່ອນພັກບຸນປີໃໝ່ລາວ ພສ 2561 ນີ້ ບໍລິສັດກໍ່ຈະຈ່າຍເງິນເດືອນຄືນໃຫ້ກຳມະກອນ 5 ເດືອນຂຶ້ນໄປ, ສ່ວນອີກ 1 ເດືອນ ທີ່ຍັງຄ້າງຈະສືບຕໍ່ຫາວິທີແກ້ໄຂຕໍ່ໄປ.

ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ກໍ່ໄດ້ປຶກສາຫາລືເປັນເອກະພາບພາຍໃນຄະນະນຳກະຊວງ ແລະ ໄດ້ນຳສະເໜີຫາກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນເພື່ອຊ່ວຍພິຈາລະນາຈັດສັນງົບປະມານ ແລະ ຊຳລະໜີ້ສິນຂອງລັດທີ່ບໍລິສັດປະຕິບັດວຽກງານສຳເລັດແລ້ວ ເພື່ອຊ່ວຍແກ້ໄຂສະພາບຄ່ອງດ້ານການເງິນຂອງລັດວິສາຫະກິດກໍ່ສ້າງຂົວທາງເລກ 8.

71. <u>ພະນັກງານບຳນານບ້ານໂພນສະຫວ່າງ, ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ ສະເໜີບັນຫາເສັ້ນທາງຍັງບໍ່ໄດ້ຮັບການສ້ອມແປງ ແລະພັດທະນາຄື: ເສັ້ນທາງເມືອງ ອາດສະພັງທອງ-ເມືອງ ອາດສະພອນ, ເມືອງ ຈຳພອນ-ເມືອງ ຊົນບູລີ ແລະເສັ້ນທາງເລກທີ 13 ໃຕ້-ເມືອງທ່າປາງທອງ ການສັນຈອນໄປມາ ຍັງລຳບາກຫຼາຍ.</u>

➢ <u>ຕອບ</u>: ຄືກັບຂໍ້ 69.

## XII. ເຂດ 14 ແຂວງ ສາລະວັນ:

72. ປະຊາຊົນຢູ່ບ້ານດົງໜອງ, ເມືອງສາລະວັນ, ແຂວງສາລະວັນ ສະເໜີໃຫ້ພະແນກ ຍທຂ ແຂວງສາລະວັນ ແລະ ແຂວງ ສະຫວັນນະເຂດ ມີການສ້ອມແປງເສັ້ນທາງ ແຕ່ ສະຫວັນນາເຂດ ຫາ ນາປົ່ງ ເພາະວ່າເສັ້ນທາງດັ່ງກ່າວ ເປ່ເພຫຼາຍເຮັດໃຫ້ການສັນຈອນມີຄວາມຫຍຸ້ງຍາກ.

➢ ຕອບ: 1). ການສ້ອມແປງເສັ້ນທາງ 13 ໃຕ້ ແຕ່ສະຫວັນນາເຂດ ຫານາປົ່ງ: ເສັ້ນທາງດັ່ງກ່າວພາຍຫຼັງກໍ່ສ້າງສຳເລັດ ແມ່ນໄດ້ເປີດການນຳໃຊ້ມາແຕ່ປີ 2000. ແຕ່ເນື່ອງຈາກວ່າ: ຜ່ານມາງົບປະມານທີ່ນຳໃຊ້ເຂົ້າໃນການສ້ອມແປງແຕ່ລະປີມີຈຳນວນຈຳກັດ ບໍ່ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງຮອບວຽນການສ້ອມແປງເປັນກຳນົດ ແລະ ເປັນປົກກະຕິໄດ້ ຈຶ່ງເຮັດໃຫ້ເສັ້ນທາງດັ່ງກ່າວມີການເປ່ເພຕາມອາຍຸການນຳໃຊ້. ໃນສົກງົບປະມານປີ 2018 ນີ້ ໄດ້ອະນຸມັດງົບປະມານສ້ອມແປງຈຳນວນໜຶ່ງຈາກກອງທຶນທາງ ເພື່ອນຳໃຊ້ເຂົ້າໃນການສ້ອມແປງຕອນທາງດັ່ງກ່າວ, ຊຶ່ງບໍລິສັດຜູ້ຮັບເໝົາໄດ້ດຳເນີນການສ້ອມແປງມາແຕ່ເດືອນ ມັງກອນ ປີ 2018 ມາຮອດປະຈຸບັນມີຄວາມຄືບໜ້າໃນການປະຕິບັດວຽກໄດ້ 80% ສາມາດອຳນວຍຄວາມສະດວກໃຫ້ແກ່ການສັນຈອນໄປ-ມາ ສະດວກສະບາຍດີ ແລະ ຄາດວ່າການສ້ອມແປງຕອນທາງດັ່ງກ່າວຈະໃຫ້ສຳເລັດ 100% ພາຍໃນເດືອນ ພຶດສະພາ ປີ 2018 ນີ້;

2). ຄຳສະເໜີ ຂອງປະຊາຊົນ ບ້ານດົງໜ້ອງ ເມືອງສາລະວັນ ກ່ຽວກັບການສ້ອມແປງທາງເຂົ້າບ້ານ: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ສາລະວັນ ໃຫ້ຊາບວ່າ: ເສັ້ນທາງດັ່ງກ່າວ ແມ່ນເປັນເສັ້ນທາງດິນທຳມະຊາດ ທີ່ມີຈຸດເລີ້ມຕົ້ນແຕ່ ບ້ານດົງໜ້ອງ ຫາ ຄຸ້ມສາງລະວີ (ຈັດເປັນຄຸ້ມໜຶ່ງ ທີ່ຂຶ້ນກັບບ້ານດົງໜ້ອງ ເຊິ່ງມີຈຳນວນຄອບຄົວທັງໝົດ 31 ຫຼັງ) ໄລຍະທາງ ປະມານ 4 ກມ, ບັນຫາດັ່ງກ່າວນີ້ ໃນໄລຍະຜ່ານມາ ອຳນາດການປົກຄອງຂັ້ນບ້ານ ກໍ່ ຍັງບໍ່ເຄີຍສະເໜີມາຍັງພາກສ່ວນອີງການຈັດຕັ້ງທຸກຂັ້ນ ກໍ່ຄື ຂັ້ນເມືອງ ແລະ ຂັ້ນແຂວງ ຈຶ່ງເຮັດໃຫ້ເສັ້ນທາງດັ່ງກ່າວບໍ່ໄດ້ຮັບການແກ້ໄຂ. ສະນັ້ນ ພະແນກ ຍທຂ ແຂວງ ໃນນາມເປັນຜູ້ຮັບຜິດຊອບຊີ້ເຂດວຽກງານໂຍທາທິການ ແລະ ຂົນສົ່ງຂັ້ນແຂວງ ຈະລົງປະສານສົມທົບຮ່ວມກັບ ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະຂັ້ນບ້ານ ເພື່ອເກັບກຳຂໍ້ມູນ, ສຳຫຼວດ- ອອກແບບ ແລະ ຄິດໄລ່ມູນຄ່າເສັ້ນທາງດັ່ງກ່າວ ໃຫ້ສຳເລັດໂດຍໄວ, ຈາກນັ້ນ ຈຶ່ງລາຍງານນຳຂັ້ນແຂວງຮັບຊາບ ແລະ ນຳສະເໜີສະພາປະຊຸມແຂວງ ເຂດເລືອກຕັ້ງທີ 14 ຄົ້ນຄວ້າພິຈາລະນາເຂົ້າແຜນລົງທຶນຂອງລັດ ປະຈຳປີ 2019.

73. ປະຊາຊົນຢູ່ບ້ານບົວລະພາ, ເມືອງຄົງເຊໂດນ, ແຂວງສາລະວັນ ສະເໜີໃຫ້ພະແນກ ຍທຂ ແຂວງສາລະວັນ ກວດກາຄືນການກໍ່ສ້າງຂົວຂ້າມນ້ຳໂດນ ຕາມແຜນແມ່ນຈະໃຫ້ສຳເລັດໃນເດືອນ ມັງກອນ ປີ 2017, ແຕ່ມາຮອດປະຈຸບັນການກໍ່ສ້າງຍັງບໍ່ມີຄວາມຄືບໜ້າເລີຍ.

➢ ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ສາລະວັນ ໃຫ້ຊາບວ່າ:

1) ສະພາບລວມ: ຂົວເບຕົງອັດແຮງຂ້າມນ້ຳເຊໂດນ ເທດສະບານເມືອງ ແລະແຂວງສາລະວັນ ມີລວງຍາວທັງໝົດ 163,16 ມ, ຄວາມກວ້າງ 10 ມ, ມີເສົາຈຳນວນ 7 ຕົ້ນ (ເສົາກາງນ້ຳ 5 ຕົ້ນ), ມີລະບົບກັນເຈື່ອນບໍລິເວນເສົາຫົວຂົວສອງເບື້ອງ ແລະລ້ອກຕີນເສົາກາງນ້ຳດ້ວຍຫີນພູ, ໃນນີ້ມູນຄ່າສັນຍາເທົ່າກັບ 37,92 ຕື້ກີບ, ສະພາແຫ່ງຊາດຮັບຮອງໃນສົກປີ 2012-2103.

2) ການປະຕິບັດໂຄງການ: ໄລຍທີ 1 ມີໄລຍະເວລາການກໍ່ສ້າງ 24 ເດືອນ (8/3/2013-8/3/2015) ເຊິ່ງແມ່ນບໍລິສັດດາວເຮືອງສິ່ງກໍ່ສ້າງຂົວ-ທາງຈຳກັດເປັນຜູ້ຮັບເໝົາກໍ່ສ້າງ. ຜ່ານການຈັດຕັ້ງປະຕິບັດໂຄງການ ແຕ່ 15/3/2013 ຫາ 30/6/2015 ເຫັນວ່າຄວາມຄືບໜ້າຂອງໂຄງການທັງໝົດເທົ່າກັບ 4.14 ເປີເຊັນ, ຄິດເປັນ

ມູນຄ່າ 1,57 ຕື້ກີບ. ຈາກນັ້ນ ເປັນຕົ້ນມານັບແຕ່ວັນທີ 30/6/2015-8/3/2015 ບໍລິສັດດາວເຮືອງສິ່ງ ກໍ່ໄດ້ຢຸດວຽກ ແລະ ໝົດກຳນົດເວລາຂອງສັນຍາ ຍ້ອນເງື່ອນໄຂທາງດ້ານການເງິນ ແລະ ປັດໃຈອື່ນໆ ທີ່ເຫັນວ່າບໍ່ສາມາດຈະສືບຕໍ່ໂຄງການໄດ້ ຈຶ່ງໄດ້ມອບສິດໃຫ້ບໍລິສັດສຸພາພອນກໍ່ສ້າງສຳຫຼວດອອກແບບເຄຫາສະຖານ ແລະ ຂົວທາງ ຈຳກັດຜູ້ດຽວ ເຂົ້າມາສືບຕໍ່ຈັດຕັ້ງປະຕິບັດໂຄງການແທນ; ໄລຍະທີ 2 ພາຍຫຼັງໄດ້ຮັບການອະນຸມັດຈາກທ່ານເຈົ້າແຂວງແຂວງສາລະວັນ ກໍ່ໄດ້ເຊັນສັນຍາກັບບໍລິສັດສຸພາພອນກໍ່ສ້າງ ໃນຄັ້ງວັນທີ 31/3/2016 ກຳນົດໄລຍະກໍ່ສ້າງ 18 ເດືອນ (4/4/2016-4/10/2017 ), ການຈັດຕັ້ງປະຕິບັດໂຄງການນັບແຕ່ມື້ເຊັນສັນຍາ ຫາ ວັນທີໝົດສັນຍາ ມີຄວາມຄືບໜ້າໂຄງການປະຕິບັດໄດ້ເທົ່າກັບ 72,98 ເປີເຊັນ ເທົ່າກັບ 26.58 ຕື້ກີບ (ເຫັນວ່າສຳເລັດຕາມສັນຍາ). ໄລຍະທີ 3 ບໍລິສັດບໍລິສັດສຸພາພອນກໍ່ສ້າງ ກໍ່ໄດ້ສະເໜີຂໍຕໍ່ສັນຍາເພີ່ມຕື່ມ 14 ເດືອນ ( 4/10/2017-4/12/2018 ) ດ້ວຍເຫດຜົນໃນການລົງທຶນກ່ອນ ແລະການເບີກຈ່າຍຂອງພາກລັດ ບໍ່ສາມາດເບີກຈ່າຍໄດ້ຕາມເງື່ອນໄຂຂອງສັນຍາ. ດັ່ງນັ້ນ ເຈົ້າຂອງໂຄງການ ຈຶ່ງໄດ້ນຳສະເໜີເຖິງພະແນກແຜນການ ແລະການລົງທຶນ ແຂວງສາລະວັນ ເພື່ອຂໍຕໍ່ສັນຍາເພີ່ມຕື່ມຕາມການສະເໜີຂອງບໍລິສັດ ແລະກໍ່ໄດ້ເຫັນດີເປັນເອກະພາບກັນ ພ້ອມລົງນາມເຊັນໃໝ່ໃນຄັ້ງວັນທີ 7/12/2017.

ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ກົມຂົວທາງລົງສົມທົບກັບພະແນກ ຍທຂ ແຂວງສາລະວັນ ຕິດຕາມກວດກາ ແລະ ຄົ້ນຄວ້າວິທີການ ເພື່ອຈັດຕັ້ງປະຕິບັດໂຄງການດັ່ງກ່າວຕາມສັນຍາ, ຖືກຕ້ອງຕາມມາດຕະຖານເຕັກນິກ, ຮັບປະກັນຄຸນນະພາບ ແລະສຳເລັດຕາມແຜນການ.

74. <u>ປະຊາຊົນບ້ານນາຊົງໃຕ້, ເມືອງສະມ້ວຍ, ແຂວງສາລະວັນ ສະເໜີໃຫ້ສະພາປະຊາຊົນ ແຂວງສາລະວັນ ພິຈາລະນາ ແລະ ຄົ້ນຄວ້າ ກໍ່ສ້າງເສັ້ນທາງ ແຕ່ບ້ານ ຊົງໃຕ້ ໄປຫາບ້ານຊົງສົມບູນ ຈຳນວນ 12 Km ໃຫ້ປະຊາຊົນໄດ້ທຽວໄປມາມີຄວາມສະດວກເພາະດຽວນີ້ມີແຕ່ທາງນ້ອຍທາງໃຫຍ່ບໍ່ມີ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງ ສາລະວັນ ໃຫ້ຊາບວ່າ: ພະແນກ ຍທຂ ແຂວງຈະລົງປະສານສົມທົບຮ່ວມກັບຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ຂັ້ນບ້ານ ເພື່ອເກັບກຳຂໍ້ມູນ, ສຳຫຼວດ-ອອກແບບ ແລະຄິດໄລ່ມູນຄ່າເສັ້ນທາງດັ່ງກ່າວໂດຍໄວ, ຈາກນັ້ນ ຈຶ່ງລາຍງານການນຳຂັ້ນແຂວງຮັບຊາບ ແລະນຳສະເໜີສະພາປະຊາຊົນແຂວງ ເຂດເລືອກຕັ້ງທີ 14 ແລະ ສະພາແຫ່ງຊາດ ຄົ້ນຄວ້າພິຈາລະນາເຂົ້າແຜນລົງທຶນຂອງລັດປະຈຳປີ 2019. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ແຂວງສາລະວັນ ສືບຕໍ່ປະສານສົມທົບກັບ ຫ້ອງການ ຍທຂ ເມືອງ ສະມ້ວຍ ເພື່ອສືບຕໍ່ເກັບກຳຂໍ້ມູນ, ສຳຫຼວດ-ອອກແບບ ແລະ ຄິດໄລ່ເສັ້ນທາງດັ່ງກ່າວໂດຍໄວ, ແລ້ວສະເໜີການນຳຂັ້ນແຂວງ ພິຈາລະນາແກ້ໄຂຕໍ່ໄປ.

## XIII. <u>ເຂດ 15 ແຂວງ ຈຳປາສັກ:</u>

75. <u>ປະຊາຊົນ ບ້ານໜອງຫ້ອຍ, ເມືອງຊະນະສົມບູນ, ແຂວງຈຳປາສັກ. ສະເໜີໃຫ້ສະພາປະຊາຊົນ ແຂວງຈຳປາສັກ ຕິດຕາມກວດກາຊ່ວຍກ່ຽວກັບບັນຫາຜົນກະທົບໃນການສ້າງເສັ້ນທາງໄປເອົາຫີນ ແລະຊາຍ ຂອງ ບໍລິສັດດາວເຮືອງ ທີ່ບ້ານໜອງຫ້ອຍ, ເມືອງ ຊະນະສົມບູນ, ແຂວງຈຳປາສັກ ຊຶ່ງມີຜົນກະທົບຕໍ່ດິນນາ ຂອງແມ່ຕູ້ຄຳເພີຍ, ລາຍລະ ອຽດແມ່ຕູ້ຄຳເພີຍໄດ້ຂຽນໃບສະເໜີ ສະບັບເລກທີ 39 ລົງວັນທີ 8/6/2017 ໄປຫາ ສະພາປະຊາຊົນ ແຂວງຈຳປາສັກ ແລ້ວ.</u>

➢ <u>ຕອບ:</u> ຫ້ອງການກະຊວງ ຍທຂ ໄດ້ມີ ແຈ້ງການເປັນລາຍລັກອັກສອນສະບັບເລກທີ 5835/ຫກ.ສລ, ລົງວັນທີ 19/3/2018 ເພື່ອໃຫ້ພະແນກ ຍທຂ ແຂວງ ຈຳປາສັກ ສັງລວມຂໍ້ມູນຕອບຄຳຖາມດັ່ງກ່າວນີ້ (ປັດຈຸບັນຍັງບໍ່ມີຄຳຕອບຈາກພະແນກ ຍທຂ ແຂວງຈຳປາສັກ).

76. <u>ປະຊາຊົນບ້ານເມືອງເກົ່າ, ເມືອງໂພນທອງ, ແຂວງຈຳປາສັກ ສະເໜີບັນຫາການເກັບຄ່າຜ່ານທາງເຂດ ເມືອງປາກເຊ ຫາວັງເຕົ່າ ແລະເຂດເມືອງປາກເຊ ຫາເມືອງຈຳປາສັກ, ປະຈຸບັນນີ້ແມ່ນຢູ່ໃນໄລຍະສຳປະທານ ຂອງບໍລິສັດດວງດີກໍ່ສ້າງຂົວທາງ ແຕ່ເກັບຄ່າຜ່ານທາງແພງເກີນຂອບເຂດ ແລະມີຜົນກະທົບຕໍ່ປະຊາຊົນທີ່ ສັນຈອນໄປມາເຂດໃກ້ຄຽງ.</u>

➢ <u>ຕອບ:</u> ໃນວັນທີ 9/2/2018 ທີ່ແຂວງຈຳປາສັກ, ໄດ້ມີການຈັດກອງປະຊຸມເພື່ອຄົ້ນຄວ້າກ່ຽວກັບການເກັບເງິນຄ່າຜ່ານທາງໃນຮູບແບບ BOT ເສັ້ນທາງເລກທີ 16 (ແຕ່ຂົວປາກເຊ-ວັງເຕົ່າ) ແລະເສັ້ນທາງເລກທີ 16 (ແຕ່ສາມແຍກສາລາຂຽວຫຼັກ 9 ຫາທາງແຍກເລກ 16A) ແຂວງຈຳປາສັກ; ໂດຍການເປັນປະທານຮ່ວມຂອງທ່ານລັດຖະມົນຕີ ກະຊວງແຜນການການລົງທຶນ, ລັດຖະມົນຕີ ກະຊວງ ຍທຂ, ເຈົ້າແຂວງໆຈຳປາສັກ, ຜູ້ຕາງໜ້າຈາກກະຊວງການເງິນ ພ້ອມດ້ວຍບັນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ. ຜ່ານການຄົ້ນຄວ້າ ປຶກສາຫາລື ແລະປະກອບຄຳເຫັນຢ່າງກົງໄປກົງມາ ກອງປະຊຸມໄດ້ເປັນເອກະພາບກັນຮັບຮູ້ວ່າ: ການລົງທຶນໃນຮູບແບບ BOT ໂດຍການເກັບຄ່າຜ່ານທາງຕາມທາງຢູ່ແຂວງຈຳປາສັກ ໄດ້ເຮັດໃຫ້ເກີດມີຫາງສຽງຈົ່ມວ່າຈາກສັງຄົມຢ່າງຫລວງຫລາຍ. ສະນັ້ນ, ກອງປະຊຸມຈຶ່ງໄດ້ເປັນເອກະພາບພ້ອມກັນ ຊອກວິທີແກ້ໄຂການເກັບເງິນແບບ BOT ເສັ້ນທາງດັ່ງກ່າວ ໂດຍສະເໜີວິທີແກ້ໄຂເປັນ 3 ທາງເລືອກ ແລະ ກອງປະຊຸມເຫັນດີນຳສະເໜີລັດຖະບານພິລະນາ ທາງເລືອກທີ່ 3: ສະເໜີປ່ຽນການລົງທຶນແບບ BOT ໃຫ້ໄປເປັນການລົງທຶນຊຳລະດ້ວຍງົບປະມານຂອງລັດ ເລີ່ມແຕ່ສົກງົບປະມານປີ 2019 ເປັນຕົ້ນໄປ, ໂດຍມີໄລຍະຊຳລະມູນຄ່າໂຄງການຕາມກົດໝາຍ ການລົງທຶນຂອງລັດບໍ່ເກີນ 9 ປີ, ໃນນີ້ ເພື່ອບໍ່ໃຫ້ລັດນຳໃຊ້ງົບປະມານຫລວງຫລາຍມາຊຳລະຄ່າການລົງທຶນ, ສະເໜີມອບໃຫ້ແຂວງຈຳປາສັກເກັບຄ່າຜ່ານທາງຢູ່ຈຸດດຽວທີ່ເໝາະສົມ,ໃນລາຄາເກັບຄ່າຜ່ານທາງທີ່ສົມເຫດສົມຜົນ ຄາດຄະເນເບື້ອງຕົ້ນ ສະເໜີກິໂລແມັດໜຶ່ງປະມານ 200 ກີບ (ຕາມບົດລາຍງານຕໍ່ທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 220/ຍທຂ, ລົງວັນທີ 2/3/2018). ພາຍຫລັງລັດຖະບານມີຄຳເຫັນຊີ້ນຳແລ້ວ ຈຶ່ງສະເໜີແຕ່ງຕັ້ງຄະນະກຳມະການ ເພື່ອກວດກາຄິດໄລ່ລາຄາຫົວໜ່ວຍມູນຄ່າໂຄງການ, ກວດກາມາດຕະຖານເຕັກນິກ ແລະບັນດາໜ້າວຽກກໍ່ສ້າງຄົບໝົດ ເພື່ອໃຫ້ຖືກກັບຄວາມເປັນຈິງສົມເຫດສົມຜົນ.

77. <u>ປະຊາຊົນຢູ່ບ້ານແກ້ວສຳພັນ, ເມືອງປາກເຊ, ແຂວງຈຳປາສັກ ສະເໜີຕິດຕັ້ງກົງເຕີນ້ຳປະປາເຂດບ້ານ ດັ່ງກ່າວບໍ່ຖືກຕ້ອງຕາມເຕັກນິກເຮັດໃຫ້ນ້ຳຮົ່ວໄຫຼ ແຕ່ລະເດືອນປະຊາຊົນຜູ້ຊົມໃຊ້ນ້ຳປະປາແມ່ນ ໄດ້ເສຍຄ່ານ້ຳປະປາແພງ.</u>

➢ <u>ຕອບ:</u> ຫ້ອງການກະຊວງ ຍທຂ ໄດ້ມີ ແຈ້ງການເປັນລາຍລັກອັກສອນສະບັບເລກທີ 05835/ຫກ.ສລ, ລົງວັນທີ 19/3/2018 ເພື່ອໃຫ້ພະແນກ ຍທຂ ແຂວງ ຈຳປາສັກ ສັງລວມຂໍ້ມູນຕອບຄຳຖາມດັ່ງກ່າວນີ້ (ປັດຈຸບັນຍັງບໍ່ມີຄຳຕອບຈາກພະແນກ ຍທຂ ແຂວງຈຳປາສັກ).

78. <u>ປະຊາຊົນຢູ່ບ້ານຂີ້ນາກ, ເມືອງໂຂງ, ແຂວງຈຳປາສັກ ສະເໜີບັນຫາການເສຍຄ່າທາງເຫັນວ່າແພງຫຼາຍ, ຕໍ່ກັບບັນຫາດັ່ງກ່າວທາງສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວບໍ?ຈຶ່ງສະເໜີຄົ້ນຄວ້າພິຈາລະນາຄືນ.</u>

➢ <u>ຕອບ:</u> ບັນຫາດັ່ງກ່າວ ແມ່ນຄວາມຮັບຜິດຊອບຂອງກະຊວງການເງິນ.

XIV. <u>ເຂດ 18 ແຂວງ ໄຊສົມບູນ:</u>

79. <u>ປະທານແນວໂຮມບ້ານ ໄຊຈະເລີນ, ເມືອງທ່າໂທມ, ແຂວງໄຊສົມບູນ ບັນຫາການສ້າງຖະໜົນຫົນທາງແມ່ນທຽວໄດ້ສະເພາະແຕ່ຍາມແລ້ງ, ສ່ວນຍາມຝົນແມ່ນທຽວບໍ່ໄດ້. ສະເໜີໃຫ້ພາກສ່ວນກ່ຽວຂ້ອງກວດກາ ແລະ ແກ້ໄຂ.</u>

➢ <u>ຕອບ</u>: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງ ໄຊສົມບູນ ໃຫ້ຊາບວ່າ: ພະແນກ ຍທຂ ແຂວງ ໄຊສົມບູນ ໄດ້ປະສານກັບຫ້ອງການ ຍທຂ ເມືອງ ທ່າໂທມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າຫາວິທີແກ້ໄຂ ແລະ ເຫັນດີເອກະພາບກັນໃນການຕອບຄຳຖາມດັ່ງນີ້: ສຳລັບເສັ້ນທາງແຕ່ ເທດສະບານ ເມືອງທ່າໂທມໄປຫາກຸ່ມບ້ານ ຍາມຈະເລີນໄຊ ແມ່ນ ປູແຮ່, ກໍ່ສ້າງແຕ່ປີ 2011 ເຊິ່ງສາມາດທຽວໄດ້ 2 ລະດູແລ້ວ ແຕ່ຊ່ວງທາງແຕ່ຍາມຈະເລີນ ຫາ ບ້ານໄຊຈະເລີນນັ້ນ ມີຫ້ວຍນ້ຳໃຫຍ່ຂັ້ນໄວ້ ແລະ ກໍ່ນອນຢູ່ໃນແຜນການກໍ່ສ້າງທາງໃນປີທີ່ຜ່ານມາ. ສະນັ້ນ, ເພື່ອເຮັດໃຫ້ການໄປມາຫາກັນສະດວກ ແລະ ທຽວໄດ້ 2 ລະດູ ແມ່ນຈະໄດ້ນຳສະເໜີຂັ້ນເທິງພິຈາລະນາງົບປະມານມາສ້າງທໍ່ລ່ຽມ ຂະໜາດ 3x3x3 ແມັດ. ຕໍ່ກັບບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ແຂວງໄຊສົມບູນ ປະສານສົມທົບກັບ ຫ້ອງການ ຍທຂ ເມືອງທ່າໂທມ ເພື່ອສືບຕໍ່ຄົ້ນຄວ້າວິທີແກ້ໄຂຕໍ່ໄປ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ລັດຖະມົນຕີ

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ດຣ ບຸນຈັນ ສິນທະວົງ